<u>ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີ ພາສາລາວ</u>

**Copyright © 2007 by BAPTISTWAY PRESS®.**
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປຶ້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ຂ004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-3
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 4-7
Bounchanh Vongsurith, Crievewood Baptist Church, Nashville, Tennessee
Editor for Lessons 4-7
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 8-10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 8-10
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 11-13 and Christmas Lesson
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11-13 and Christmas Lesson
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ຈົ່ງໃຫ້ຂ້າພະເຈົ້າແນະນຳພຣະເຢຊູເຖີດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 1: 1-20

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 1:1-20

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຜູ້ທີ່ເຮົາເອີ້ນວ່າ: ພຣະຄຣິດ, ພຣະບຸດຂອງພຣະເຈົ້າໄດ້ສະເດັດມາເພື່ອປະກາດຂ່າວປະເສີດ ແລະຮຽກເອີ້ນເອົາຄົນທັງຫລາຍໃຫ້ຕິດຕາມພຣະອົງ.

**ຄຳຖາມເພື່ອສຳຣວດ:** ຖ້າພວກເຮົາຫາກບໍ່ຮູ້ຈັກກັບພຣະອົງມາກ່ອນ, ບົດຮຽນນີ້ຈະບອກຫຍັງໃຫ້ກັບທ່ານ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະບອກໃຫ້ເຂົ້າໃຈວ່າ ພຣະຄັມພີຕອນນີ້ກ່າວເຖິງພຣະເຢຊູ ແລະການຮັບຜິດຊອບທີ່ພຣະອົງຄວນກະທຳ.

**ຄົ້ນຄ້ວາ ພ້ອມກັບການປະຕິບັດ**

- ຢັ້ງຢືນວ່າ ພຣະຄັມພີມີອຳນາດໃນການນຳພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກໆຄົນ
- ເສີມຂຍາຍການເຕີບໃຫ່ຍຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ເຕົ້າໂຮມຄອບຄົວທີ່ເຊື່ອ ເພື່ອຈະກາຍມາເປັນຜູ້ຮັບໃຊ້
- ເຊື່ອຟັງແລະຮັບໃຊ້ພຣະເຢຊູດ້ວຍຮ່າງກາຍ, ຈິດວິນຍານ, ແລະຄວາມຄິດຕ່າງໆ

## ຄຳນຳ

ທ່ານເຄີຍໄດ້ເຂົ້າໄປໃນໂຮງໜັງຫລືບໍ່? ເວລາທ່ານເບິ່ງໄປປະມານສິບນາທີ ທ່ານອາດຈະຄິດວ່າເສັຍເງິນໄປລ້າໆ. ທ່ານເບິ່ງຕໍ່ໄປເຖິງຊາວນາທີບໍ່ມີຫຍັງເກີດຂຶ້ນ ທ່ານກໍຄົງຈະຄິດວ່າໜັງນີ້ບໍ່ໄດ້ເລື້ອງຫລືວ່າບໍ່ມ່ວນ. ຖ້າແມ່ນຢູ່ໃກ້ປະຕູທ່ານກໍຄົງຈະຍ່າງອອກໄປແລ້ວ, ຖ້າບໍ່ຢ່າງນັ້ນກໍແມ່ນນັ່ງກິນເຂົ້າຕອກແຕກໃສ່ເນີຍໃຫ້ໝົດໄວໆ ແລ້ວກໍຟ້າວໜີ. ບາງຄັ້ງກໍຢາກຖາມເອົາເງິນຄືນເພາະໜັງບໍ່ມ່ວນ. ເຫດຜົນກໍຄືວ່າທ່ານເບິ່ງສັ້ນໂພດ.

ບໍ່ມີພຣະຄັມພີໃດທີ່ຈະເໝືອນຂ່າວປະເສີດມາຣະໂກ. ເພິ່ນຂຽນພຣະຄັມພີ ໂດຍການເລີ້ມຕົ້ນບົດທີ່ເຂັ້ມຂົ້ນໂລດ, ຄືເລີ້ມເຣື່ອງຂອງພຣະເຢຊູໂດຍທັນທີ. ຂ່າວປະເສີດມາຣະໂກ 1:1-20 ເປັນການສເນີເລື້ອງທີ່ປະກອບດ້ວຍເນື້ອໃນຊຶ່ງບໍ່ເໝືອນ ຂ່າວປະເສີດເຫລັ້ມອື່ນໆ. ເປັນຄວາມຈິງ ໃນບົດທີນຶ່ງນີ້ ມາຣະໂກໄດ້ແນະນຳອົງພຣະເຢຊູ, ແລະຈຸດປະສົງທີ່ພຣະອົງສະເດັດເຂົ້າມາໃນໂລກນີ້, ແລະພຣະອົງຊົງມີຈຸດພິເສດເໝືອນມະນຸດທັມດາຢ່າງໃດ. ພວກເຮົາຈະໄດ້ເຫັນໃນ ບົດທີນຶ່ງນີ້.

**ແນະນຳອົງພຣະເຢຊູ** (1:1-8)

ບໍ່ເໝືອນມັດທາຍແລະລູກາ, ມາຣະໂກໄດ້ເລີ້ມຕົ້ນຂ່າວປະເສີດຂອງລາວດ້ວຍການເລີ້ມຕົ້ນການປ່າວປະກາດຂອງພຣະເຢຊູ ເພິ່ນບໍ່ໄດ້ກ່າວເຖິງການປະສູດ ແລະກ່າວເຖິງການໃຊ້ຊີວິດເດັກນ້ອຍເລີຍ. ເພິ່ນເປີດດ້ວຍຂໍ້ທີ 1 ວ່າ "ຕົ້ນເດີມຂ່າວປະເສີດເຣື່ອງພຣະເຢຊູຄຣິດ (ພຣະບຸດຂອງພຣະເຈົ້າ)........."

ພວກເຮົາມາກ່າວເຖິງຂ່າວປະເສີດເສັຍກ່ອນ, ຂ່າວປະເສີດ ໝາຍຄວາມວ່າ ຂ່າວດີ. ຂ່າວປະເສີດໝາຍຄວາມວ່າ ຂ່າວເຖິງຄວາມລອດພົ້ນ, ຄວາມລອດພົ້ນນີ້ ແມ່ນຈະພົບໄດ້ໃນພຣະເຢຊູເທົ່ານັ້ນ. ໃນພຣະທັມຄັມພີໂຣມ 1:2-4 ແລະ ໃນ 1 ໂກຣິນໂທ 15:3-5 ໂປໂລໄດ້ກ່າວເຖິງການຕາຍ, ການຄືນພຣະຊົນ ແລະການສະເດັດຂຶ້ນສູ່ສວັນຂອງພຣະເຢຊູ.

ຄຳວ່າ "ຄຣິດ" ແມ່ນເປັນພາສາກຣີກ ຊຶ່ງເໝືອນກັບຄຳທີ່ວ່າ ພຣະເມຊີອາຂອງພາສາເຮັບເຣີ ຊຶ່ງແປວ່າພຣະຜູ້ຊ່ວຍ. ມາຣະໂກປະກາດວ່າ ພຣະເຢຊູຜູ້ນີ້ລະຄື ພຣະເມຊີອາ ທີ່ຊາວເຮັບເຣີທັງຫລາຍກຳລັງລໍຄອຍຢູ່. ເພື່ອເນັ້ນຄຳເວົ້າໃຫ້ໜັກແໜ້ນ ມາຣະໂກຍັງໄດ້ຕື່ມຄຳວ່າ "ພຣະບຸດຂອງພຣະເຈົ້າ" ຄຳເວົ້ານີ້ເປັນຄຳເວົ້າທີ່ພວກສັດຕຣູຂອງພຣະອົງຊົງເຍາະເຍີ້ຍ ແລະນຳພຣະອົງເຂົ້າສູ່ການປະຫານ. ເຖິງແມ່ນວ່າພຣະອົງຈະຖືກປະຫານຢູ່ເທິງກາງແຂນກໍຕາມ, ທະຫານຫລາຍຄົນກໍຍັງໄດ້ສາຣະພາບຕໍ່ພຣະອົງຢູ່ທີ່ຫລັກປະຫານ. (ມາຣະໂກ 15:39) "ຈິງແທ້ແລ້ວ, ທ່ານຜູ້ນີ້ແມ່ນພຣະບຸດຂອງພຣະເຈົ້າ"

ຫລັງຈາກແນະນຳຫົວຂໍ້ແລ້ວ ມາຣະໂກຈຶ່ງໄດ້ອີງໃສ່ພຣະຄັມພີເດີມ (1:2-3) ລາວໄດ້ກ່າວເຖິງຜູ້ປະກາດພຣະທັມເອຊາຢາ ເພາະວ່າພຣະທັມເອຊາຢາມີສ່ວນທີ່ກ່າວໄວ້ຫລາຍຢ່າງໃນຊີວິດຂອງໂຢຮັນບັບຕິສໂຕ. ພຣະຄັມພີເດີມ 3 ເຫຼັ້ມທີ່ກ່າວເຖິງໂຢຮັນບັບຕິສໂຕຜູ້ທີ່ຈະມາລ່ວງໜ້າພຣະເຢຊູ ເຊັ່ນ: ພຣະທັມອົພຍົບ 23:20; ພຣະທັມມາລາກີ 3:1; ແລະພຣະທັມເອຊາຢາ 40:3

ພຣະທັມຂ່າວປະເສີດມາຣະໂກ ເບິ່ງຄືວ່າທຸກຢ່າງໄດ້ດຶງອອກມາເພື່ອຈະແນໃສ່ພຣະເມຊີອາ ຜູ້ທີ່ຈະສະເດັດມາ. ເພິ່ນໄດ້ອະທິບາຍໂຢຮັນວ່າເປັນເໝືອນຜູ້ປະກາດເອລີຢາ (ມາຣະໂກ 1:6; 2 ພົງກະສັດ 1:8)ໂຢຮັນເປັນຜູ້ທີ່ມາແປງທາງໃຫ້ແກ່ອົງພຣະຜູ້ເປັນເຈົ້າ ຫລືວ່າພຣະເມຊີອາ.

ໂຢຮັນໄດ້ກ່າວແບບງ່າຍໆວ່າ: "ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່" ຫລືອີກຄວາມນຶ່ງວ່າຈົ່ງສາຣະພາບຄວາມຜິດບາບຂອງທ່ານ, ຈົ່ງຫັນໜີຈາກຄວາມບາບແລ້ວມາຮັບເອົາພຣະເຈົ້າ ແລ້ວໂທດບາບຂອງທ່ານຈະຫາຍ. ໂຢຮັນຍັງໄດ້ກ່າວເຖິງຜູ້ທີ່ຈະມາຕາມຫລັງອີກ. ລາວໄດ້ແນໃສ່ພຣະເມຊີອາຜູ້ຊຶ່ງມີຣິດອຳນາດເໜືອກວ່າລາວພຣະອົງນັ້ນຈະໃຫ້ພວກເຂົາຮັບບັບຕິສມາໂດຍພຣະວິນຍານບໍຣິສຸດ. ໃນ 8 ຂໍ້ທຳອິດນີ້ ມາຣະໂກກ່າວເຖິງອຳນາດຂອງຜູ້ເຜີຍພຣະທັມທີ່ກ່າວເຖິງ ໂຢຮັນໄດ້ແນະນຳວ່າພຣະເຢຊູ ເປັນພຣະເມຊີອາ ເປັນພຣະບຸດຂອງພຣະເຈົ້າ. ພຣະເຢຊູຈະມາເປັນຜູ້ລົບລ້າງຄວາມບາບຂອງມະນຸດໃນທົ່ວໂລກ.

## <u>ການບົ່ງບອກ</u> (1:9-11)

ພຣະເຢຊູຊົງຢ່າງລົງນ້ຳມາຫາໂຢຮັນເພື່ອຮັບບັບຕິສມາທີ່ແມ່ນ້ຳຈໍແດນ. ນີ້ແມ່ນການແນະນຳອີກຢ່າງນຶ່ງວ່າພຣະເຢຊູຊົງເປັນຄຣູສອນ ແລະເປັນຜູ້ນຳທາງຝ່າຍຈິດວິນຍານ. ມາຣະໂກກ່າວວ່າ ຫລັງຈາກທີ່ພຣະເຢຊູຂຶ້ນຈາກນ້ຳແລ້ວ ລາວກໍເຫັນທ້ອງຟ້າແຫວກອອກ(ມາຣະໂກ 1:10) ສ່ວນໃນ (ມັດທາຍ 3:16; ລູກາ 3:21) ທ້ອງຟ້າກໍໄຂອອກ.

ພຣະວິນຍານບໍຣິສຸດຊຶ່ງຊົງຮູບນົກເຂົາກໍໄດ້ລົງມາສະຖິດຢູ່ເທິງທ່ານ. ແລະຍັງໄດ້ຍິນສຽງແນະນຳທີ່ດັງມາຈາກສວັນເພື່ອໃຫ້ຊາວໂລກໄດ້ຮູ້ວ່າພຣະເຢຊູຜູ້ນີ້ຄືພຣະບຸດຂອງພຣະເຈົ້າຢ່າງແທ້ຈິງ. ເມື່ອພຣະບິດາຊົງກ່າວດັ່ງນີ້ກັບພຣະເຢຊູກໍໝາຍຄວາມວ່າພຣະອົງມີຄວາມສັມພັນກັບພຣະເຢຊູຢ່າງແທ້ຈິງ, ພຣະອົງຊົງປະທັບຕາມອບທຸກສິ່ງທຸກຢ່າງໃຫ້ແກ່ພຣະເຢຊູເປັນຜູ້ຮັບຜິບຊອບ "ທ່ານເປັນບຸດທີ່ຮັກຂອງເຮົາ, ເຮົາພໍໃຈໃນທ່ານຫລາຍ" (1:11)

- ພຣະເຢຊູ ຊຶ່ງໄດ້ຮັບອຳນາດຈາກພຣະບິດາ (ໂຢຮັນ 16:23-24)
- ພຣະເຢຊູຊຶ່ງເປັນແສງສະທ້ອນຂອງພຣະບິດາ (ໂຢຮັນ 14:10)
- ພຣະເຢຊູຊຶ່ງເປັນພຣະທັມແລະເປັນຜູ້ຊຶ່ງສະຖິດຢູ່ກັບພຣະບິດາແຕ່ເບື້ອງຕົ້ນ (ໂຢຮັນ 1:1)

ການຮັບສິນບັບຕິສມາແມ່ນໝາຍຄວາມວ່າການປ່າວປະກາດຂອງພຣະເຢຊູໃນແຜ່ນດິນໂລກໄດ້ເລີ້ມຂື້ນແລ້ວ.

<u>**ການທົດລອງ**</u> (1:12-13)
ຫລັງຈາກທີ່ອົງພຣະເຢຊູໄດ້ຮັບບັບຕິສມາແລ້ວ ພຣະວິນຍານບໍສຸດໄດ້ຊົງນຳພຣະອົງເຂົ້າໄປໃນຖິ່ນທຸຣະກັນດານ. ແຕ່ວ່າໃນສອງຂໍ້ນີ້ພວກເຮົາສາມາດເກັບກຳໄດ້ 6 ຢ່າງດ້ວຍກັນເຊັ່ນ: (1)ການທົດລອງໄດ້ເຂົ້າມາທັນທີຫລັງຈາກບັບຕິສມາແລ້ວ (2) ພຣະວິນຍານບໍ່ຣິສຸດນຳພຣະເຢຊູເຂົ້າໄປໃນປ່າກັນດານ (3) ພຣະເຢຊູຊົງຢູ່ທີ່ນັ້ນ 40 ວັນ (4)ພຣະເຢຊູຊົງຖືກໂຈມຕີໂດຍມານຊາຕານ (5) ພຣະເຢຊູຊົງຢູ່ກັບສັດປ່າ (6) ທູດສວັນຂອງພຣະເຈົ້າມາບົວລະບັດພຣະເຢຊູ.

ທັງມັດທາຍ, ມາຣະໂກ, ແລະລູກາ ຕ່າງກໍກ່າວເຖິງການທົດລອງຄ້າຍໆຄືກັນ. ເປັນຊີວິດທີ່ກັນດານທີ່ສຸດສຳຫລັບຊີວິດຂອງພຣະເຢຊູ. ພຣະອົງຊົງຖືກແນະນຳໃຫ້ໂລກຮູ້ແລ້ວ ແລະບັດນີ້ພຣະອົງຈະຊົງຖືກແນະນຳໃຫ້ແກ່ສັດຕຣູ. ອຳນາດຂອງພຣະເຢຊູຊົງຢູ່ເໜືອມານຊາຕານຢູ່ແລ້ວ.

<u>**ການປ່າວປະກາດ ແລະການຮຽກເອີ້ນ**</u> (1:14-20)
ຫລັງຈາກກັບຈາກປ່າທຸຣະກັນດານແລ້ວ ພຣະເຢຊູກໍຊົງເລີ້ມຕົ້ນເທສນາທັນທີ. ໃນຄຳເທສນານີ້ມີຢູ່ 4 ພາກດ້ວຍກັນ ( 1:15) ພາກທີ 1 ເວລາກຳນົດມາເຖິງແລ້ວ; ພາກທີ 2 ແຜ່ນດິນຂອງພຣະເຈົ້າມາເຖິງແລ້ວ; ພາກທີ 3 ຈົ່ງກັບໃຈເສັຽໃໝ່; ພາກທີ 4 ຈົ່ງເຊື່ອຂ່າວປະເສີດທັມຊາດຂອງອົງພຣະເຢຊູຄືການຮຽກເອີ້ນ, ພຣະອົງຊົງຮຽກເອີ້ນເອົາສາວົກແລະຮຽກເອີ້ນເອົາທຸກຄົນໃຫ້ຕິດຕາມພຣະອົງ. ອັນເດຣອາຜູ້ຊຶ່ງເຄີຍເປັນສິດຂອງໂຢຮັນບັບຕິສໂຕ (ໂຢຮັນ 1:40) ໂຢຮັນບັບຕິສໂຕ ໄດ້ບອກອັນເດຣອາວ່າ ພຣະເຢຊູເປັນລູກແກະຂອງພຣະເຈົ້າ. (ໂຢຮັນ 1:36) ອັນເດຣອາກໍໄດ້ແບ່ງປັນເຣື່ອງນີ້ໃຫ້ກັບເປໂຕອ້າຍຂອງລາວດ້ວຍແລະອ້າຍຂອງລາວກໍກາຍມາເປັນສາວົກຂອງພຣະເຢຊູ. ເປໂຕແລະອັນເດຣອາຄົງຈະໄດ້ຍິນການຮຽກເອີ້ນຂອງພຣະເຢຊູ "ຈົ່ງຕິດຕາມເຮົາມາ ເຮົາຈະຕັ້ງທ່ານໃຫ້ເປັນຜູ້ຫາຄົນ "(ມກ.1:17) ພວກເຂົາເຈົ້າຮູ້ດີວ່າພຣະເຢຊູ ເປັນ ອາຈານທີ່ມີພລັງແລະມີອຳນາດ. ເມື່ອໄດ້ຍິນຄຳຮຽກເອີ້ນຈາກພຣະອົງແລ້ວ ພວກເຂົາ(ເປໂຕ, ອັນເດຣອາ, ຢາໂກໂບ ແລະໂຢຮັນ) ກໍຢາກຮຽນຮູ້ຈາກພຣະອົງແລະກໍໄດ້ມອບຊີວິດຂອງຕົນໃຫ້ແກ່ພຣະອົງ. ທັງສີ່ຄົນເປັນຄົນຫາປາ, ຊີວິດພວກເຂົາຖືກປ່ຽນແປງ ແລະບໍ່ໄດ້ຫັນກັບໄປຫາອັນເກົ່າອີກເລີຍ.

<u>**ສິ່ງທີ່ຄວນນຳໄປກະທຳ:**</u>
ໃນພຣະທັມມາຣະໂກບົດທີ 1, ມາຣະໂກໄດ້ບອກວ່າພຣະເຢຊູແມ່ນພຣະເມຊີອາ, ເປັນພຣະຜູ້ຊ່ວຍ, ແລະເປັນພຣະບຸດຂອງພຣະເຈົ້າ ຜູ້ທີ່ຈະມາຊ່ວຍໂຜດມະນຸດທັງຫລາຍ. ມາຣະໂກຍັງໄດ້ຍົກເອົາຂໍ້ພຣະຄັມພີຈາກພຣະຄັມພີເດີມ, ຊຶ່ງເລັງໃສ່ພຣະເຢຊູມາໃຫ້ເຫັນ, ການເທສນາຂອງໂຢຮັນບັບຕິສໂຕ, ພະຍານທີ່ມີສຽງຈາກສວັນ, ການສະເດັດມາຂອງພຣະວິນຍານບໍຣິສຸດ, ແລະການຮຽກເອີ້ນອັນຊົງມີຣິດຂອງພຣະເຢຊູ.

<u>**ຄຳຖາມ**</u>
1. ພຣະເຢຊູຊົງໄດ້ຮັບສິດອຳນາດວ່າເປັນບຸດຂອງພຣະເຈົ້າ. ສິ່ງນີ້ມີຄວາມໝາຍຫຍັງບໍ່ຕໍ່ຊີວິດຂອງທ່ານ? ຕໍ່ຊີວິດຂອງເພື່ອນຂອງທ່ານເດ?

໒. ຄຳເທສນາຂອງໂປໂຣັນບັບຕິສໂຕ ທີ່ກ່ຽວກັບການຈັດຕຽມທາງໃຫ້ແກ່ພຣະອົງເປັນຢ່າງໃດ?

3. ການສຳນຶກບາບໝາຍຄວາມວ່າຢ່າງໃດ? ທ່ານເຄີຍສຳນຶກຢ່າງໃດຢ່າງນຶ່ງບໍ່? ທ່ານມີຄວາມຮູ້ສຶກຢ່າງໃດ?

4. ເປັນຫຍັງຈຶ່ງມີຄວາມສຳຄັນ ທີ່ພຣະບິດາໄດ້ສະແດງຄວາມຮັກຕໍ່ພຣະບຸດ, ພຣະເຢຊູລູກຂອງພຣະອົງເອງ? ມີຄວາມໝາຍຫຍັງບໍ່ຕໍ່ຊີວິດຂອງທ່ານ? ຕໍ່ຊີວິດຂອງຄົນທີ່ທ່ານຮັກ?

5. ທ່ານໄດ້ຮັບຕອບຄຳຮຽກເອີ້ນຂອງພຣະເຢຊູແລ້ວຫລືຍັງ? ຖ້າຍັງ ເປັນຍ້ອນຫຍັງ?

*ບພ*

# ບົດຮຽນທີ 2
# ຄວາມເຊື່ອຈະມີຄຸນຄ່າກໍຕໍ່ເມື່ອສະແດງອອກມາເທົ່ານັ້ນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 2:1-12
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 2:1-12
**ຈຸດສຳຄັນຂອງບົດຮຽນນີ້:** ຄວາມເຊື່ອຈຳເປັນຕ້ອງມີການກະທຳດ້ວຍການຮັບຜິດຊອບ
**ຄຳຖາມເພື່ອສຳຣວດ:** ທ່ານພໍໃຈໃນຜູ້ໃດ ໃນການປ່າວປະກາດເຣື່ອງຂອງພຣະເຢຊູນີ້ ?
**ຈຸດປະສົງຂອງບົດຮຽນ:** ຖ້າຈະຕັດສິນໃຈ, ຂ້າພະເຈົ້າຂໍຕັດສິນໃຈໄປທາງພຣະເຢຊູດີກວ່າ

## ຄົ້ນຄວ້າພ້ອມກັບການປະຕິບັດ

- ຢັ້ງຢືນວ່າ ພຣະຄັມພີມີອຳນາດໃນການນຳພາຊີວິດ ແລະ ໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກຄົນ
- ເສີມຂຍາຍການເຕີບໃຫ່ຍຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ຍົກສູງທຸກຄົນ ໂດຍເຫັນວ່າພວກເຂົາກໍແມ່ນພຣະລັກສະນະຂອງພຣະເຈົ້າ

## ຄຳນຳ

ພຣະທັມຂ່າວປະເສີດມາຣະໂກ ບົດທີ 1 ໄດ້ກ່າວເຖິງສິດແລະອຳນາດຂອງພຣະເຢຊູ ໂດຍຜ່ານຄຳພະຍານໃນພຣະຄັມພີເດີມ, ໂຢຮັນບັບຕິສໂຕ, ສຽງຂອງພຣະເຈົ້າ. ມາຣະໂກ ບົດທີ 1 ຍັງໄດ້ສເນີການປິ່ນປົວແບບອັສຈັນຂອງພຣະເຢຊູຫຼາຍຢ່າງ. (ມກ. 1:21-45) ການປິ່ນປົວໂຣກພັຍໄຂ້ເຈັບນີ້ແມ່ນຊີ້ໃຫ້ເຫັນເຖິງສິດແລະອຳນາດຂອງພຣະເຢຊູທີ່ພຣະບິດາຊົງມອບໃຫ້.

ຊື່ສຽງຂອງພຣະເຢຊູໄດ້ເພີ້ມຂຶ້ນ ທັງການສິດສອນ, ການເທສນາ, ການກະທຳ ຂຍາຍອອກຢ່າງວ່ອງໄວແລະກໍມີຫລາຍ ຄົນໄດ້ເຂົ້າມາຫາພຣະອົງ ເພື່ອຂໍຄວາມຊ່ວຍເຫລືອ ແລະຂໍເປັນສິດ.

**ຄວາມເຊື່ອຂອງເພື່ອນສະຫາຍສີ່ຄົນ:** (2:1-12)
ມາຣະໂກ 2:1-12 ນີ້ ແມ່ນກ່າວເຖິງ 1 ໃນ 5 ຂອງການປິ່ນປົວໃນມາຣະໂກບົດທີ 2:1-3:6, ການປິ່ນປົວ ອີກ 4 ເທື່ອຈະໄດ້ກ່າວໃນບົດຕໍ່ໄປ. ການປິ່ນປົວຊ່ວຍເຫລືອນີ້ເຮັດໃຫ້ການຂັດແຍ້ງເກີດຂຶ້ນກັບພວກຢິວທີ່ນັບຖືສາສນາ. ການຂັດແຍ້ງຕໍ່ສູ້ນີ້ແມ່ນການນຳພຣະອົງໄປສູ່ການໄຖ່ທີ່ໄມ້ກາງແຂນ. ການເປີດສາກຂອງບົດທີ 2 ນີ້ ແມ່ນກ່ຽວພັນກັບບົດທີ 1. ໃນບົດນີ້ໄດ້ກ່າວເຖິງຝູງຊົນທັງຫລາຍໄດ້ມາຮວມ ກັນຈົນແຫນ້ນທີ່ເມືອງກາເປນາອູມ. ພຣະອົງກໍໄດ້ເລີ້ມຕົ້ນ "ເທສນາພຣະທັມ" ໃຫ້ພວກເຂົາຟັງ (2:2) "ພຣະທັມ" ແມ່ນພຣະຄຳຂອງພຣະເຈົ້າຊຶ່ງພຣະເຢຊູຊົງສິດສອນ ແລະກໍຄ້າຍຄືກັນກັບຂ່າວປະເສີດຂອງພຣະເຈົ້າ.

ຍັງມີບາງຄົນ, ອາດຈະເປັນ 5 ຫລື 6 ຫລື 7 ....ກໍອາດເປັນໄດ້ ແຕ່ໃນພຣະຄັມພີບອກໄວ້ວ່າ ມີ 4 ຄົນຫາມ (2:3)

ພວກເຂົາຢາກເຂົ້າໄປໃນເຮືອນເພື່ອຈະໄດ້ເຫັນພຣະເຢຊູ ແຕ່ເຂົ້າໄປບໍ່ໄດ້. 4 ຄົນທີ່ຫາມຄົນເປັ້ຽນີ້ຈຶ່ງຊອກຫາສ່ອງທາງທີ່ຈະເຂົ້າໄປ. ຄົນໃນສມັຍນັ້ນ ພວກເຂົາຈະປຸກເຮືອນແບບມີຂັ້ນໄດທາງຂ້າງ ເພື່ອຂຶ້ນເທິງຫລັງຄາດ້ວຍ, ທຸກຫຼັງຄາຈະໃຊ້ໄວ້ເພື່ອເບິ່ງອາກາດຍາມແລງ ຫລືຫາຍໃຈເອົາອາກາດສົດໃນຍາມແລງ.

ເມື່ອເຫັນດັ່ງນີ້ ພວກເຂົາທັງ 4 ຄົນຈຶ່ງພາກັນຫາມຄົນເປັ້ຽຂຶ້ນໄປເທິງຫລັງຄາພຽງ ເມື່ອເຖິງແລ້ວພວກເຂົາກໍພາກັນຮື້ຫລັງຄາ. ຫລັງຄາອາດຈະທໍາດ້ວຍຫຍ້າຝາງຫລືໃບຕານ ແລະກໍຈອດດ້ວຍຂີ້ຕົມຫລືດິນຈີ່ຊຶ່ງເຮັດດ້ວຍຂີ້ຕົມ. ມັນກໍບໍ່ເປັນການຍາກທີ່ຈະຮື້ຫລືງັດອອກ.

ເມື່ອທັງ 4 ຄົນຮື້ຫລັງຄາກວ້າງພຽງພໍແລ້ວ ພວກເຂົາກໍໄດ້ເອົາແຄ່ທີ່ມີຄົນເປັ້ຽນອນຢູ່ນັ້ນຢ່ອນລົງຊື່ບ່ອນພຣະອົງປະທັບຢູ່ນັ້ນ. ພຣະເຢຊູໄດ້ເຫັນຄວາມເຊື່ອຂອງພວກເຂົາ ແລະພຣະອົງກໍຊົງກ່າວຕໍ່ຄົນເປັ້ຽນັ້ນວ່າ: "ລູກເອີຍ, ຜິດບາບຂອງເຈົ້າໄດ້ຮັບອະພັຍແລ້ວ." (2:5)

ໃນພຣະຄັມພີບໍ່ໄດ້ບັນທຶກໄວ້ວ່າ 4 ຄົນທີ່ຫາມແຄ່ໄປນັ້ນເວົ້າຫຍັງແດ່. ເຖິງແມ່ນພວກເຂົາເຈົ້າບໍ່ໄດ້ເວົ້າຫຍັງແຕ່ພຣະເຢຊູກໍຊົງຊາບວ່າ ຄວາມຕ້ອງການຂອງພວກເຂົາຄືຫຍັງ. ການບໍ່ເວົ້າຫຍັງແຕ່ສະແດງອອກກໍແມ່ນຄວາມເຊື່ອດ້ວຍການລົງມືປະຕິບັດ ຊຶ່ງເປັນຄວາມເຊື່ອທີ່ມີຊີວິດ. ຢາໂກໂບໄດ້ບັນທຶກໄວ້ວ່າຄວາມເຊື່ອທີ່ບໍ່ມີການປະຕິບັດແມ່ນຄວາມເຊື່ອທີ່ຕາຍແລ້ວ. (ຢາໂກໂບ 2:17)

## ການປິ່ນປົວທີ່ບໍ່ລົງຮອຍກັນ

ພຣະເຢຊູຄຣິດບໍ່ໄດ້ປິ່ນປົວຄົນເປັ້ຽໂດຍທັນທີທັນໃດໂລດ. ເວລາທີ່ພຣະອົ ເຫັນຄວາມເຊື່ອຂອງ 4 ຄົນ ຄັ້ງແຮກພຣະອົງກໍກ່າວອອກມາໂລດ "ລູກເອີຍ, ຜິດບາບຂອງເຈົ້າໄດ້ຮັບອະພັຍແລ້ວ." (2:5) ພວກບັນດານັກທັມ (ພວກຄຣູສອນສາສນາ) ພາກັນນັ່ງງຽບຢູ່ ແລ້ວກໍຄິດໃນໃຈວ່າເປັນຫຍັງຄົນຜູ້ນີ້ຈຶ່ງເວົ້າແນວນັ້ນ. ຖ້າເວົ້າແບບນີ້ກໍແມ່ນການຫມິ່ນປມາດພຣະເຈົ້າ. ເພາະສິ່ງເຫລົ່ານີ້ມີແຕ່ພຣະເຈົ້າຜູ້ດຽວທີ່ອະພັຍໂທດໃຫ້ມະນຸດໄດ້.

ພວກເຂົາບໍ່ຮູ້ຈັກວ່າພຣະເຢຊູເປັນຜູ້ໃດ,ມີສິດອໍານາດນີ້ມາຈາກໃຜ. ພຣະຄັມພີພຣະບັນຍັດສອງ 6:4 ໄດ້ກ່າວໄວ້ຢ່າງຈະແຈ້ງ ພວກເຂົາເຊື່ອພຣະເຈົ້າແບບຄົນເຮັບເຣີ (ເຊື່ອພຣະຄັມພີເດີມ 5 ເຫລັ້ມ) ພຣະເຈົ້າມີຜູ້ດຽວແລະກໍບໍ່ແມ່ນພຣະເຢຊູ. ພຣະເຢຊູບໍ່ໄດ້ຖືກກ່າວຫາວ່າອ້າງຕົວເປັນພຣະເຈົ້າແຕ່ຖືກກ່າວຫາວ່າຫມິ່ນປມາດພຣະເຈົ້າ ໂດຍການທໍາຫນ້າທີ່ຂອງພຣະເຈົ້າແລະຫນ້າທີ່ນັ້ນຕ້ອງແມ່ນພຣະເຈົ້າພຽງຜູ້ດຽວຈຶ່ງຈະສາມາດເຮັດໄດ້.

ເປັນຫຍັງພຣະເຢຊູຈຶ່ງອະພັຍໂທດບາບກ່ອນ, ກ່ອນທີ່ພຣະອົງຈະປິ່ນປົວເຂົາ? ມີຫຼາຍຄໍາຕອບທີ່ແຕກຕ່າງກັນໄປເຊັ່ນ:

(1) ອາດເປັນໄປໄດ້ທີ່ພຣະເຢຊູມີພຣະປະສົງຢາກທໍາງານກັບຈິດວິນຍານຂອງຄົນເປັນເປັ້ຽ ກ່ອນຈະທໍາງານຝ່າຍຮ່າງກາຍ. ນີ້ບໍ່ໄດ້ຫມາຍຄວາມວ່າຄົນນີ້ເປັນເປັ້ຽຍ້ອນເຂົາມີຄວາມຜິດບາບ. ຄວາມຜິດບາບຝ່າຍຈິດວິນຍານຂອງເຂົາກໍຫລາຍເຫມືອນກັນ ເຂົາຕ້ອງໄດ້ປິ່ນປົວດ້ວຍ. ປົວຄົນຂາເປັ້ຽເຮັດໃຫ້ເຂົາມີຊີວິດໃຫມ່ໃນແຜ່ນດິນໂລກ. ປົວຄົນບາບເຮັດໃຫ້ເຂົາມີຊີວິດອັນຕລອດໄປເປັນນິດໃນສວັນ.

(2) ຖ້າຈະອະທິບາຍໄປອີກໃນຮູບນຶ່ງ ຄົນເປັນເປັ້ຽຢ່າງນີ້ກໍຍ້ອນວ່າລາວມີຄວາມບາບ. ຕົວຢ່າງ: ລູກທີ່ເກີດຂຶ້ນແລ້ວຕາບອດກໍແມ່ນຜົນຄວາມບາບຂອງພໍ່ແມ່. (ໂຢຮັນ 9:1-2) ຢ່າງໃດກໍຕາມໃນມາຣະໂກ 2, ພຣະເຢຊູໄດ້ຍົກໂທດບາບ

ກ່ອນ, ແລະຄົນນັ້ນຍັງເປັນເປ້ຍຢູ່. ຕໍ່ຈາກນັ້ນພຣະເຢຊູຈຶ່ງປົວທາງຮ່າງກາຍ ນີ້ກໍແມ່ນການສແດງໃຫ້ພວກເຮົາເຫັນວ່າວິນຍານແລະເນື້ອໜັງເປັນພາກສ່ວນຂອງໃຜຂອງລາວ.

(3) ອີກເຫດຜົນນຶ່ງກໍຄືວ່າ ພຣະເຢຊູໄດ້ຍົກໂທດບາບໃຫ້ຄົນເປ້ຍນີ້ ກໍເພາະວ່າພຣະອົງຢາກໃຫ້ພວກທັມມະຈານທັງຫລາຍຖາມພຣະອົງວ່າໄດ້ຣິດອຳນາດນີ້ມາຈາກໃສ ແລະກໍເປັນໂອກາດຈະໄດ້ສອນສິດຂອງພຣະອົງເອງແລະຜູ້ຄົນທີ່ຢູ່ໃນເຮືອນດ້ວຍ. ພຣະອົງຊົງຊາບດີວ່າການກະທຳຂອງພຣະອົງນີ້ຫລາຍຄົນຈະຕົກຊະເງີ້ງງັນໄປຕາມໆກັນ. ພຣະອົງຊົງກະທຳຖືກຕ້ອງທຸກຢ່າງ.

ພຣະເຢຊູຊົງຊາບທຸກຢ່າງພາຍໃນຈິດໃຈຂອງມະນຸດ. ພຣະອົງສາມາດອ່ານຄວາມຄິດວ່າທ່ານກຳລັງຄິດຫາອັນໃດ (ມາຣະໂກ 2:8) ພຣະເຢຊູຊົງຕອບຄວາມຄິດຂອງພວກນັກທັມວ່າ "ເປັນຫຍັງພວກທ່ານຈຶ່ງຄິດໃນໃຈຢ່າງນີ້" ພຣະອົງຊົງປະເຊີນກັບພວກທີ່ຕໍ່ຕ້ານພຣະອົງ ແລະຄຳຖາມທີ່ພຣະອົງຖາມນີ້ກໍແມ່ນຖາມພວກນັກທັມໂດຍສະເພາະ. "ຜິດບາບຂອງເຈົ້າໄດ້ຮັບອະພັຍແລ້ວ" ຫລືຈະບອກວ່າ "ຈົ່ງລຸກຂຶ້ນເອົາບ່ອນນອນຂອງເຈົ້າຍ່າງໄປ" ອັນໃດຈະງ່າຍກວ່າກັນ. ຄຳຖາມຂອງພຣະອົງແມ່ນຢາກແນໃສ່ວ່າຜູ້ທີ່ມີອຳນາດກໍເຮັດຕາມອຳນາດທີ່ໄດ້ມາ.

ເມື່ອພຣະເຢຊູປົວຄົນເປ້ຍແລ້ວ (2:10-11) ພຣະອົງກໍຊົງກ່າວເຖິງສິດອຳນາດທີ່ພຣະອົງມີແລະສິດອຳນາດຂອງພຣະອົງກໍສາມາດປິ່ນປົວຄົນທັງໂລກໄດ້. ທຸກຄົນທີ່ຢູ່ຮ່ວມໃນຫ້ອງນັ້ນກໍເຫັນທຸກຄົນ. ຄຳຖາມນີ້ຝັງຢູ່ໃນແນວຄິດຂອງແຕ່ລະຄົນ ແມ້ແຕ່ຄົນສມັຍນີ້ກໍຍັງຖາມກັນຢູ່ "**ພຣະເຢຊູແມ່ນພຣະເຈົ້າບໍ່?**"

ພຣະເຢຊູບໍ່ຢາກໃຫ້ພວກນັກທັມທັງຫລາຍຕອບຄຳຖາມຂອງພຣະອົງດອກ ແຕ່ພຣະອົງຢາກບອກພວກເຂົາວ່າເຮົານີ້ລະຄືບຸດມະນຸດທີ່ມີສິດອຳນາດໃນໂລກ ເຮົາໃຫ້ອະພັຍຄວາມຜິດບາບໄດ້, ເບິ່ງແມ.

ໃນຫ້ອງນັ້ນຝູງຊົນເຕັມລົ້ນກັນຫລາຍ ທັງພວກສາວົກ, ທັງພວກນັກທັມ, ແລະທັງພວກຢາກຮູ້ຢາກເຫັນ. ເພື່ອນ 4 ຄົນກໍເບິ່ງພຣະເຢຊູປົວຄົນຢູ່ທາງເທິງ, ສ່ວນຄົນເປ້ຍກໍຢູ່ຕໍ່ໜ້າພຣະເຢຊູ. ພຣະອົງຊົງກ່າວແກ່ຄົນເປ້ຍນັ້ນວ່າ "ຈົ່ງລຸກຂຶ້ນ ຍົກເອົາບ່ອນນອນຂອງເຈົ້າໄປບ້ານເສັຽ" ຄົນນັ້ນກໍຟັງຄວາມ ເອົາບ່ອນນອນຂອງຕົນແລ້ວກໍຍ່າງອອກໄປຕໍ່ໜ້າຄົນທັງປວງ. ພວກເຂົາກໍງຶດງໍ້ອັສຈັນໃຈ .

<u>**ຄຳແນະນຳແລະພາກປະຕິບັດ**</u>

- ຄວາມເຊື່ອຂອງຫລາຍຄົນເຮັດໃຫ້ມີພລັງ ມີອຳນາດ ( ເພື່ອນ 4 ຄົນ ຂອງຄົນເປ້ຍ)
- ຄົນທີ່ມີຄວາມເຊື່ອຕ້ອງມີການປະຕິບັດດ້ວຍ (ຖ້າເພື່ອນ 4 ຄົນຂອງຄົນເປ້ຍຫາກບໍ່ສະແດງຄວາມເຊື່ອອອກມາ ຄົນເປ້ຍຈະໄປເຖິງພຣະເຢຊູໄດ້ຢ່າງໃດ)
- ຈົ່ງເຊື່ອວ່າພຣະເຢຊູມີສິດອຳນາດເໜືອຈິດວິນຍານແລະຮ່າງກາຍ. ບໍ່ມີສິ່ງໃດທີ່ພຣະອົງຈະທຳບໍ່ໄດ້ໃນໂລກນີ້

<u>**ຄຳຖາມ**</u>

1. ຄວາມເຊື່ອຂອງທ່ານເຄີຍໄດ້ຖືກທົດລອງບໍ່? ຜູ້ທີ່ຢູ່ອ້ອມຂ້າງທ່ານໄດ້ຊ່ວຍທ່ານບໍ່?

໒. ສິ່ງໃດສຳຄັນຫລາຍກວ່າສຳຫລັບທ່ານ: ພຣະເຢຊູ ຊ່ວຍທາງຮ່າງກາຍ ຫລືທາງຈິດວິນຍານ?

3. ແມ່ນຫຍັງຄືສິ່ງທີ່ກີດກັ້ນເພື່ອນ4 ຄົນ; ພວກເຂົາເຮັດຢ່າງໃດ?

4. ແມ່ນຫຍັງຄືສິ່ງທີ່ກີດກັນຄວາມເຊື່ອຂອງທ່ານ? ທ່ານຕໍ່ສູ້ມັນຢ່າງໃດ?

5. ແມ່ນຜູ້ໃດທີ່ທ່ານນຳເຂົາມາຫາພຣະເຢຊູ  ເພື່ອໃຫ້ພຣະອົງຊ່ວຍເຂົາ?

6. ທ່ານຢາກສະແດງຄວາມເຊື່ອອອກໃນທາງໃດ?

*ປຟ*

## ບົດຮຽນທີ 3
## ຈົ່ງອອກຈາກສິ່ງທີ່ຜູກມັດໄວ້

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 2:13-17, 23-3:6

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 2:13-17, 23-3:6

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຊົງຢູ່ເຫນືອສາສນາ, ຮີດຄອງ, ປະເພນີຕ່າງໆ

**ຄຳຖາມເພື່ອສຳຣວດ:** ຈະເຮັດຢ່າງໃດຄຣິສຕຽນຈຶ່ງຈະອອກຈາກສິ່ງທີ່ຜູກມັດ ສາສນາ, ປະເພນີ, ແລະຮີດຄອງຕ່າງໆ ໃຜຈະເປັນຜູ້ຕັດສິນໃຈ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະອະທິບາຍຈຸດສຳຄັນ ແລະເພື່ອນຳໄປໃຊ້ໃນຊີວິດປະຈຳວັນກ່ຽວກັບຮູ້ຈັກສັງເກດສາສນາ, ຮີດຄອງ ແລະປະເພນີ.

### ຄົ້ນຄວ້າພ້ອມກັບການປະຕິບັດ

- ຢັ້ງຢືນວ່າພຣະຄັມພີມີອຳນາດໃນການນຳພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກຄົນ
- ເສີມຂຍາຍການເຕີບໃຫ່ຍຂຍາຍຕົວຢ່າງບໍ່ຢຸດຢັ້ງ
- ຍົກສູງທຸກໆຄົນ ໂດຍເຫັນວ່າພວກເຂົາກໍແມ່ນພຣະລັກສະນະຂອງພຣະເຈົ້າ

### ຄຳນຳ

ຄອບຄົວຂອງຂ້າພະເຈົ້າໄດ້ປຸກເຮືອນຫລັງໃຫມ່ແລະກໍໄດ້ຍ້າຍເຂົ້າໄປຢູ່ແລ້ວ. ການຍົກຍ້າຍນີ້ມີຄວາມຫມາຍຢູ່ວ່າຕ້ອງມີເພື່ອນບ້ານໃກ້ຄຽງໃຫມ່, ລູກຂອງຂ້າພະເຈົ້າກໍຕ້ອງໄດ້ໄປໂຮງຮຽນໃຫມ່. ລູກສາວກົກແລະລູກສາວຫລ້າດີໃຈ ມີຄວາມກະຕືລືລົ້ນທີ່ຈະໄດ້ມີຫ້ອງເປັນຂອງຕົວເອງ ແລະຈະໄດ້ມີຫ້ອງທີ່ກວ້າງ. ແຕ່ສ່ວນລູກສາວຄົນກາງ, ເຂົາບໍ່ມັກໃນການຍົກຍ້າຍນີ້ເລີຍ. ລາວບໍ່ມັກຈະຢູ່ຫ້ອງຂອງລາວຄົນດຽວ ເພາະລາວມັກຄຸຍມັກເວົ້າກັບເອື້ອຍຂອງລາວ. ອີກຢ່າງນຶ່ງ ລາວກໍບໍ່ມັກທີ່ຈະມີຫມູ່ໃຫມ່ແລະໂຮງຮຽນໃຫມ່ ໂຮງຮຽນເກົ່າກໍດີຢູ່ແລ້ວ. ລາວບໍ່ສົນໃຈວ່າຫ້ອງຈະນ້ອຍຫລືຈະໃຫຍ່ ຈະເກົ່າຫລືຈະໃຫມ່. ລາວບໍ່ມັກໃນການຍົກຍ້າຍນີ້ເລີຍ.

### ທ້າທາຍໃນສະພາບການປັດຈຸບັນ

ຂ່າວປະເສີດມາຣະໂກ ໄດ້ບັນທຶກເຫດການທີ່ອັສຈັນນີ້ກ່ຽວກັບເຣື່ອງຝູງຊົນມີຄວາມສົນໃຈຫຼາຍໃນຄຳສັ່ງສອນຂອງພຣະເຢຊູ. ພວກເຂົາມີຄວາມສົນໃຈຫລາຍກໍເພາະວ່າຄຳສອນຂອງພຣະອົງເປັນຄຳສອນທີ່ມີສິດອຳນາດ ບໍ່ເຫມືອນຄຳສອນຂອງຜູ້ອື່ນທີ່ພວກເຂົາເຄີຍໄດ້ຟັງຜ່ານມາ. ພຣະເຢຊູສອນໂດຍບໍ່ໄດ້ອ້າງອີງໃສ່ຜູ້ໃດ. ພຣະອົງກ່າວເຖິງຕົວເອງ, ຜູ້ດຽວ, ອີງໃສ່ພຣະຄຳຂອງພຣະເຈົ້າຢ່າງດຽວ. ຄວາມເປັນຕົວເອງນີ້ ໄດ້ນຳໄປສູ່ການທ້າທາຍຫລາຍຢ່າງຕໍ່ພວກນັກທັມທັງຫລາຍ.

ບົດຮຽນອາທິດຜ່ານມານີ້ ໄດ້ແນະນຳເຖິງການຂັດແຍ້ງຕໍ່ສູ້ໃນການເຄື່ອນໄຫວປ່າວປະກາດຂອງພຣະເຢຊູ. ພຣະເຢຊູໄດ້ກ່າວແກ່ຄົນເປັ້ຽວ່າຄວາມປິດບາບຂອງທ່ານ ໄດ້ຖືກອະພັຍແລ້ວ. ພວກຟາຣີຊາຍໄດ້ຖາມວ່າໄດ້ສິດອຳນາດນີ້ມາຈາກຜູ້ໃດ. ບົດຮຽນໃນວັນນີ້ພຣະເຢຊູກໍຍັງສືບຕໍ່ເຄື່ອນໄຫວຕໍ່ໄປ ຈຶ່ງເຮັດໃຫ້ພວກຟາຣີຊາຍມີຄວາມບໍ່ພໍໃຈຫລາຍຂື້ນ.

<u>ພຣະອົງຊົງຮັບປະທານອາຫານຮ່ວມໂຕະກັບຄົນບາບ</u> (2:13-17)
ການປະຊຸມໜ້າຄັ້ງທຳອິດແມ່ນການຮຽກເອີ້ນເອົາສິດ. ພຣະເຢຊູໄດ້ອອກຄຳຮຽກເອີ້ນແບບງ່າຍໆວ່າ "ຈົ່ງຕາມເຮົາມາ" ເພິ່ນຮຽກເອີ້ນເອົາຄົນເລວີລູກອາລາຟາຍເປັນຄົນເກັບພາສີ. ການເອີ້ນເລວີນີ້ເປັນການຮຽກເອີ້ນທີ່ເປັນພື້ນຖານທີ່ສຸດ ແລະກໍເປັນການເອີ້ນແບບນຳອອກມາປ່ຽນແປງຢ່າງແທ້ຈິງ. ການເອີ້ນຄົນເກັບພາສີເຂົ້າມາເປັນສາວົກນີ້ແມ່ນເກີນຄວາມເຂົ້າໃຈທີ່ຈະທຳໄດ້ຢ່າງງ່າຍໆເຫມືອນພຣະເຢຊູ.

ຄົນເກັບພາສີແມ່ນຄົນທີ່ຖືກເລືອກໂດຍຣັຖບານກຸງໂຣມ ເພື່ອໃຫ້ເກັບພາສີຈາກຄົນຂອງຕົນເອງແລ້ວກໍນຳເງິນໄປໃຫ້ກຸງ ໂຣມ. ຄົນເກັບພາສີຍັງຖືກເອີ້ນວ່າເປັນຄົນຂາຍຊາດຂາຍຕົວເອງໃຫ້ໄປຮັບໃຊ້ປະເທດອື່ນ. ພວກເຂົາໄດ້ແຍກຕົວເອງອອກຈາກຝູງຊົນທົ່ວໄປ. ຖ້າຈະເວົ້າແລ້ວຝ່າຍຈິດວິນຍານຂອງພວກເຂົາແມ່ນບໍ່ມີເລີຍ. ພວກເຂົາຕ້ອງ "ຫລິບເປັນປີກຫລີກເປັນຫາງ" ເອົາແນ່ນອນອັນໃດກໍບໍ່ໄດ້.

ສະພາບການໄດ້ເລວຮ້າຍລົງ ພຣະເຢຊູໄດ້ເຂົ້າໄປຮັບປະທານອາຫານທີ່ເຮືອນຂອງຄົນເກັບພາສີອີກ ຊຶ່ງພວກເຂົາຖືວ່າເປັນເຮືອນຂອງຄົນຂາຍຊາດ ເຮືອນຂອງຄົນບາບ. ພຣະເຢຊູພະຍາຍາມທີ່ຈະວາງຕົວເປັນກາງ ແຕ່ພວກຟາຣີຊາຍກໍຍັງມາສອບຖາມສິດຂອງພຣະອົງວ່າ "ເປັນຫຍັງຫນໍ, ເພິ່ນຈຶ່ງຍອມຮັບປະທານ ຮ່ວມກັບຄົນນອກສິນທັມ ແລະຄົນເກັບພາສີ."

ເມື່ອພຣະອົງໄດ້ຊາບດັ່ງນັ້ນ ພຣະອົງຊົງຕອບແບບປ້ອງກັນຕົວເອງໃຫ້ພວກເຂົາຟັງວ່າ : ພຣະອົງບໍ່ໄດ້ມາເພື່ອເອີ້ນເອົາ ຄົນສິນທັມ ແຕ່ມາເອີ້ນເອົາຄົນນອກສິນທັມ ຄຳທີ່ພຣະອົງກ່າວອອກມາກ່ອນນັ້ນວ່າ ຄົນທີ່ສະບາຍບໍ່ຕ້ອງການຫມໍຢາ ແຕ່ຄົນເຈັບຕ້ອງການຫມໍ.

ຖ້າຈະເວົ້າແລ້ວ ໃນຄຳເວົ້າຂອງພຣະເຢຊູກໍແມ່ນຫມາຍຄວາມວ່າພຣະອົງສະເດັດເຂົ້າມາໃນໂລກນີ້ ເພື່ອຈະຊ່ວຍຄົນບາບ. ພຣະອົງຈະຢູ່ທຸກທີ່ທຸກບ່ອນທີ່ຄົນບາບທັງຫລາຍຕ້ອງການພຣະອົງ.

<u>ຖືສິນອົດອາຫານຫລືບໍ່ຖື</u> (2:18-22)
ໃນບົດທີ 2:18-22 ນີ້, ການຕໍ່ສູ້ຂັດແຍ້ງບໍ່ແມ່ນແຕ່ພຣະເຢຊູເທົ່ານັ້ນ ຜົດຍັງລາມມາເຖິງພວກສິດຂອງພຣະອົງນຳ. ພຣະເຢຊູຖືກຖາມວ່າ "ເຫດສັນໃດພວກສິດຂອງໂຢຮັນ ແລະສິດຂອງຟາຣີຊາຍຈຶ່ງພາກັນຖືສິນອົດອາຫານ ແຕ່ພວກສິດຂອງທ່ານບໍ່ຖື." ຄວາມຫມາຍກໍແມ່ນວ່າ ເປັນຫຍັງລູກສິດຂອງທ່ານຈຶ່ງບໍ່ມີຣະບຽບວິນັຍ, ແຕ່ສິດຂອງໂຢຮັນ ແລະ ສິດຂອງຟາຣີຊາຍ ເຂົາລະບຽບວິນັຍ. ກົດບັນຍັດຂອງຢິວແມ່ນຈຳເປັນຕ້ອງຖືສິນອົດອາຫານປີລະຄັ້ງ ຊຶ່ງເປັນວັນຊະບາໂຕ (ເລວີນິຕິ 16:29, 31;23:27,29, 32; ຈົດບັນຊີ 29:7)

- ພວກຟາຣີຊາຍ ຖືສິນອົດອາຫານອາທິດລະສອງຄັ້ງ (ລູກາ 18:12)
- ສາວົກຂອງໂຢຮັນບັບຕິສໂຕຖືສິນເປັນປະຈຳ (ມັດທາຍ 11:18; ລູກາ 7:33)
- ພຣະເຢຊູກ່າວວ່າ ພຣະອົງຊົງມາເພື່ອຄົນນອກສິນທັມ ບໍ່ແມ່ນມເພື່ອຄົນຊອບທັມ (ມັດທາຍ 11:19; ລູກາ 7:34)

ພຣະເຢຊູຊົງຮັບຜິດຊອບຕໍ່ຄໍາຖາມນັ້ນວ່າ ເມື່ອເຈົ້າບ່າວຍັງຢູ່ນໍາເຂົາເພື່ອນຂອງເຈົ້າບ່າວຈະບໍ່ອົດອາຫານ ແຕ່ເມື່ອເຈົ້າບ່າວຊົງຈາກພວກເຂົາໄປແລ້ວການອົດອາຫານຈຶ່ງຈະເລີ້ມຕົ້ນ. ຕໍ່ຈາກນັ້ນພຣະອົງກໍໄດ້ຍົກຄໍາອຸປມາສອງເຣື່ອງມາສົມທຽບ ຄືເຣື່ອງຜ້າໃຫມ່ແລະຜ້າເກົ່າ ແລະເຫລົ້າແວງເກົ່າກັບເຫລົ້າແວງໃຫມ່.
ໃນນີ້ພຣະອົງມີພຣະປະສົງໃຫ້ພວກເຂົາເຂົ້າໃຈວ່າ ອັນເກົ່າແລະອັນໃຫມ່ແມ່ນເຂົ້າກັນບໍ່ໄດ້. ໂຢຮັນກັບພວກຟາຣີຊາຍແມ່ນກົດຣະບຽບອັນເກົ່າ ພຣະເຢຊູແມ່ນແນະນໍາອັນໃຫມ່.

**<u>ທໍາງານໃນວັນຊະບາໂຕ</u>** (2:23-27)
ວັນນັ້ນເປັນວັນຊະບາໂຕ ພຣະເຢຊູພ້ອມດ້ວຍສາວົກຂອງພຣະອົງກໍາລັງຍ່າງຜ່ານທົ່ງນາ. ເມື່ອກໍາລັງຍ່າງໄປຢູ່ນັ້ນພວກສິດຂອງພຣະອົງກໍເລີ້ມຕົ້ນເດັດຮວງເຂົ້າແລະເກັດເຂົ້າໄປນໍາ. ພວກຟາຣີຊາຍເມື່ອເຫັນດັ່ງນັ້ນກໍມາແຈ້ງພຣະເຢຊູວ່າ "ເບິ່ງແມ, ເປັນແນວໃດພວກສິດຂອງທ່ານຈຶ່ງເຮັດຜິດຕໍ່ກົດວັນຊະບາໂຕ." ຖ້າຈະເວົ້າແລ້ວພວກນີ້ເປັນພວກມັກຫາເຣື່ອງ ຊອກຫາຈະຈັບຜິດຄົນອື່ນຢູ່ຕລອດເວລາ. ເຂົາຢາກຫາເຣື່ອງວ່າພວກສິດຂອງພຣະເຢຊູລັກເຂົ້າຂອງຄົນອື່ນກິນ ແລະອີກຂໍ້ນຶ່ງກໍວ່າເກັບກ່ຽວໃນວັນຊະບາໂຕ.

ພຣະເຢຊູຊົງຕອບພວກເຂົາເປັນສອງແງ່ດັ່ງນີ້:
**ຕໍ່ພວກຟາຣີຊາຍ** -- ພວກທ່ານບໍ່ໄດ້ອ່ານຈັກເທື່ອຫລື ຊຶ່ງດາວິດໄດ້ກິນອາຫານຈາກແທ່ນບູຊາ ແລ້ວກໍແບ່ງປັນໃຫ້ພັກພວກຂອງຕົນກິນນໍາ ຊຶ່ງພຣະບັນຍັດຫ້າມບໍ່ໃຫ້ໃຜກິນນອກຈາກປະໂລຫິດເທົ່ານັ້ນ. (2:25-26; 1ຊາມູເອນ 21:1-6)
**ຕໍ່ກົດວັນຊະບາໂຕ**-- ວັນຊະບາໂຕແມ່ນສ້າງຂຶ້ນມາແລະຕັ້ງໄວ້ເພື່ອມະນຸດ ບໍ່ແມ່ນສ້າງມະນຸດຂຶ້ນມາ ເພື່ອວັນຊະບາໂຕ ເຫດສັນນັ້ນບຸດມະນຸດຈຶ່ງເປັນເຈົ້າຂອງວັນຊະບາໂຕ. (2:27-28)

ພຣະເຢຊູບໍ່ໄດ້ປະຕິເສດເຣື່ອງການເຮັດຜິດວັນຊະບາໂຕ ແຕ່ພຣະອົງຊົງເຂົ້າໄປຫາຫມາກຫົວໃຈຂອງພຣະບັນຍັດແລ້ວນໍາອອກມາໃຫ້ເຫັນເຖິງຈຸດສໍາຄັນທັນທີ. ພຣະອົງບໍ່ໄດ້ໂຕ້ຖຽງ ແຕ່ພຣະອົງຊົງບອກວ່າແມ່ນໃຜເປັນເຈົ້າຂອງຂອງພຣະບັນຍັດ.

**<u>ຊົງປົວຄົນມືລີບໃນວັນຊະບາໂຕ</u>** (3:1-6)
ໃນວັນດຽວກັນນັ້ນ ພຣະອົງໄດ້ສະເດັດເຂົ້າໄປໃນໂຮງທັມເທສນາ. ພຣະອົງໄດ້ເຫັນຄົນມືລີບຄົນນຶ່ງ. ພວກຟາຣີຊາຍກໍຍິ່ງຊອມເປັນການໃຫຍ່ວ່າພຣະອົງຈະເຮັດຢ່າງໃດ ເພື່ອຈະໄດ້ມີຄໍາພະຍານໃນການຟ້ອງໃຫ້ແນ່ນອນຂຶ້ນ. ເຫມືອນດັ່ງທີ່ກ່າວຜ່ານມາແລ້ວວ່າ ພຣະອົງຊົງຊາບເຖິງຈິດໃຈຂອງພວກເຂົາ. ພຣະອົງຊົງຖາມພວກເຂົາ (3:4) ວ່າ "ໃນວັນຊະບາໂຕຄວນຈະເຮັດການດີ ຫລືຈະເຮັດການຊົ່ວ; ຈະເອົາຊີວິດຫລືຈະຂ້າຊີວິດ" ພຣະອົງໃຊ້ສໍານຽງຄໍາເວົ້າແບບເຄັ່ງຂຶມ ຫຍໍ້ໆ. ພວກເຂົາພາກັນມິດງຽບຢູ່ບໍ່ປາກ. ພຣະອົງຊົງຫນັກໃຈເພາະໃຈຂອງເຂົາແຂງກະດ້າງ, ປົກຕັນຫຼາຍ. "ຈົ່ງຢຽດມືອອກ" (2:5) ຄົນມືລີບກໍຢຽດມືອອກ ແລ້ວມືເຂົາກໍຫາຍເປັນປົກກະຕິ.

ທັງຫມົດນີ້ສະແດງວ່າ 7 ວັນແມ່ນດີຫມົດຖ້າເຈົ້າຫາກກະທໍາດີ, ພວກຟາຣີຊາຍແລະພວກຂອງເຮໂຣດກໍປຶກສາກັນຫາວິທີຈະທໍາລາຍພຣະອົງ. (2:6)

**ຄໍາແນະນໍາແລະພາກປະຕິບັດ:**
ພຣະເຢຊູຊົງຕໍ່ສູ້ກັບການຂັດແຍ້ງຕ່າງໆ ດ້ວຍການສິດສອນພື້ນຖານ. ພຣະອົງຖືກໂຈມຕີໂດຍການຫາວ່າເປັນຜູ້ລົບລ້າງບັນຍັດ, ພຣະອົງບໍ່ຢູ່ໃນຂໍ້ຫ້າມ ພຣະອົງຊົງລ່ວງລະເມີດປະເພນີຂອງຢິວ. ພຣະອົງບໍ່ຍອມກົ້ມຫົວ(ພຣະສຽນ)ໃຫ້ແກ່ການປົກຄອງຂອງຜູ້ໃດ.

ຖ້າຢູ່ໃນພຣະເຢຊູ  ແມ່ນຕ້ອງປະລະສິ່ງທີ່ກີດຂວາງ ບໍ່ດັ່ງນັ້ນທ່ານຈະປະປົນກັນບໍ່ໄດ້ເດັດຂາດ.  ຫລືບໍ່ດັ່ງນັ້ນທ່ານຈະບໍ່ໄດ້ອັນໃດເລີຍ.

**<u>ຄຳຖາມ:</u>**

1. ມີກົດຣະບຽບໃດແດ່ທີ່ທ່ານຖືເປັນປະຈຳ ໃນການນັບຖືສາສນາ? ໂດຍອີງໃສ່ພຣະຄັມພີ

2. ມີປະເພນີ ອັນໃດແດ່ທີ່ບໍ່ເຂົ້າກັບສະພາບການໃນສມັຍນີ້?

3. ມີການເສັຽຫາຍຢ່າງໃດແດ່ ທີ່ຟັງແຕ່ຣະບຽບ ຮີດຄອງ ແຕ່ບໍ່ຟັງພຣະຄຳຂອງພຣະເຈົ້າ?

4. ຖ້າເຮັດການດີ "ຜິດບໍ່" ? (ສົນທະນາ)

5. ຈະຮັບຜິດຊອບຢ່າງໃດຖ້າພຣະເຢຊູຫາກບອກວ່າ ຈົ່ງປະລະສິ່ງທີ່ຜູກມັດ ໃນສາສນາ ແລະຮີດຄອງປະເພນີຕ່າງໆ?

*ປພ*

# <u>ບົດຮຽນທີ 4</u>
# <u>ຫລາຍເກີນກວ່າສິ່ງເຫັນເຕັມຕາ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 4:21-34

**<u>ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:</u>** ມາຣະໂກ 4:1-34

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ອົງພຣະເຢຊູຊົງຄືຜູ້ໃດ ແລະຜົນປໂຍດຂອງການປະກາດຂອງພຣະອົງນັ້ນເປັນສິ່ງເກີນກວ່າສິ່ງທີ່ເຮົາເຫັນກັບຕາຫລາຍເທົ່າ.

**<u>ຄຳຖາມເພື່ອການສຳຣວດ:</u>** ໃນເມື່ອພະລັງແລະວິທີຂອງໂລກເຫັນວ່າໃຊ້ໄດ້ຜົນດີ, ແລະມັນເປັນການສົມຄວນບໍ່ທີ່ເຮົາຈະເອົາຄວາມຫວັງ ແລະອະນາຄົດໄວ້ໃນອົງພຣະເຢຊູແລະວິທີທາງຂອງພຣະອົງ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະເອົາຄຳອຸປະມາຂອງພຣະເຢຊູມາໃຊ້ໃນຄຣິສຕະຈັກ ແລະໃນຊີວິດປະຈຳວັນຂອງເຮົາ.

**<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ຢັ້ງຢືນວ່າພຣະຄຳພີມີພະລັງແລະອຳນາດເພື່ອຈະເອົາມາປະກອບໃຊ້ໃນຊີວິດ ແລະການຮັບໃຊ້
- ແບ່ງປັນຂ່າວປະເສີດກັບທຸກງຄົນ
- ເສີມສ້າງຄວາມຈະເຣີນໃຫຍ່ຂຶ້ນ ແລະຄວາມເຊື່ອທີ່ມີຊີວິດຊີວາ
- ການຕັດສິນໃຈເຂົ້າຮ່ວມເປັນຄອບຄົວຂອງພຣະເຈົ້າແລະຮັບໃຊ້
- ຝຶກສອນຄົນອື່ນໃຫ້ເປັນຜູ້ນຳຮັບໃຊ້

## <u>ບົດນຳ</u>

ໂດຍທາງຄຳອຸປະມາສາມຢ່າງ ອົງພຣະເຢຊູໄດ້ແຕ້ມຮູບຂອງພຣະອົງວ່າເປັນຜູ້ໃດ ແລະສິ່ງທີ່ເປັນໄປໄດ້ຢ່າງບໍ່ມີຂອບເຂດຈຳກັດເລີຍ. ຂ້າພະເຈົ້າໄດ້ໃສ່ແວ່ນຕາແຕ່ຍັງຮຽນຢູ່ຫ້ອງ ປ. 4 ແລະດຽວນີ້ຂ້າພະຈົ້າມີອາຍຸ 19 ປີ. ຂ້າພະເຈົ້າເປັນຄົນຕາບອດແທ້ງຕາມຫລັກຂອງທ່ານໝໍ. ຕາກ້ຳດີຂອງຂ້າພະເຈົ້າໄດ້ເສັຽຂຶ້ນແຕ່ລະວັນ ເຖິງ 20/1600 ແລະຕາກ້ຳເສັຽຫລາຍນັ້ນແມ່ນ 20/2000. ຕາມປົກກະຕິແລ້ວ ຖ້າໃຜມີສະພາບຢ່າງນີ້ແມ່ນບໍ່ເຫັນຫຍັງເລີຍ. ດັ່ງນັ້ນ, ຂ້າພະເຈົ້າບໍ່ເຄີຍເຫັນນ້ຳທະເລຈັກເທື່ອ ຈົນເຖິງເວລາຈົມລົງໃນນ້ຳທະເລຈຶ່ງຮູ້ສຶກວ່າຕົນເອງເຫັນນ້ຳທະເລ. ເວລາໄປເບິ່ງເຕະບານ ຂ້າພະເຈົ້າຕ້ອງໃຊ້ກ້ອງສ່ອງ, ໃນຫ້ອງຮຽນຂ້າພະເຈົ້າໄດ້ນັ່ງແຖວໜ້າໝູ່. ເວລາຄົພິມໜັງສືຕ້ອງໃຊ້ໂຕໜັງສືຂນາດໃຫຍ່ເຖິງ 48.

ຂ້າພະເຈົ້າຈຳເປັນຕ້ອງເຂົ້າປາດຕາໂດຍໃຊ້ແສງ ເຣເຊີ ເພື່ອຈະເບິ່ງເຫັນໄດ້ດີ 20/20. ຄົນເສັຽຕາ 20/2000 ສາມາດເບິ່ງເຫັນໄດ້ ແຕ່ເຂົາບໍ່ສາມາດເຫັນແຈ້ງດີເທົ່ານັ້ນ. ໃຫ້ພວກເຮົາພາກັນເຂົ້າໄປໃນດົງປ່າຂອງ ພຣະເຈົ້າ. ຖ້າທ່ານຢາກເບິ່ງເຫັນໃບໄມ້ ແລະເຫັນຢ່າງລະອຽດແຈ້ງດີນັ້ນ ທ່ານຕ້ອງການໃຫ້ພຣະເຈົ້າຊ່ວຍ ພຣະອົງຜູ້ເປັນທ່ານໝໍຕາອົງຍິ່ງໃຫຍ່. ພວກເຮົາຕ້ອງເຂົ້າໃກ້ສນິດກັບພຣະອົງທີ່ສຸດ ເພື່ອພຣະອົງປ່ຽນແປງສາຍຕາຂອງເຮົາ.

ໃນຄຳອຸປະມາສາມຢ່າງຂອງອົງພຣະເຢຊູທີ່ເຮົາຈະໄດ້ສຶກສານຳກັນນີ້, ພວກເຮົາຈະສາມາດຄົ້ນພົບສິ່ງທີ່ອາດເປັນໄປໄດ້ເກີນກວ່າເບິ່ງເຫັນດ້ວຍຕາເປົ່າ.

## 1. <u>ຄຳອຸປະມາເລື່ອງໂຄມໄຟ</u> (4:21-25)

ຄຳອຸປະມາເລື່ອງໂຄມໄຟນີ້ມີຫລາຍໆຄົນໄດ້ອ້າງເຖິງເປັນປະຈຳ, ຄຳອຸປະມາເລື່ອງເມັດພືດ (ມາຣະໂກ 4:1-20) ພຣະອົງໄດ້ສອນພວກສາວົກເຖິງຈຸດປະສົງຂອງເລື່ອງ. ໂຄມໄຟໃນຄຳອຸປະມານີ້ແມ່ນໂຄມທີ່ເຮັດດ້ວຍດິນດາກທີ່ທຸກໆເຮືອນໃຊ້. ໂຄມໄຟນີ້ນ້ອຍໆພໍໃສ່ນ້ຳມັນໄດ້ສອງສາມອອນ. ໂຄມໄຟນີ້ໄທບ້ານໄດ້ເອົາຢອງໄວ້ເທິງບ່ອນສູງໃນເຮືອນເພື່ອມັນຈະໄດ້ສ່ອງແສງໄປທົ່ວທຸກບ່ອນ.

ໂຄມໄຟມີຂຶ້ນເພື່ອເຍືອງແສງສວ່າງໃນສາມປະເດັນ. ນຶ່ງ, ໂຄມໄຟໃຊ້ນຳພາ. ສອງ, ໂຄມໄຟຂັບໄລ່ຄວາມມືດໃນບ້ານເຮືອນ. ສາມ, ໂຄມໄຟໄດ້ເປີດເຜີຍສິ່ງທີ່ບັງໄວ້, ເຊື່ອງໄວ້, ປົກໄວ້. ໝາຍຄວາມວ່ານຳພາເຂົ້າມາໃນບ່ອນແຈ້ງໂດຍບໍ່ມີຫຍັງປົກບັງ (4:22). ພວກເຮົາເວລາເບິ່ງໃນກະຈົກເຫັນວ່າງາມ, ແຕ່ເມື່ອເປີດໄຟຂຶ້ນແລ້ວບໍ່ຄອຍດີໃຈເພາະມີສິ່ງທີ່ບໍ່ຢາກເຫັນ.

ຂ້າພະເຈົ້າໄດ້ຢູ່ຄຸ້ມເກົ່າແກ່ແລະມີເຄື່ອງໃຊ້ຫລາຍໃນເຮືອນ. ຂ້າພະເຈົ້າມັກຂອງບູຮານ. ແຕ່ເປັນໜ້າເສັຽໃຈຂອງເກົ່າໆນັ້ນມັກຕົກແຕກງ່າຍ. ຂ້າພະເຈົ້າມີໂຄມໄຟບູຮານໃຫ້ຫ້ອງຮັບແຂກ ແຕ່ໂຄມໄຟນັ້ນມີບັນຫາເພາະມັນໃຊ້ບໍ່ໄດ້. ເຖິງມັນຈະເກົ່າແຕ່ກໍຍັງງົດງາມສວມຄວນ ແຕ່ເຫັນວ່າມັນໝົດຄວາມເປັນໂຄມໄຟເສັຽແລ້ວເພາະມັນບໍ່ສາມາດສົ່ງແສງສວ່າງອອກໄປໄດ້ອີກ. ເຊັ່ນດຽວກັນ ພຣະເຈົ້າສ້າງເຮົາມາບໍ່ໃຫ້ເປັນຄົນຈົບງາມເທົ່ານັ້ນ ແຕ່ສ້າງເຮົາມາເພື່ອຈະສົ່ງແສງສວ່າງອອກໄປ.

ອົງພຣະເຢຊູໄດ້ສອນໃຫ້ລະວັງເລື່ອງໂຄມໄຟແລະຫ້ອງນອນ. ຖ້ວຍສາມາດບັງແສງສວ່າງ. ບ່ອນນອນອາດແມ່ນສາດໃນພື້ນເຮືອນເຮັດໃຫ້ແສງສວ່າງກວ້າງອອກໄປ. ພວກເຮົາໄດ້ປະສົບກັບການທ້າທາຍຂອງຖ້ວຍແລະບ່ອນນອນ, ຄືການຍອມຜ່ອນສັ້ນຜ່ອນຍາວ, ຢູ່ຊື່ໆ, ແລະເຮັດຕາມໃຈ. ສິ່ງເຫລົ່ານີ້ເປັນສິ່ງມອດແສງສວ່າງໄດ້.

ກ່ອນຈະເວົ້າເຖິງຄຳອຸປະມາໃໝ່, ອົງພຣະເຢຊູໄດ້ອອກຄຳສັ່ງສຳຄັນໃນບົດນີ້. ພວກເຮົາຕ້ອງຟັງສິ່ງທີ່ພຣະອົງກ່າວ (4:23). ຄຳເວົ້າໄດ້ຍິນແມ່ນຍອມຟັງໂດຍຄວາມຕັ້ງໃຈ. ແລະພຣະອົງໄດ້ສັນຍາ ແລະເຕືອນພວກເຮົາ. ພຣະເຈົ້າໄດ້ອວຍພຣະພອນຂຶ້ນກັບການປະຕິບັດຮັບໃຊ້ພຣະອົງ. ພວກເຮົາຮັບເອົາແລະຕອບສນອງ ໃນທີ່ສຸດກໍໄດ້ ຮັບເພີ້ມຂຶ້ນ (4:24). ຂໍ້ສຳຄັນບໍ່ແມ່ນວ່າເຮົາມີຫລາຍ ແຕ່ແມ່ນເອົາສິ່ງທີ່ມີຢູ່ມາໃຊ້ໃຫ້ເປັນປໂຍດ. ສຳລັບຜູ້ທີ່ບໍ່ເຊື່ອຟັງ ພວກເຂົາຈະໄດ້ຮັບການສູນເສັຽອັນຍິ່ງໃຫຍ່. ພຣະເຢຊູໄດ້ໃຊ້ຄຳເວົ້າຂອງພວກນັກບັນຊີທີ່ວ່າ ຜູ້ທີ່ບໍ່ເຊື່ອຟັງຈະເປັນໜີ້ຈົນກຽງ.

## 2. <u>ຄຳອຸປະມາຂອງເມັດພືດ</u> (4:26-29)

ຄຳອຸປະມາໃນປື້ມມາຣະໂກນີ້ເປັນຈຸດພິເສດ. ອົງພຣະເຢຊູໄດ້ສອນເຖິງເລື່ອງການຫວ່ານພືດທີ່ກາຍເປັນການເກັບກ່ຽວອັນໃຫຍ່. ອົງພຣະເຢຊູໄດ້ເລີ້ມສອນຄຳອຸປະມາທີ່ເວົ້າເລື່ອງດິນສີ່ຢ່າງ (4:1-20). ພຣະອົງໄດ້ສລູບເອົາສອງເລື່ອງທີ່ເວົ້າເຖິງດິນ<u>ດີ</u>. ເມັດພືດໝາຍເຖິງຄຳເວົ້າຂອງພຣະເຈົ້າ. ການເກັບກ່ຽວໝາຍເຖິງຣາຊອານາຈັກຂອງພຣະເຈົ້າ, ຫລືການກະທຳຂອງພຣະເຈົ້າໃນຊີວິດຂອງຜູ້ເປັນບຸດຂອງພຣະອົງ. ພຣະເຢຊູໄດ້ເປີດເຜີຍເຖິງການກ່ຽວສາມຂັ້ນຕອນ. ສາມຂັ້ນຕອນນີ້ອາດເອີ້ນໄດ້ວ່າ, <u>ປູກ, ໃຫຍ່ຂຶ້ນ, ແລະຕັດອອກ</u>. ໜ້າທີ່ຂອງພວກເຮົາຄືຫວ່ານພືດນັ້ນລົງ. ພຣະເຈົ້າເປັນຜູ້ຈັດການເກັບກ່ຽວຊຶ່ງກາຍເປັນການສລອງອັນຍິ່ງໃຫຍ່ຂອງຜູ້ເປັນບຸດ.

ວິທີການຄືໃຫ້ເລີ້ມດ້ວຍການຫວ່ານພືດດ້ວຍຄວາມເອົາໃຈໃສ່. ໃຫ້ສັງເກດເບິ່ງ, ເຣື່ອງນີ້ບໍ່ໄດ້ເວົ້າເຖິງພືດຈຳນວນຫລາຍທີ່ຫວ່າງອອກໄປ. ໜ້າທີ່ຂອງພວກເຮົາໃຫ້ຫວ່ານພືດເທົ່າທີ່ເຮົາມີ. ພຣະເຈົ້າຈະເປັນຜູ້ຮັບຜິດຊອບໃນການເກີດຜົນ. ພືດທີ່ດີຫວ່ານລົງໃນດິນດີຍ່ອມເກີດຜົນດີ. ພວກເຮົາຕ້ອງເປັນຄົນເອົາໃຈໃສ່ໃນການຫວ່ານ.

ຂັ້ນຕໍ່ໄປແມ່ນໃຫ້ຣຽນອົດທົນ. "ແລ້ວກາງຄືນກໍນອນຫລັບ ກາງເວັນກໍຕື່ນຂຶ້ນ ຝ່າຍກ້ານັ້ນມັນງອກຈະເຣີນຂຶ້ນຢ່າງໃດລາວກໍບໍ່ຮູ້ຈັກ" (4:27). ພຣະເຈົ້າໄດ້ກະທຳກິຈການຫລາຍເວລາເຮົານອນຫລັບ ຫລາຍກວ່າເວລາເຮົາຕື່ນ. ການຈະເຣີນເກີດຂຶ້ນເວລາກາງຄືນ, ທີ່ເປັນພາຣະກິດອັນປະເສີດຂອງພຣະເຈົ້າ. ການຈະເຣີນໃຫຍ່ຂຶ້ນໃນຊີວິດຂອງຜູ້ທີ່ເຊື່ອນັ້ນແມ່ນວຽກງານຂອງພຣະເຈົ້າເທົ່ານັ້ນກ່ຽວກັບອານາຈັກຂອງພຣະອົງ. ການສຶກສາພຣະຄຳພີເປັນສິ່ງຈຳເປັນທີ່ສຸດ, ການສຶກສາແລະການອ້ອນວອນເປັນພຽງ<u>ການຕຽມ</u>ເຮັດໃຫ້ພວກເຮົາຈະເຣີນຂຶ້ນ. ການຈະເຣີນເຕີບໃຫຍ່ຂຶ້ນທີ່ແທ້ຈິງນັ້ນພວກເຮົາບໍ່ສາມາດເຫັນໄດ້ດ້ວຍຕາເປົ່າ, ແຕ່ດ້ວຍສິພຣະທັດຂອງພຣະອົງ.

ຂັ້ນຕອນສຸດທ້າຍແມ່ນການເກັບກ່ຽວດ້ວຍຄວາມຍິນດີ. ຂີ້ດິນໄດ້ຜະລິດຜົນ "ດ້ວຍຕົວມັນເອງ" (4:28). ນັ້ນເປັນກົດລັບເຖິງຄວາມສຳພັນລະຫວ່າງແກ່ນພືດແລະດິນ. ເຣື່ອງນີ້ໄດ້ສອນພວກເຮົາສອງຢ່າງ. ພວກເຮົາຕ້ອງເຂົ້າປະກອບສ່ວນກັບຣາຊອານາຈັກຂອງພຣະເຈົ້າ. ພວກເຮົາໄດ້ຫວ່ານພືດ ແຕ່ພຣະເຈົ້າເປັນຜູ້ເຮັດໃຫ້ພືດນັ້ນໃຫຍ່ຂຶ້ນ. ຜູ້ຫວ່ານໄດ້ອອກໄປເກັບກ່ຽວເອົາຜົນລະປູກທີ່ລາວພຽງແຕ່ຫວ່ານລົງໃນດິນເທົ່ານັ້ນ.

### 3. <u>ຄຳອຸປະມາເຣື່ອງແກ່ນຜັກກາດ</u> (4:30-32)

ອົງພຣະເຢຊູໄດ້ສລູບການສອນເຖິງເຣື່ອງພຣະຣາຊອານາຈັກ ໂດຍຍົກເອົາແກ່ນຜັກກາດຊຶ່ງນ້ອຍໆຂຶ້ນມາເວົ້າ ແຕ່ແກ່ນຜັກກາດນັ້ນສາມາດກາຍເປັນຜົນເຣື່ອງໃຫຍ່ໄດ້. ຄຳອຸປະມາສຸດທ້າຍນີ້ສັ້ນ ໃຊ້ຄຳເວົ້າພຽງຫົກສິບຫ້າຄຳ ແລະສາມາເຫລົ່າໄດ້ງ່າຍໃຊ້ເວລາປະມານສິບຫ້າວິນາທີ. ທັມະດາແລ້ວບົດເທສນາອັນນຶ່ງຍາວກວ່ານີ້ຮ້ອຍເທົ່າ. (ທີ່ຕ້ອງໃຊ້ເວລາປະມານ 25 ນາທີ).

ນີ້ເປັນເຣື່ອງເມັດຜັກກາດທີ່ມີຈຸດປະສົງສາມຢ່າງ. ໃບນັ້ນທັມະດາແລ້ວໃຊ້ໄວ້ກິນເປັນຜັກ, ສ່ວນເມັດນັ້ນໃຊ້ເປັນເຄື່ອງຫອມ ແລະເປັນຢາປົວພະຍາດ. ແກ່ນຜັກກາດມີຂະນາດນ້ອຍເທົ່າເຂັມກົ້ນຕັນ. ຊາວພັນແກ່ນມີນ້ຳໜັກພຽງອອນດຽວ. ໃນປະເທດປາແຣສຕິນແກ່ນຜັກກາດນ້ອຍໆສາມາດກາຍເປັນຕົ້ນໄມ້ໃຫຍ່ ມີຄວາມສູງໄດ້ປະມານສິບຟິດ. ອົງພຣະເຢຊູໄດ້ກ່າວວ່າ "ແກ່ນຜັກປູກໃນສວນ" ສາມາດຜະລິດ "ເປັນຕົ້ນໄມ້ໃຫຍ່ທີ່ນົກປ່າໃນອາກາດສາມາດມາເຮັດຮັງໃສ່ໄດ້." (4:32)

ຄົນມັກຟັງເຣື່ອງຄຳປຽບທຽບຊຶ່ງເປັນຄຳອຸປະມາເຣື່ອງເມັດຜັກກາດນີ້ຫລາຍ ຊຶ່ງມີຄວາມໝາຍເລິກເຊິ່ງແລະເລິກລັບທີ່ສຸດ. ບາງຄົນຕີຄວາມໝາຍວ່ານົກປ່ານັ້ນແມ່ນພວກຕ່າງຊາດ. ກິ່ງນັ້ນໝາຍເຖິງຄຣິສຕະຈັກ. ສ່ວນແກ່ນຜັກນ້ອຍແມ່ນຄຳເວົ້າອອກຈາກປາກຂອງເດັກຫນຸ່ມນ້ອຍ. ກ້ອງຫົ່ມໄມ້ແມ່ນບ່ອນລີ້ລົມພະຍຸຂອງຊີວິດ.

ການຕີຄວາມໝາຍພຣະຄຳພີບໍ່ແມ່ນວິທີຂອງນັກວິທະຍາສາດ, ແຕ່ພາຣະຂອງພວກເຮົາບໍ່ແມ່ນຊອກຫາລັກສູດດັ່ງກ່າວມາໃຊ້, ແຕ່ພວກເຮົາຕ້ອງເອົາຫລັກການມາຫມູນໃຊ້ໃນຊີວິດ. ໃນບົດນີ້ມີຫລັກການສາມຢ່າງ.

ນຶ່ງ, ຂະບວນການໃຫຍ່ເລີ້ມດ້ວຍສິ່ງນ້ອຍໆ. ພວກນັກປາດໄດ້ຕີຄວາມໝາຍບົດນີ້ວ່າ ແມ່ນການຂຍາຍແຜ່ອອກໄປຂອງຄຣິສຕຽນ, ຄຣິສຕະຈັກ, ແລະຣາຊອານາຈັກ. ເປັນຄວາມຈິງການຂຍາຍແຜ່ອອກໄປຂອງຄຣິສຕຽນໄດ້ເກີດຂຶ້ນກັບໂລກທີ່ບໍ່ເຄີຍມີມາກ່ອນ. ພວກເຮົາໄດ້ເຫັນແກ່ນຜັກກາດໄດ້ເກີດຂຶ້ນ ຄືຄຣິສຕະຈັກຕາມບ້ານເມືອງທີ່ອ້ອມຮອບເຮົາໃນທຸກມື້ນີ້. ແກ່ນຜັກກາດອາດແມ່ນຄົນເຊື່ອໃໝ່, ເດັກເກີດໃໝ່, ຄວາມຄິດໃໝ່ໆ. ດຣ. ຈິມ ແດນີຊັນຜູ້ເປັນອ້າຍແລະຂ້າພະເຈົ້າເຄີຍຂີ່ຣົດເມໄປໂບດຊາວກວ່າປີມາແລ້ວ ພວກເຮົາທັງສອງກາຍເປັນສິດຍາພິບານ ແລະເປັນຜູ້ຫວ່ານເມັດພືດ.

ສອງ, ອົງພຣະເຢຊູໄດ້ກ່າວເປັນຄວາມຈິງຢູ່ວ່າ, "ເມື່ອຫວ່ານແລ້ວມັນກໍງອກຈະເຣີນໃຫຍ່ຂຶ້ນ." (4:32). ໜ້າທີ່ຂອງພວກເຮົາຄືໃຫ້ຫວ່ານໄປເລື້ອຍໆ, ພຣະເຈົ້າຈະເປັນຜູ້ເຮັດໃຫ້ມັນໃຫຍ່ຂຶ້ນ. ພວກເຮົາທຸກໆຄົນມີໜ້າທີ່ຄືກັນ

ໃນການເປັນຄຣິສຕຽນ. ພຣະເຈົ້າຕ້ອງການໃຫ້ພວກເຮົາປະຕິບັດຢ່າງສຸດຄວາມສາມາດ, ແຕ່ພະລັງ, ການເຕີບໃຫຍ່, ແລະຈະເຣີນຂື້ນນັ້ນແມ່ນພາຣະກິດຂອງພຣະເຈົ້າ. ສິ່ງນີ້ແມ່ນຫລັກຄຳສອນເຖິງຄວາມອຸປະມາໃນພຣະຄັມພີ ໃໝ່.

ສາມ, ພວກເຮົາເປັນເໝືອນແກ່ນຜັກທີ່ປູກ, ມີຊີວິດຢູ່ເພື່ອຈະຮັບໃຊ້ຄົນອື່ນ. ແກ່ນຜັກກາດນັ້ນໄດ້ປ່ຽນແປງສະພາບການຂອງຄົນຈຳນວນໃຫຍ່. ເປັນຜັກ, ເປັນເຄື່ອງຫອມ, ເປັນທີ່ພັກ, ແລະເປັນຢາປົວພະຍາດ ສິ່ງເຫລົ່ານີ້ເກີດຂື້ນໄດ້ກໍຍ້ອນແກ່ນຜັກກາດນ້ອຍໆເທົ່ານັ້ນທີ່ຕົກລົງດິນດີ. ຄົນເຊື່ອທຸກໆຄົນໄດ້ຖືກເອີ້ນ ແລະໃຫ້ປະກອບສ່ວນໃນຮ່າງກາຍຂອງພຣະຄຣິດ, ໃນຄຣິສຈັກ, "ພຣະເຈົ້າໄດ້ຊົງບັນດານໃຫ້ອະວັຍຍະວະທຸກສ່ວນເຂົ້າເປັນອັນດຽວກັນ" (1 ໂກຣິນໂທ 12:24) ເພື່ອຈະປະຕິບັດຮັບໃຊ້ໄດ້ດີກວ່າການແຍກກັນ. ຈຸດສຳຄັນແລ້ວບໍ່ແມ່ນຂນາດຂອງເມັດຜັກ ແຕ່ແມ່ນ ດິນທີ່ໄດ້ຫວ່ານລົງນັ້ນ.

## 4. <u>ເປັນທາງດີທີ່ສຸດທີ່ຈະສອນ</u> (4:33-34)

ຄຳສອນເຫລົ່ານີ້ຈະເປັນການສິດສອນອັນຍິ່ງໃຫຍ່ໃນໂຮງຮຽນພຣະຄຣິສຕະທັມ ເຖິງການສອນ ແລະເທສນາ. ວິທີທາງສອງຢ່າງເຫັນວ່າຢູ່ໃນນີ້: ຄຳສອນທີ່ຖືກຕ້ອງ ແລະວິທີການທີ່ຖືກຕ້ອງ. ຄຳສອນຄື ຂ່າວປະເສີດ ຫລື ຂ່າວດີ ນັ້ນບໍ່ມີການປ່ຽນແປງ. ແຕ່ວ່າວິທີການນັ້ນຕ້ອງມີການປ່ຽນແປງເພື່ອໃຫ້ຖືກສະພາບການຂອງຜູ້ຟັງ. ອາຈານໂປໂລ ຈຶ່ງໄດ້ກ່າວວ່າ, "ເຮົາຍອມເປັນຄົນທຸກຊະນິດເພື່ອເຫັນແກ່ຄົນທັງປວງ ເພື່ອເຮົາຈະໄດ້ຊ່ອຍບາງຄົນໃຫ້ພົ້ນ ດ້ວຍທຸກວິທີທາງ" (1 ໂກຣິນໂທ 9:22). ອົງພຣະເຢຊູໄດ້ໃຊ້ພາສາປາກເວົ້າຂອງຄົນໃນສມັຍນັ້ນພວກເຮົາຈຳເປັນຕ້ອງເຮັດເໝືອນກັນ. ພວກເຮົາຈະໄດ້ສຶກສານຳກັນເຖິງວິທີການສີ່ຢ່າງ.

ນຶ່ງ, ພຣະເຢຊູໄດ້ບອກເຖິງປະວັດເຣື່ອງຄວາມເປັນມາ. "ພຣະອົງບໍ່ໄດ້ກ່າວສິ່ງໃດທີ່ບໍ່ໄດ້ໃຊ້ຄຳອຸປະມາ" (4:34). ຂໍ້ 33 ໄດ້ແນະນຳວ່າ ພຣະເຢຊູໄດ້ບອກເຖິງປະວັດເຣື່ອງຕ່າງໆໂດຍທີ່ພຣະຄັມພີບໍ່ໄດ້ຈົດໄວ້ໝົດ. "ມີຫລາຍເຣື່ອງເປັນຄຳອຸປະມາທີ່ພຣະເຢຊູໄດ້ກ່າວກັບພວກເຂົາ..." (4:33). ຜູ້ເປັນຄຣູສອນຕ້ອງການຟັງຄຳສອນຂອງອົງພຣະເຢຊູ ແລະພວກຄຣູສອນຕ້ອງເອົາໃຈໃສ່ໃນວິທີການສອນຂອງພຣະອົງເໝືອນກັນ. ພວກເຮົາຄວນຮຽນເວົ້າປະວັດຄວາມເປັນມາ. ຄົນທີ່ມາຟັງບົດເທສນາອັນດີເດັ່ນໃນວັນອາທິດນັ້ນ ພວກເຂົາຈະຈື່ຈຳບໍ່ໄດ້ດົນ, ແຕ່ ພວກເຂົາຈະຈື່ຈຳເຣື່ອງປະກອບໄດ້ດົນເປັນປີ.

ສອງ, ອົງພຣະເຢຊູໄດ້ກ່າວຕໍ່ຝູງຊົນ. ພຣະອົງມີພຣະປະສົງຄືເອົາຄົນທັງໂລກມາຮູ້ຈັກກັບພຣະອົງ. ຂ່າວປະເສີດທັງສີ່ເຫລັ້ມໄດ້ເວົ້າເຖິງອົງພຣະເຢຊູວ່າພຣະອົງໄດ້ກ່າວຕໍ່ "ຝູງຊົນ" ຫລື "ຄົນເປັນຈຳນວນຫລາຍ" ອົງພຣະເຢຊູໄດ້ໃຊ້ເວລາຢູ່ກັບສິດສິບສອງຄົນ ແລະພຣະອົງຖືກພວກຫົວໜ້າສາສນາກ່າວວ່າພຣະອົງໄດ້ໃຊ້ເວລາຢູ່ກັບກຸ່ມທີ່ຜິດຫລາຍເກີນໄປ.

ສາມ, ພວກເຮົາໄດ້ເຫັນແຜນການສຳຄັນຂອງພຣະເຢຊູ. ພຣະອົງໄດ້ກ່າວໃນສິ່ງທີ່ຝູງຊົນເຂົ້າໃຈໄດ້. ພຣະເຢຊູສອນ "ຫລາຍເທົ່າທີ່ເຂົາມີຄວາມສາມາດເຂົ້າໃຈໄດ້." (4:33). ພຣະອົງຊອກວິທີທາງເພື່ອຈະຊັກຈູງໃຈ ບໍ່ແມ່ນສະແດງວ່າເກັ່ງ. ສັນຍາລັກຂອງການສອນດີບໍ່ແມ່ນການຕອບສນອງຂອງຜູ້ຟັງ, ນັ້ນແມ່ນ<u>ສິ່ງເລີກເຊື່ອ</u>. ການຕອບສນອງທີ່ດີກວ່າແມ່ນ, <u>ຂ້ອຍເຫັນ, ຂ້ອຍຮູ້ວ່າຈະເຮັດຢ່າງໃດ, ແລະຂ້ອຍຈະເລີ້ມເຮັດ</u>. ຄຳສອນຂອງພຣະເຢຊູສ່ວນຫລາຍແມ່ນສິ່ງທີ່ຄວນເອົາປະກອບໃຊ້ໃນຊີວິດປະຈຳວັນ. ຂ້າພະເຈົ້າຖາມຕົນເອງສເມີໃນຄຳຖາມດຽວວ່າ ອັນນີ້ແມ່ນຫຍັງ? ຖ້າບໍ່ສາມາດຕອບຄຳຖາມນີ້ໄດ້ ບົດຮຽນທີ່ຕຽມນັ້ນກໍບໍ່ສົມຄວນຈະເອົາໄປສອນ.

ສີ່, ວິທີການຂອງອົງພຣເຢຊູ ຄືແຍກເອົາຄົນທີ່ຢູ່ທາງໃນອອກໄປສິດສອນ ອະທິບາຍໃຫ້ເຂົ້າໃຈເພີ່ມ. "ເວລາພຣະອົງຢູ່ກັບພວກສາວົກ, ພຣະອົງໄດ້ອະທິບາຍສິ່ງສາຣະພັດນັ້ນໃຫ້ແກ່ພວກສິດຟັງຢ່າງເຈາະຈົງ" (4:34). ໝາຍເຖິງວ່າພຣະອົງໄດ້<u>ອະທິບາຍເປັນປະຈຳ.</u> ຄຣູສອນທີ່ດີຊອກຫາສິດຜູ້ຕັ້ງໃຈ ແລະແຍກເວລາສອນເຂົາເພີ້ມເປັນພິເສດ. ຄວາມຈິງມີຢູ່ວ່າ ຜູ້ທີ່ຢູ່ໃກ້ສິດພຣະເຢຊູເຂົ້າໃຈຄຳສອນຂອງພຣະອົງດີ. ການເອີ້ນເອົາສາວົກນັ້ນບໍ່ແມ່ນເລືອກເອົາຜູ້ສລາດ ແຕ່ແມ່ນເອີ້ນເອົາສາວົກໃຫ້ຢ່າງໃກ້ຊິດອົງພຣະຜູ້ຊ່ອຍ ເພື່ອພວກເຂົາຈະໄດ້ເຂົ້າໃຈ ແລະຈຳສຽງຂອງພຣະຜູ້ໄຖ່ໄດ້ດີ.

**<u>ຄໍາຖາມ:</u>**

1. ໃຫ້ທວນຄືດເຖິງຄໍາອຸປະມາເຣື່ອງໂຄມໄຟ, ແມ່ນຫຍັງເປັນສິ່ງຈະມອດແສງສວ່າງຂອງທ່ານ?

2. ທ່ານສາມາດທວນຄືດເຖິງໂອກາດທີ່ພຣະເຈົ້າປະທານໃຫ້ທ່ານພິດນັ້ນລົງຢູ່ໃກ້ຄຣິສຕະຈັກຂອງທ່ານບໍ່?

3. ໃນວິທີໃດທີ່ທ່ານສາມາດໃຫ້ກໍາລັງໃຈແກ່ສິດຍາພິບານ ແລະຄຣູສອນໂຮງຮຽນວັນອາທິດໃນການເອົາພຣະຄໍາ ມາສິດສອນ?

4. ທ່ານຄືດວ່າພາຣະກິດຂອງອົງພຣະເຢຊູມີຄວາມໝາຍຫລາຍເກີນກວ່າສິ່ງເຫັນກັບຕາຢ່າງໃດ?

*ບວ*

# ບົດຮຽນທີ 5
## ອົງພຣະເຢຊູແລະສະພາບຄວາມໝົດຫວັງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 4:35-5:43

**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ມາຣະໂກ 4:35-5:43

**ຈຸດສຳຄັນຂອງບົດຮຽນນີ້:** ອົງພຣະເຢຊູມີຈຸດພິເສດສາມາດຊ່ອຍຄົນຢູ່ໃນສະພາບທີ່ເຫັນວ່າໝົດຫວັງໄດ້.

**ຄຳຖາມເພື່ອການສຳຣວດ:** ເຮົາຈະເຮັດຢ່າງໃດໃນເມື່ອເຮົາຢູ່ສະພາບໝົດຫວັງ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮູ້ຈັກສິ່ງທີ່ເກີດຂຶ້ນໃນສະພາບການໃນບົດນີ້ ແລະເພື່ອຈະເອົາມາປະກອບໃຊ້ໃນຊີວິດກັບສິ່ງທີ່ພຣະເຢຊູເຮັດແຕ່ລະຄັ້ງ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ຢັ້ງຢືນວ່າພຣະຄັມພີມີພະລັງແລະອຳນາດເພື່ອຈະເອົາມາປະກອບໃຊ້ໃນຊີວິດ ແລະການຮັບໃຊ້
- ແບ່ງປັນຂ່າວປະເສີດກັບທຸກຄົນ
- ເສີມສ້າງຄວາມຈະເຣີນໃຫຍ່ຂຶ້ນ ແລະຄວາມເຊື່ອທີ່ມີຊີວິດຊີວາ
- ເຂົ້າຮ່ວມເປັນຄອບຄົວຂອງພຣະເຈົ້າໃນການຕັດສິນໃຈ ແລະຮັບໃຊ້
- ໃຫ້ເຫັນຄຸນຄ່າຂອງຊີວິດແຕ່ລະຄົນທີ່ໄດ້ຖືກສ້າງຂຶ້ນຕາມພຣະລັກສະນະຂອງພຣະເຈົ້າ
- ຊັກຊວນໃຫ້ມີຄອບຄົວທີ່ສົມບູນ
- ເຊື່ອຟັງແລະຮັບໃຊ້ອົງພຣະເຢຊູໂດຍການຊ່ວຍເຫລືອຄົນອື່ນດ້ານຮ່າງກາຍ, ທາງຈິດໃຈ, ແລະທາງຄວາມຮູ້ສຶກ.

### ບົດນຳ

ລົມພະຍຸໄດ້ເຂົ້າມາສູ່ຊີວິດຄົນໃນທຸກໆຮູບແບບ ແລະມັນສາມາດປ່ຽນແປງສະພາບການຂອງທຸກໆຄົນໄດ້. ອົງພຣະເຢຊູເປັນຄຳຕອບຂອງເວລາສຸກເສີນ ແລະເຮັດໃຫ້ລົມພະຍຸໃນຊີວິດນັ້ນສງົບລົງໄດ້.

ໃນເວລາ 7:30 ຕອນເຊົ້າ ໃນວັນທີ 18 ຂອງເດືອນທັນວາ ປີ 1983. ລົມພະຍຸ ອາລີຊີອາ ໄດ້ພັດເຂົ້າມາທາງທະເລໂດຍນຳເອົານ້ຳຝົນທີ່ວັດແທກໄດ້ 10 ນີ້ວມາພ້ອມ ແລະລົມມີຄວາມແຮງເຖິງ 115 ໄມຕໍ່ຊົ່ວໂມງ.

ພວກເຮົາທຸກໆຄົນໄດ້ປະເຊີນກັບລົມພະຍຸໃນຊີວິດ. ພວກເຮົາໄດ້ປະເຊີນດ້ວຍຄວາມລຳບາກ ພວກເຮົາຕ້ອງການຄວາມຊ່ວຍເຫລືອແລະເວລານັ້ນຢາກໃຫ້ຜູ້ນຳສັນຕິສຸກໄດ້ເດີນເຂົ້າມາຊ່ວຍ. ໃນບົດນີ້ພວກເຮົາໄດ້ເຫັນຕົວຢ່າງສີ່ປະການທີ່ເຮັດໃຫ້ຊີວິດຂອງມະນຸດເຮົາໄດ້ຮັບຄວາມຍາກລຳບາກ.

ບົດຮຽນນີ້ບໍ່ໄດ້ສອນເຖິງການທີ່ພຣະເຈົ້າໄດ້ປົກປ້ອງຮັກສາພວກເຮົາໄວ້<u>ຈາກ</u> ລົມພະຍຸເທົ່ານັ້ນ, ແຕ່ເປັນບົດຮຽນທີ່ພຣະເຈົ້າຮັກສາພວກເຮົາ<u>ໃນ</u>ລົມພະຍຸ. ຢ່າງໃດກໍດີ ໃນເມື່ອທ່ານກຳລັງປະສົບກັບລົມພະຍຸ ຫລືທ່ານກຳລັງຢູ່ໃນລົມພະຍຸ, ຫລືທ່ານກຳລັງອອກມາຈາກລົມພະຍຸ, ພຣະເຈົ້າແຫ່ງລົມພະຍຸຍ່ອມເປັນທີ່ກຳບັງແລະຮັກສາທ່ານໃຫ້ລອດພົ້ນ.

### 1. ລົມພະຍຸທີ່ແຮງກ້າ (4:35-41)

ອົງພຣະເຢຊູຫາກໍສິດສອນສິ້ນສຸດລົງເຖິງຄຳອຸປະມາເຣື່ອງ ດິນ, ໂຄມໄຟ, ເມັດພືດ ແລະເມັດຜັກກາດ. ຕໍ່ມາພຣະອົງໄດ້ພາພວກສາວົກໄປທາງຕາເວັນອອກຂອງນໍ້າທະເລ. ພຣະເຢຊູໄດ້ຮູ້ລ່ວງໜ້າກ່ອນວ່າລົມພະຍຸຈະມາ, ແຕ່ພຣະອົງກໍຍັງພາພວກສາວົກໄປຢູ່. ພຣະເຢຊູບໍ່ເຄີຍພົບກັບສິ່ງປລາດໃນຊີວິດ. ນັກເທສນາສມັຍນີ້ໄດ້ສັນຍາວ່າຈະຊ່ອຍໃຫ້ພົ້ນຈາກລົມພະຍຸ, ແຕ່ອົງພຣະເຢຊູໄດ້ນຳພາພວກເຮົາເຂົ້າໄປໃນລົມພະຍຸ. ໝາຍເຫດ: ນີ້ເປັນຄູ່ແຫ່ງຊີວິດ. ໃນເມື່ອເຮົາພະຍາຍາມເພິ່ງຕົນເອງ ພຣະເຈົ້າຢູ່ເສີຍ, ໃນເມື່ອເຮົາຍອມຢູ່ເສີຍໆ ພຣະເຈົ້າເປັນຜູ້ບັນຊາໃນຊີວິດ.

ອົງພຣະເຢຊູໄດ້ແຍກອອກຈາກຝູງຊົນ, ພວກເຮົາເຊັ່ນກັນຄວນຈະເຮັດເໝືອນກັນ (ມາຣະໂກ 4:36). ລົມພະຍຸໄດ້ເກີດຂຶ້ນເປັນຂອງທັມະດາໃນທະເລ ຄາລີເລ ລະຫວ່າງພູ 700 ຟີດຕໍ່າກວ່າທະເລ. ອົງພຣະເຢຊູຢູ່ໃນເຮືອອິດເມື່ອຍຈາກການສິດສອນແລະຮັບໃຊ້ ພຣະອົງເລີຍນອນຫລັບສນິດບໍ່ໄດ້ຢ້ານກົ່ວຕໍ່ລົມພະຍຸໃດໆ. ພຣະອົງບໍ່ໄດ້ເອົາຫົວຊາວ່າເຮືອຈະຫລົ້ມຫລືນໍ້າຟົ້ງໃສ່ໜ້າພຣະອົງ. ບໍ່ມີອັນໃດເຮັດໃຫ້ພຣະອາຈານຕື່ນໄດ້. ພວກສາວົກທັງຫລາຍຢ້ານກົວ (4:38) "ທ່ານບໍ່ເປັນຫ່ວງດອກຫລື?" ພວກສາວົກມີຄວາມຢ້ານ ບໍ່ແມ່ນມີຄວາມເຊື່ອ. ພວກເຂົາໄດ້ພາກັນເຫັນອົງພຣະເຢຊູກະທຳການອັສຈັນມາແລ້ວຫລາຍເທື່ອ ແຕ່ພວກເຂົາພາກັນຕົກໃຈເວລາພົບລົມພະຍຸຮ້າຍ.

ອົງພຣະເຢຊູໄດ້ຕອບສນອງດ້ວຍຄຳສັ່ງງ່າຍໆ: "ມິດສງົບແມ" (4:39). ໃນທີ່ສຸດທະເລກໍຢຸດສງັດລົງ. ທະເລແລະລົມພະຍຸກໍພັດຢ່າງບໍ່ມີລະບຽບ, ແຕ່ອົງພຣະເຢຊູຢູ່ໃນສະພາບເປັນລະບຽບຕລອດເວລາ. ພວກສາວົກຕອບສນອງດ້ວຍຄວາມຢ້ານ ( "ຢ້ານ" ແປວ່າ ຢ້ານຢ່າງຜູ້ປຣາຊັຍ), ພວກສາວົກພາກັນຖາມກັນແລະກັນວ່າ, "ຜູ້ນີ້ແມ່ນໃຜ?" ພວກເຂົາຍັງບໍ່ທັນເຂົ້າໃຈດີໃນເວລານັ້ນ.

ເວລາມາຣະໂກໄດ້ຂຽນບົດນີ້ ກໍເລີ້ມມີການຂົ່ມເຫງເກີດຂຶ້ນຈາກພວກໂຣມັນ. ແຕ່ຢ່າງໃດກໍຕາມ ຖ້າມກາງຄວາມໝົດຫວັງນັ້ນ ພວກທີ່ເຊື່ອຍັງມີຄວາມຫວັງຢູ່.

**໒. ຜີຖ່ອຍຮ້າຍ** (5:1-໒0)

ລົມພະຍຸໄດ້ກາຍໄປແລ້ວ, ອົງພຣະເຢຊູໄດ້ມາເຖິງຝັ່ງຕາເວັນອອກຂອງທະເລ. ສິ່ງຕໍ່ໄປນີ້ໄດ້ເປັນການກະທົບ ກະເທືອນຕໍ່ການປະກາດຂອງໂລກ ແລະວິທີການຮັບໃຊ້. ອົງພຣະເຢຊູບໍ່ໄດ້ອົດທົນຂ້າມທະເລໄປເພື່ອຈະໄດ້ນຳເອົາດວງວິນຍານຂອງມະນຸດເທົ່ານັ້ນ. ຝູງຊົນຜູ້ທີ່ຢູ່ກໍ້າຕາເວັນອອກນັ້ນສ່ວນຫລາຍເປັນພວກຕ່າງຊາດ. ການທີ່ພຣະເຢຊູໄປທີ່ນັ້ນໄດ້ສອນວ່າພຣະເຢຊູເປັນຫ່ວງຕໍ່ຄົນທຸກຊາດ ພ້ອມທັງພວກຢິວ. ຕໍ່ມາພຣະເຢຊູ ພຣະຜູ້ໂຜດໃຫ້ພົ້ນ ພຣະອົງໄດ້ຊ່ອຍຄົນທີ່ມີຜີເຂົ້າ ເພາະຄົນມີຄຸນຄ່າສເມີສຳລັບພຣະເຈົ້າ, ເໝືອນດັ່ງເຮົາສຶກສາອາທິດແລ້ວມານັ້ນ ເຖິງເຣື່ອງ "ເປັນສິ່ງເກີນກວ່າສິ່ງເຫັນເຕັມຕາ."

ມາຣະໂກແລະລູກາໄດ້ເວົ້າເຖິງຄົນຜີເຂົ້າຄົນດຽວ, ແຕ່ມັດທາຍໄດ້ເວົ້າວ່າມີສອງຄົນທີ່ມີຜີເຂົ້າ (ມັດທາຍ 8:໒8-34, ລູກາ 8:໒6-39). ນີ້ບໍ່ແມ່ນການຖົກຖຽງກັນເລີຍ. ມາຣະໂກແລະລູກາໄດ້ເວົ້າເຖິງພຽງຄົນດຽວ, ພວກເຂົາອາດຈະຢໍ້າເຖິງຜູ້ມີຜີເຂົ້າທີ່ສຳຄັນ. ເຣື່ອງນີ້ເກີດຂຶ້ນໃນ "ເຂດຊາວເຄຣະຊາ" (ມາຣະໂກ 5:1), ເປັນບ່ອນຄົນຕ່າງຊາດທັງຫລາຍອາສັຍຢູ່. ຕອນນີ້ໄດ້ສະແດງບອກເຖິງຝູງໝູ (5:11), ພວກຢິວຖືວ່າໝູເປັນສັດທີ່ບໍ່ສະອາດ (ລະບຽບພວກເລວີ 11:7-8). ມີຜູ້ຊາຍຜູ້ນຶ່ງຊື່ວ່າກອງທັບ (ມາຣະໂກ (5:9) "ອອກມາຈາກຂຸມຝັງສົບມາພົບກັບພຣະອົງ" ພຣະເຢຊູມີສາວົກ 12 ຄົນ ແຕ່ຜູ້ມີຜີເຂົ້າມາພົບກັບພຣະເຢຊູແຕ່ຜູ້ດຽວ.

ການປະສົບການດ້ານວິນຍານຢ່າງນັ້ນໄດ້ເກີດເປັນປະວັດສາດ. ນີ້ບໍ່ແມ່ນການປະສົບການຄັ້ງແລກຂອງພວກສາວົກທີ່ໄດ້ຕໍ່ສູ້ກັບຜີມານ, ແຕ່ເຫດການເຫລົ່ານີ້ເປັນຜົນສະທ້ອນໃນການຮັບໃຊ້ໃນໂລກນີ້. ຊາຍທີ່ຊື່ວ່າກອງທັບນັ້ນເຫັນວ່າເປັນຄົນບໍ່ສະອາດໃນສາມກໍຣະນີ. ລາວເປັນຄົນຕ່າງຊາດ, ລາວຖືກຜີເຂົ້າ, ແລະຢູ່ຖ້າມກາງຜີປ່າຊ້າ. ບໍ່ມີຜູ້ໃດສາມາດບັງຄັບມັນໄດ້ (5:4). ບັງຄັບໄດ້ບອກເຖິງການສິດສອນສັດປ່າ. ລາວຮ້ອງສຽງດັງ ແລະເອົາໝາກຫີນປາດຕາມຕົນຕົວ (5:5). ຊາຍຄົນນີ້ໃຜໆກໍຢ້ານ.

ຊາຍທີ່ມີຜີເຂົ້າມີປະຕິກິຣິຍາຕໍ່ສາຍພຣະເນດຂອງອົງພຣະເຢຊູນັ້ນເປັນການແປກ. ລາວໄດ້ແລ່ນໄປຫາພຣະ

ເຢຊູ ແລະ "ຂຸເຄົ່າລົງຂາບໄຫວ້ພຣະອົງ" (5:6). ນີ້ແມ່ນການຍອມຮັບວ່າພຣະເຢຊູມີອຳນາດອັນສູງສຸດ. ຜີເປັນກອງພັນກໍບໍ່ສາມາດຢືນຕໍ່ສູ້ອຳນາດຂອງພຣະເຈົ້າໄດ້. ແລ້ວຜີນັ້ນກໍກ່າວວ່າ (5:7). "ທ່ານຕ້ອງການເຮັດຫຍັງກັບຂ້າ?" ຄຳເວົ້າຂອງມັນນັ້ນແປວ່າ ຂໍໃຫ້ພຣະອົງປະຂ້ານ້ອຍຢູ່ຜູ້ດຽວໄດ້ບໍ່? ອົງພຣະເຢຊູຈະບໍ່ປະລະໃຫ້ຄົນດຽວເສັຽໄປ

ພຣະອົງຖືວ່າຊີວິດຂອງຄົນຜູ້ນີ້ງມີຄ່າສູງ. ຜີມານໄດ້ຮ້ອງພຣະເຢຊູວ່າ "ບຸດຂອງພຣະເຈົ້າອົງສູງສຸດເອີຍ" (5:7). ຫົວໜ້າສາສນາໃນພວກຢິວເປັນຄົນຕາບອດບໍ່ຮູ້ຈັກພຣະເຢຊູ, ແຕ່ຜີມານໄດ້ເຂົ້າໃຈ.

ການກະທຳຂອງພຣະເຢຊູນັ້ນງ່າຍແລະສັ້ນໆຄື ໄລ່ຜີນັ້ນອອກຈາກຄົນຜູ້ນັ້ນ. ທັມມະດາແລ້ວຕ້ອງໃຊ້ວິທີການຕ່າງໆຕາມຕຳລາກ່ອນຈະໄລ່ຜີອອກໄດ້ ແຕ່ອົງພຣະເຢຊູໄດ້ໃຊ້ຄຳເວົ້າພຽງແປດຄຳເທົ່ານັ້ນ. "ຜີຖ່ອຍຮ້າຍອອກມາຈາກຄົນນີ້." (5:8). ຕໍ່ມາພຣະເຢຊູໄດ້ຖາມຊື່ຂອງມັນ (5:9). ມັນຕອບວ່າ, ຊື່ຂອງຂະນ້ອຍແມ່ນກອງພັນ... ເພາະມີຜີຫລາຍໂຕ." (5:9). ກອງພັນໝາຍຄວາມວ່າ, ມີ 6,000 ໃນພວກເຮົາ ແລະທ່ານມີຄົນດຽວ, ແລະພວກເຮົາອ້ອມທ່ານໄວ້. ຜີຮ້າຍໄດ້ຮ້ອງຂໍຕໍ່ພຣະເຢຊູຊ້ຳອີກໃຫ້ຊ່ອຍຄື ຂໍໃຫ້ປະມັນໄວ້ໃນເຂດແດນນັ້ນ (5:10). ເພື່ອມັນຈະກະທຳວຽກງານຂອງມັນຕໍ່.

ຕອນສອງຂອງເຣື່ອງນີ້ແຫ່ງຮ້າຍກາດຂຶ້ນ. "ມີໝູຝູງໃຫຍ່ກຳລັງຫາກິນຢູ່ຕາມຈ້າຍພູ" (5:11). ຈົນເຖິງຈຸດນີ້ຜີຕົວດຽວໄດ້ປາກຂຶ້ນ (5:10). ດຽວນີ້ພວກເຂົາໄດ້ປາກຂຶ້ນ (5:12). ພວກເຂົາພາກັນຮ້ອງຂໍນຳພຣະເຢຊູ ຂໍໃຫ້ພຣະອົງອະນຸຍາດເຂົ້າໄປໃນຝູງໝູ. ນີ້ເປັນຄຳຂໍຂອງມານ! ເປັນດ້ວຍເຫດໃດພວກຜີມານ 6,000 ຢາກໄປເຂົ້າຝູງໝູ 2,000 ໂຕ? ພຣະຄຳພີບໍ່ໄດ້ບອກ ແຕ່ຮູ້ແນ່ນອນວ່າ ພວກຜີມານຕ້ອງການທຳລາຍຝູງໝູດີກວ່າຈະຢູ່ຊື່ໆ. ອົງພຣະເຢຊູ "ອະນຸຍາດໃຫ້ເຂົາເຮັດ" (5:13). ຈຳໄວ້ເຖີດ ພະຍາມານບໍ່ສາມາດທຳລາຍພວກເຮົາ ຖ້າພຣະເຈົ້າບໍ່ອະນຸຍາດ. ດັ່ງນັ້ນ, ຄົນທີ່ມີຜີເຂົ້າໄດ້ພົ້ນ ແລະຝູງໝູ 2,000 ໂຕຖືກທຳລາຍ. ຄົນດຽວກໍມີຄ່າຫລາຍສຳລັບພຣະເຈົ້າ.

ການຕອບສນອງຂອງການອັສຈັນນີ້ກໍເກີດຂຶ້ນຢ່າງໄວ. ນຶ່ງ, ພວກທີ່ເຝົ້າຝູງໝູບໍ່ດີໃຈ. ພວກເຂົາໄດ້ເວົ້າເຣື່ອງທີ່ເກີດຂຶ້ນກັບຝູງຊົນຕາມໝູ່ບ້ານຕ່າງໆ (5:14). ການຕອບສນອງອັນທີສອງກໍແມ່ນຈາກຝູງຊົນທີ່ໄດ້ຍິນເຫດການທີ່ເກີດຂຶ້ນ. ພວກເຂົາ "ພາກັນອອກໄປເບິ່ງສິ່ງທີ່ເກີດຂຶ້ນ" ພວກເຂົາໄດ້ເຫັນອົງພຣະເຢຊູ ແລະຄົນຜູ້ທີ່ມີຜີເຂົ້າ (5:15). ສິ່ງທີ່ເຂົາໄດ້ເຫັນຄືຊາຍທີ່ເຄີຍເປັນຄົນໂຫດຮ້າຍແລະອັນຕະລາຍ ດຽວນີ້ນັ່ງສະບາຍ, ນຸ່ງເຄື່ອງຢ່າງສຸພາບ, ແລະມີຈິດໃຈປົກກະຕິ. ພວກເຂົາສົມຄວນມີຄວາມຍິນດີ, ຂອບພຣະຄຸນ ທີ່ພວກເຂົາບໍ່ໄດ້ຢູ່ຮ່ວມກັບຊາຍຜີຮ້າຍອີກ. ແຕ່ພວກເຂົາຢ້ານກົວ (5:15). ພວກເຂົາຢາກຢູ່ກັບບັນຫາທີ່ເຂົາເຄີຍມີ ພວກເຂົາບໍ່ຢາກຢູ່ກັບຄຳຕອບທີ່ເຂົາບໍ່ໄດ້ເຂົ້າໃຈ.

ການຕອບສນອງອັນທີສາມແມ່ນຈາກພວກເພື່ອນບ້ານ. ພວກເຂົາໄດ້ຍິນຈາກຄົນທີ່ໄດ້ເຫັນເຫດການ ຢາກຢູ່ໃນສະພາບເກົ່າ, ເມື່ອຜີມານໄດ້ຮ້ອງຂໍຕໍ່ພຣະເຢຊູ (5:17). ພວກເຮົາໄດ້ຍິນຂ່າວດີຈາກໜັງສືພິມ ດີຄາໂປລີຂ່າວປະຈຳວັນ ອາດຈະເວົ້າດັ່ງນີ້. ຄົນມີຜີເຂົ້າໄດ້ຫາຍແລ້ວ! ແຕ່ຜູ້ຊ່ອຍປົວນັ້ນຖືກໄລ່ໜີຈາກບ້ານ! ໃນທຸກວັນນີ້ກໍເໝືອນກັນໃນເມື່ອມີຂ່າວດີຈາກພຣະເຈົ້າ ພວກເຮົາກໍບໍ່ຍອມຮັບເອົາ.

ການຕອບສນອງອັນທີສີ່ຈາກອົງພຣະເຢຊູ. ພຣະອົງໄດ້ໜີອອກໄປຕາມຄຳຂໍຮ້ອງຂອງພວກເຂົາ (5:18). ຕໍ່ມາພວກເຮົາໄດ້ເຫັນຄຳພຍານຂອງຊາຍທີ່ມີຜີເຂົ້າ. ລາວຂໍຮ້ອງບາງຢ່າງ. ໃນເມື່ອຜີມານຮ້ອງຂໍອະນຸຍາດຈາກພຣະເຢຊູ(5:10). ແຕ່ເມື່ອຄົນເຊື່ອໃໝ່ຂໍເວລາເພີ້ມເພື່ອຈະຢູ່ນຳພຣະອົງ ພຣະອົງປະຕິເສດ. ນີ້ເປັນເຣື່ອງຂອງຄວາມຫວັງ ບໍ່ພຽງແຕ່ຊາຍຄົນດຽວຜູ້ເຄີຍອາສັຍຢູ່ໃນຜີປ່າຊ້າ ແຕ່ເພື່ອຄົນຈຳນວນຫລາຍຜູ້ທີ່ຢູ່ໃນເມືອງ ດີຄາໂປລິດ(ກຣີກ,

ສິບເມືອງ) ລ້ວນແຕ່ ແມ່ນພວກຕ່າງຊາດ. ພຣະເຢຊູໄດ້ສັ່ງຊາຍນັ້ນໃຫ້ເປັນສາສນາທູດຄົນທຳອິດໄປຫາຄົນຕ່າງຊາດ ເພາະຊີວິດຂອງລາວໄດ້ຖືກປ່ຽນແປງ ແລະລາວມີຄຳພະຍານສ່ວນຕົວ. ຊາຍນັ້ນມີຊີວິດຄືນມາອີກ. ພວກຝູງຊົນທີ່ໄດ້ເຫັນແລະໄດ້ຍິນກໍພາກັນປລາດໃຈ (5:20). ສຳລັບຜູ້ໝົດຫວັງນັ້ນ ອົງພຣະເຢຊູກາຍເປັນຄວາມຫວັງຕໍ່ຄົນທີ່ຢູ່ໃນສະພາບນັ້ນ.

### 3. ເຣື່ອງຍິງສາວຕາຍ ແລະຍິງເລືອດຕົກ (5:21-43)

ອົງພຣະເຢຊູໄດ້ອົດທົນຕໍ່ລົມພະຍຸ, ເດີນຂ້າມທະເລ, ພົບກັບຜີ 6, 000 ຕົວເພື່ອຈະເຜີຍແຜ່ຄວາມຫວັງ. ບໍ່ເປັນການແປກໃຈມີຄົນຫລວງຫລາຍລໍຖ້າພົບພຣະອົງໃນເວລາພຣະອົງສະເດັດກັບຄືນມາ.

ພຣະອົງຍິນດີສະເມີທີ່ຈະພົບກັບທຸກໆຄົນໃນກຸ່ມໃຫຍ່, ພຣະເຢຊູໄດ້ຕອບສນອງເຈົ້ານາຍຄົນນຶ່ງຜູ້ມີຊື່ວ່າຢາອີໂຣ ລາວຮັກສາໂຮງທັມມະເທສນາ. ລາວມີໜ້າທີ່ຮັບຜິດຊອບເບິ່ງຄວາມສງົບໃນຕຶກພຣະວິຫານ, ກໍາກັບການປຶກຄອງ, ແລະແຈກຢາຍຂອງຖວາຍ. ລາວອາດຮູ້ຈັກກັບພຣະເຢຊູດີ ທີ່ພຣະອົງໄດ້ຮັບໃຊ້ໃນເມືອງກາເປນາອູມ. ລູກຂອງລາວໄດ້ເຈັບປ່ວຍຢ່າງໜັກ, ບໍ່ສາມາດຍ່າງມາຫາອົງພຣະເຢຊູເອງໄດ້. ຜູ້ເປັນພໍ່ກໍເປັນທຸກໃຈຈຶ່ງ " ກົ້ມຂາບລົງຕໍ່ພຣະບາດຂອງພຣະເຢຊູ ແລະຂໍໃຫ້ພຣະອົງຊ່ວຍລູກສາວຂອງລາວ (5:21-23).

ອົງພຣະເຢຊູສາມາດປົວຍິງຄົນນັ້ນໄດ້ດ້ວຍການຕັດສັ່ງແຕ່ໄກໆເໝືອນດັ່ງພຣະອົງເຄີຍເຮັດມາແລ້ວແກ່ຄົນໃຊ້ຂອງນາຍທະຫານ (ລູກາ 7:7). ແຕ່ຖ້າວ່າ ຢາອີໂອ ມີຄວາມເຊື່ອແຂງແຮງ ລາວອາດຈະຮ້ອງຂໍໃຫ້ພຣະເຢຊູເຮັດດັ່ງນັ້ນໄດ້ເພື່ອການປິ່ນປົວ. ຂ່າວດີມີຢູ່ວ່າພຣະເຢຊູຕອບສນອງຕາມຄວາມເຊື່ອ, ເຖິງຈະອ່ອນແອປານໃດກໍຕາມ. ແທນທີ່ຈະປະນາມຄວາມເຊື່ອນ້ອຍ, "ພຣະເຢຊູໄດ້ສະເດັດໄປນໍາລາວ." (ມາຣະໂກ 5:24). ແລະຝູງຊົນກໍໄດ້ຕິດຕາມພຣະອົງໄປ.

ອີກເທື່ອນຶ່ງອົງພຣະເຢຊູໃຊ້ເວລາຢູ່ກັບແຕ່ລະຄົນ. ຄົນຕໍ່ມາກໍແມ່ນຝູງຊົນຈໍານວນຫລາຍຜູ້ຕິດຕາມພຣະອົງໄປ. ມີຍິງຄົນນຶ່ງ "ຜູ້ມີເລືອດຕົກເຖິງສິບສອງປີ" (5:25). ຜູ້ນີ້ໝົດຄວາມຫວັງ ລາວໄດ້ໄປຫາໝໍ ແລະເສັຽເງິນຫລາຍມາແລ້ວ ແຕ່ສະພາບຂອງລາວຍິ່ງຮ້າຍແຮງລົງ. ການທີ່ມີເລືອດຕົກເຮັດໃຫ້ລາວເປັນຄົນບໍ່ສະອາດ, ລາວບໍ່ສາມາດເຂົ້າໄປນະມັສການພຣະເຈົ້າໄດ້ໃນພຣະວິຫານ ຫລືມີຊີວິດຢູ່ກັບສັງຄົມໄດ້.

ເພື່ອບໍ່ໃຫ້ອົງພຣະເຢຊູກາຍເປັນຄົນບໍ່ສະອາດ ລາວຈຶ່ງພະຍາຍາມເຈັບສົ້ນເສື້ອທົງຂອງພຣະອົງ. ເວລາຈັບບາຍເສື້ອນັ້ນແລ້ວ ໃນທັນໃດນັ້ນລາວກໍຫາຍດີເປັນປົກກະຕິ. ການຕອບສນອງຂອງພຣະເຢຊູໄດ້ບອກເຖິງພາຣະກິດອັນແທ້ຈິງ. ພຣະອົງຈຶ່ງຖາມວ່າ, "ແມ່ນໃຜບາຍເສື້ອຂອງເຮົາ?" (5:30). ພຣະອົງບໍ່ພຽງແຕ່ປົວລາວເທົ່ານັ້ນ, ແຕ່ພຣະອົງຕ້ອງການສ້າງຄວາມສັມພັນເປັນທາງສ່ວນຕົວກັບລາວ. ພຣະອົງປະກາດວ່າ "ດີແລ້ວ" (5:34). ພຣະເຢຊູໄດ້ໃຊ້ຄໍາເວົ້າວ່າ ປອດພັຍ. ພຣະເຢຊູໄດ້ບອກກັບຍິງນັ້ນວ່າໃຫ້ໄປເປັນສຸກເຖີດ (5:34). ພຣະເຢຊູໄດ້ສົ່ງລາວອອກໄປສູ່ຊີວິດທີ່ມີສັນຕິສຸກຕລອດໄປ.

ໃນເວລານີ້ ຢາອີໂຣ ອາດຈະອຶດອັດໃຈເພາະຍັງລໍຖ້າການສະເດັດມາຂອງພຣະເຢຊູທີ່ສຸດ ບໍ່ມີພໍ່ແມ່ຄົນໃດຢາກໄດ້ຍິນຂ່າວຮ້າຍວ່າ "ລູກຂອງທ່ານໄດ້ຕາຍແລ້ວ" (5:35). ກ່ອນຢາອີໂຣ ຈະກ່າວອັນໃດອອກມາ ອົງພຣະເຢຊູໄດ້ໜູນໃຈລາວໃຫ້ອາສັຍຄວາມເຊື່ອ ບໍ່ແມ່ນຄວາມຢ້ານ. "ເຊື່ອເທົ່ານັ້ນ" ພຣະເຢຊູໄດ້ກ່າວ (5:36). ຄໍາເວົ້າວ່າ "ເຊື່ອ" ໝາຍຄວາມວ່າ ເຊື່ອໄປເລື້ອຍໆ.

ອົງພຣະເຢຊູໄດ້ສ້າງກຸ່ມຂຶ້ນພາຍໃນກັບພວກ ເປໂຕ, ຢາໂກໂບ, ແລະໂຢຮັນ ເພື່ອໃຫ້ພວກເຂົາປະສົບການກັບສິ່ງທີ່ຄົນອື່ນບໍ່ອາດສາມາດ (5:37). ເວລາພຣະອົງສະເດັດໄປເຖິງເຮືອນ, ພຣະເຢຊູແຍກສອງກຸ່ມອອກໄປຈາກກັນ, ຜູ້ທີ່ບໍ່ຍອມເຊື່ອບໍ່ໃຫ້ພວກເຂົາເຫັນການອັສຈັນທີ່ເກີດຂຶ້ນນັ້ນ. (5:38-39).

ພວກນັກອາຊີບຮ້ອງໄຫ້ເປັນທຸກໄດ້ເຂົ້າມາຕ້ອນຮັບພຣະເຢຊູແລະສາວົກສາມຄົນຊຶ່ງເປັນທໍານຽມຂອງຄົນໃນສມັຍນັ້ນ. ພຣະເຢຊູໄດ້ກ່າວວ່າ ຍິງສາວນ້ອຍນັ້ນ "ບໍ່ໄດ້ຕາຍພຽງແຕ່ນອນຫລັບ." (5:39). ພວກເຂົາພາກັນຫົວຂວັນພຣະອົງ. (5:40). ລູກສາວນ້ອຍນັ້ນເປັນສິ່ງທີ່ພຣະເຢຊູເຮັດໃຫ້ຝູງຊົນເຫັນການອັສຈັນ ແລະບັນຫາທີ່ເຂົາເຈົ້າແກ້ບໍ່ຕົກ. ສໍາລັບຜູ້ສາມາດໃຫ້ຄວາມຫວັງ ບັນຫານັ້ນກໍເປັນພຽງຊົ່ວຄາວ. ພຣະເຢຊູໄດ້ຈັບມື ແລະບອກຍິງນັ້ນໃຫ້ລຸກຂຶ້ນ. ການທີ່ຈັບມືຄົນຕາຍເປັນສິ່ງເຮັດໃຫ້ບໍ່ສະອາດອີງຕາມບັນຍັດໃນພຣະຄັມພີເດີມ. ຍິງສາວຄົນນັ້ນໄດ້ລຸກຂຶ້ນ, ບໍ່ຢູ່ໃນຄວາມເຈັບປ່ວຍທີ່ນໍາໄປເຖິງການຕາຍ, ແຕ່ນາງສາມາດຍ່າງໄປມາໄດ້ (5:42). ການທີ່ເຮັດໃຫ້ຄືນມາຈາກຕາຍນີ້ເປັນເໝືອນເຣື່ອງຂອງ ລາຊະໂຣ (ໂຢຮັນ 11:1-4). ຊາຍໜຸ່ມນັ້ນຢູ່ໃກ້ບ້ານນະອິນ (ລູກາ 7:11-15).

ພຣະເຢຊູໄດ້ໃຊ້ຄໍາສອນແຕກຕ່າງ. ພຣະອົງໄດ້ສັ່ງໃຫ້ຊາຍທີ່ມີຜີເຂົ້າທີ່ໄດ້ຫາຍດີນັ້ນອອກໄປປະກາດທົ່ວບ້ານເມືອງ, ແຕ່ຕອນນີ້ "ພຣະອົງສັ່ງຢ່າງເດັດຂາດບໍ່ໃຫ້ຜູ້ໃດຮູ້ຈັກເຖິງເຣື່ອງນີ້" (ມາຣະໂກ 5:43). ເປັນຫຍັງຈຶ່ງ

ເປັນຄວາມລັບ? ພຣະເຢຊູຮູ້ວ່າແມ່ນຫຍັງຈະເກີດຂຶ້ນໃນເມື່ອເຣື່ອງນີ້ແຜ່ອອກໄປໄວ. ຄົນຜູ້ຕໍ່ສູ້ພຣະເຈົ້າຈະພະຍາຍາມຊອກກໍ່ຄວາມຫວຸ້ນວາຍກ່ອນເຖິງເວລາທີ່ພຣະເຢຊູຈະຕ້ອງຕາຍ. ອີກຢ່າງນຶ່ງ, ຝູງຊົນຈະຈົດຈໍ່ເບິ່ງແຕ່ການອັສຈັນ ແທນທີ່ຈະຈົດຈໍ່ເບິ່ງຂ່າວປະເສີດ.

ຄຳເວົ້າສຸດທ້າຍຂອງອົງພຣະເຢຊູເປັນໜ້າສົນໃຈຫລາຍ. ພຣະອົງ "ບອກພວກເຂົາໃຫ້ເອົາອັນໃດອັນນຶ່ງມາໃຫ້ນາງກິນ" (5:43). ພຣະອົງເປັນຫ່ວງຕໍ່ນາງ, ຄວາມໝາຍຍິ່ງໄປກວ່ານັ້ນແມ່ນຜູ້ເປັນພໍ່ແມ່ມີວຽກທີ່ຈະຕ້ອງເຮັດຫລັງຈາກນັ້ນ. ພຣະເຢຊູໄດ້ປະຫລັກການທີ່ບໍ່ຈຳກັດໄວ້ກັບຜູ້ເປັນພໍ່ແມ່. ພຣະພອນແລະການອັສຈັນເຮັດໃຫ້ມີໜ້າທີ່ຮັບຜິດຊອບເພີ້ມ. ຂໍ້ສຳຄັນນັ້ນເຂົ້າໃຈໄດ້ດີ ຄືຈາກບັນຫາຂອງລົມພະຍຸຮ້າຍ, ຄົນຜີເຂົ້າ, ປົວຍິງເລືອດຕົກ, ແລະໃຫ້ຍິງສາວຄືນມາຈາກຕາຍ ພວກເຫລົ່ານີ້ເປັນຄົນສິ້ນຫວັງ ແຕ່ໃນອົງພຣະເຢຊູແລ້ວ ພຣະອົງປະທານຄວາມຫວັງໃຫ້.

**ຜົນສະທ້ອນ ແລະການກະທຳ**

ພວກເຮົາຢູ່ໃນໂລກທີ່ຕ້ອງການຄວາມຫວັງ. ພຣະເຢຊູໄດ້ປະກາດເຖິງຄວາມຫວັງນີ້ໃນທຸກໆບ່ອນທີ່ພຣະອົງສະເດັດໄປ. ພຣະອົງໄດ້ເຂົ້າຮ່ວມກັບມະນຸດໃນເວລາທີ່ສິ້ນຫວັງຄື: ໃນລົມພະຍຸກ້າ, ສູ້ກັບຜີມານ, ເຈັບປ່ວຍ, ແລະການຕາຍ. ພວກເຮົາຈະບໍ່ພົບກັບຄວາມສິ້ນຫວັງໃນເມື່ອເຮົາຢູ່ໃນອົງພຣະເຢຊູ. ໜ້າທີ່ຂອງເຮົາຄື ໃຫ້ເຮັດທຸກສິ່ງໃນຄວາມເຊື່ອແທ່ນທີ່ຈະເອົາຄວາມຢ້ານເຂົ້າມາໃນຊີວິດ.

<u>**ຄຳຖາມ:**</u>

1. ພຣະເຢຊູໄດ້ແຍກອອກຈາກຝູງຊົນເປັນປະຈຳ. ທ່ານຄິດວ່າເປັນດ້ວຍເຫດໃດພຣະຢຊູຈຶ່ງເຮັດຢ່າງນີ້? ເວລາໃດທ່ານມີແຜນການຈະແຍກອອກຈາກຝູງຊົນໄປ?

2. ໃນເມື່ອທ່ານໄດ້ປະສົບກັບລົມພະຍຸຮ້າຍ, ທ່ານໄດ້ຕອບສນອງມັນດ້ວຍຄວາມເຊື່ອ ຫລືຄວາມຢ້ານ?

3. ຄົນຢູ່ໃນເມືອງດີຄາໂປລິດ ມີຄວາມປລາດໃຈເມື່ອເຫັນຊີວິດຂອງຊາຍຜູ້ຖືກຜີເຂົ້າໄດ້ຮັບການປ່ຽນແປງ. ໃນທົນທາງໃດພຣະເຈົ້າໄດ້ກະທຳການອັສຈັນໃນຊີວິດຂອງທ່ານ ແລະຊີວິດຂອງຄຣິສຕະຈັກທ່ານ?

4. ຜູ້ຍິງທີ່ບາຍເສື້ອຂອງພຣະເຢຊູໄດ້ຫາຍດີ ແລະພຣະເຢຊູໄດ້ສ້າງຄວາມສຳພັນກັບນາງ. ໃນຫ້ອງຮຽນວັນອາທິດຂອງທ່ານສາມາດຊ່ອຍໃຫ້ຄົນອື່ນບາຍພຣະເຢຊູໄດ້ບໍ່?

*ບວ*

# ບົດຮຽນທີ 6
# ຄວາມສະອາດບໍ່ແມ່ນການກາຍເປັນພຣະເຈົ້າໄດ້

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ມາຣະໂກ 7:1-23

**ຂໍ້ພຣະຄັມທັງໝົດສໍາລັບບົດຮຽນນີ້:** ມາຣະໂກ 7:1-23

**ຈຸດສໍາຄັນຂອງບົດຮຽນນີ້:** ຄວາມດີ ແລະຄວາມຊົ່ວອັນແທ້ຈິງອອກມາຈາກທາງໃນ ບໍ່ແມ່ນການປະຕິບັດຕາມປະເພນີ ເຖິງແມ່ນປະເພນີຂອງຄຣິສຕຽນທີ່ເຄີຍປະຕິບັດກັນມາ.

**ຄໍາຖາມເພື່ອການສໍາຣວດ:** ເຮັດວິທີໃດພວກເຮົາຈະບໍ່ເຮັດໃຫ້ຄວາມເຊື່ອກາຍເປັນປະເພນີທັມມະດາ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະປຽບທຽບວິທີການຂອງອົງພຣະເຢຊູ ແລະພວກຟາຣີຊາຍ ແລະບອກໃຫ້ຮູ້ວ່າຄົນເຮັດຕາມໃຜຈິງກາຍເປັນຄົນທີ່ມີຄວາມເຊື່ອອັນແທ້ຈິງ

**ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ບອກເຖິງອໍານາດຂອງພຣະຄັມພີທີ່ໃຊ້ແນະນໍາໃນຊີວິດ ແລະການຮັບໃຊ້.
- ເພື່ອເສີມສ້າງໃຫ້ຊີວິດຈະເຣີນ, ໃຫ້ມີຄວາມເຊື່ອມີຊີວິດຊີວາ.
- ໃຫ້ຮູ້ຄຸນຄ່າຂອງທຸກຄົນວ່າເຂົາໄດ້ຖືກສ້າງຂຶ້ນຕາມພຣະລັກສະນະຂອງພຣະເຈົ້າ
- ຝຶກສອນໃຫ້ຄົນກາຍເປັນຜູ້ນໍາຮັບໃຊ້

## ບົດນໍາ

ພວກຟາຣີຊາຍໄດ້ຫາເຣື່ອງໃສ່ພວກສາວົກວ່າ ສາວົກຂອງພຣະເຢຊູບໍ່ເອົາຫົວຊາຕໍ່ປະເພນີຄໍາສອນທີ່ພວກເຂົາໄດ້ພາກັນປະຕິບັດມາເປັນເວລາດົນນານ. ດັ່ງນັ້ນ, ອົງພຣະເຢຊູໄດ້ຕອບພວກເຂົາ ໂດຍປະກາດວ່າຄວາມດີແລະຄວາມຊົ່ວໄດ້ເກີດມາຈາກທາງໃນ ຄືຈາກຈິດໃຈຂອງມະນຸດ.

ເວລາຂ້າພະເຈົ້າເປັນເດັກນ້ອຍ ຂ້າພະເຈົ້າໄດ້ຍິນພວກຜູ້ເຖົ້າເວົ້າເຖິງສຸພາສິດບູຮານວ່າ, "ຢ່າພາກັນຂີ່ ໂອ້ນຊາຫລັງຈາກກິນເຂົ້າ ຕ້ອງລໍຊົ່ວໂມງນຶ່ງກ່ອນ ຖ້າບໍ່ຟັງກ້າມເນື້ອກໍຈະປັ້ນ." "ນົກທີ່ມີຂົນຄືກັນມັກເຕົ້າ ໂຮມຢູ່ນໍາກັນສເມີ." ເດັນນ້ອຍດີຍ່ອມກິນຜັກ" "ພຣະເຈົ້າຊ່ອຍຜູ້ຢາກຊ່ອຍຕົນເອງ" ແຕ່ຄໍາສຸພາສິດທີ່ຄົນໄດ້ຍິນ ເລື້ອຽງແມ່ນ "ຄວາມສະອາດແມ່ນສິ່ງຫລຸດຈາກການກາຍເປັນພຣະເຈົ້າ."

ນັ້ນແມ່ນສຸພາສິດຕາມປະເພນີຂອງຄົນເທົ່ານັ້ນ. ຫລັງຈາກຂ້າພະເຈົ້າເປັນນັກຮຽນພຣະຄັມພີ ຂ້າພະເຈົ້າຈຶ່ງຮູ້ວ່າຄໍາເວົ້າທີ່ເລົ່າສູ່ກັນຟັງເປັນສຸພາສິດນັ້ນມີອາຍຸເກົ່າແກ່ກວ່າ 2000 ປີ. ພວກຟາຣີຊາຍຜູ້ມີການສຶກສາດີຈຶ່ງໄດ້ຍຶດເອົາປະເພນີຕ່າງໆທີ່ຕົກທອດກັນມາເຊັ່ນນັ້ນ: ຖ້າໃຜກິນເຂົ້າບໍ່ລ້າງມືກໍຖືວ່າຜິດ ເພາະບໍ່ເຮັດຕາມຄໍາສຸພາສິດສອນໄວ້.

ອົງພຣະເຢຊູໄດ້ຕອບຕໍ່ກົດເກນນີ້ ແລະຄວາມໜ້າຊື່ໃຈຄົດຂອງພວກຟາຣີຊາຍ ແລະພຣະອົງໄດ້ຕິຕຽນຖືກຈຸດ. ພຣະອົງໄດ້ບອກເຖິງບ່ອນເກີດຂອງຄວາມຊົ່ວຊ້າແລະຄວາມດີ. ພຣະອົງປະນາມການບໍ່ມີເຫດຜົນ, ການນະມັສການທີ່ບໍ່ມີຄຸນຄ່າ ການກະທໍາແລະຄວາມນຶກຄິດຊົ່ວ. ຂໍ້ສໍາຄັນຂອງມາຣະໂກບົດ 7 ນີ້ໄດ້ເວົ້າເຖິງສິ່ງດີອັນແທ້ຈິງແມ່ນ

ເຣື່ອງຂອງຫົວໃຈ, ບໍ່ແມ່ນສິ່ງເຣັດພຽງຂ້າງນອກເທົ່ານັ້ນ.    ນີ້ເປັນຄຳຖາມຕໍ່ຫ້ອງຮຽນໂຮງຮຽນວັນອາທິດ, ແລະຄຣິສຕະຈັກຂອງທ່ານຄື: ເຣັດວິທີໃດພວກເຮົາຈະບໍ່ເຣັດໃຫ້ຄວາມເຊື່ອກາຍເປັນປະເພນີທັມມະດາ?

## 1. ຢູ່ກັບສະພາບການ (7:1-4)

ໃນບົດຮຽນທີ່ແລ້ວ ພວກເຮົາພາກັນສຶກສາເຖິງອົງພຣະເຢຊູ ແລະພວກສາວົກສາມຄົນຢູ່ໃນເຮືອນເຈົ້ານາຍຜູ້ປົກຄອງພຣະວິຫານ ຜູ້ມີລູກທີ່ອົງພຣະເຢຊູຊ່ອຍໃຫ້ຄືນຈາກຕາຍ (ມາຣະໂກ 5:37-42). ມາຣະໂກ 6 ໄດ້ບອກເຖິງເຣື່ອງທີ່ອົງພຣະເຢຊູໄດ້ຖືກປະຕິເສດຈາກຄົນໃນບ້ານຂອງຕົນເອງ ຄືເມືອງນາຊາເຣັດ (6:1-6).    ສົ່ງສິບສອງຄົນອອກໄປ (6:45-56). ຕໍ່ມາພວກຫົວໜ້າສາສນາໄດ້ເຂົ້າມາອ້ອມອົງພຣະເຢຊູ (7:1).    ເຫັນວ່າອົງພຣະເຢຊູໄດ້ນຳເອົາຄົນຈຳນວນຫລວງຫລາຍມາຫາພຣະອົງ.

ພວກຟາຣີຊາຍຢາກໃຫ້ເຊື່ອຟັງກົດບັນຍັດ ແລະປະເພນີຂອງພວກຢິວ. "ພວກນັກທັມ" (7:1) ພວກເຫລົ່ານີ້ເປັນຜູ້ແປກົດບັນຍັດທີ່ມີຊື່ນຶ່ງອີກວ່າ "ພວກກ່າຍພຣະຄັມພີ" ອອກໄປເພື່ອໃຫ້ຄົນອື່ນໄດ້ມີແລະສຶກສາ.

ພວກຟາຣີຊາຍແລະພວກນັກທັມໄດ້ພ້ອມກັນສັງເກດເບິ່ງ "ສາວົກຂອງພຣະເຢຊູ" (7:2).    ພວກສາວົກພາກັນກິນເຂົ້າໂດຍທີ່ບໍ່ໄດ້ລ້າງມື. ພວກຫົວໜ້າສາສນາເຫລົ່ານີ້ເຫັນວ່າເປັນການຜິດກົດບັດຍັດຢ່າງໜັກ.    ແນວໃດກໍດີພວກສາວົກບໍ່ໄດ້ຜິດກົດຂອງພຣະຄັມພີເດີມ ຫລືພຣະບັນຍັດສິບປະການ ແລະບໍ່ໄດ້ຜິດຕໍ່ປຶ້ມໂທຣາ ຄືຫ້າປຶ້ມທຳອິດໃນພຣະຄັມພີເດີມ.

ຄົນອ່ານປຶ້ມ ມາຣາໂກນີ້ຕ້ອງການເຂົ້າໃຈເຖິງກົດລະບຽບດັ່ງກ່າວມານີ້.    ປະເພນີລ້າງມືກ່ອນກິນເຂົ້ານັ້ນຖືວ່າເປັນປະເພນີເຣັດໃຫ້ຄົນສະອາດໄດ້ ໂດຍທີ່ຕົນເອງອາດກາຍເປັນຄົນ "ເປື້ອນ" ຢ່າງບໍ່ຮູ້ສຶກຕົວ. ພິທີດັ່ງກ່າວນີ້ຈະເຫັນໄດ້ໃນໂຮງທັມມະສາລາຂອງພວກຢິວ, ຊຶ່ງຫົວໜ້າປະໂຣຫິດລ້າງມື ລ້າງຕີນກ່ອນຈະທຳພິທີສຳຄັນ (ອົບພະຍົບ 30:17-21). ພິທີທີ່ສືບທອດມາຈາກບູຮານນີ້ໄດ້ຍຶດຖືເອົາໄວ້ໂດຍພວກຢິວທຸກຄົນ, ເຂົາຕ້ອງຊຳຮະລ້າງກ່ອນອ້ອນວອນ ແລະຕໍ່ມາກໍເອົາມາໃຊ້ເປັນພິທີກ່ອນຮັບປະທານອາຫານ.

ການທີ່ພວກຟາຣີຊາຍກັງວົນນັ້ນບໍ່ແມ່ນເຣື່ອງອະນາມັຍ ພວກເຂົາໄດ້ເອົາພິທີນີ້ເຂົ້າມາໃຊ້ໃນດ້ານວິນຍານຈິດໃຫ້ເປັນກົດເກນ ແລະເປັນພິທີສຳຄັນ.    ພວກເຂົາພາກັນຄິດວ່າການມີຊີວິດດີເລີດນັ້ນອາດຈະເຣັດໃຫ້ພຣະເຈົ້າພໍພຣະທັຍ ແລະຍົກຍ້ອງຈາກພຣະເຈົ້າ.  ພວກຖືກົດເກນເຫລົ່ານີ້ຍັງໄດ້ນັບຖືກົດອື່ນໆອີກດ້ວຍ (ມາຣະໂກ 7:4). ມີພວກນັກປາດກ່າວວ່າ ກົດອັນນີ້ແມ່ນນຶ່ງໃນຈຳນວນພັນກົດເກດທີ່ພວກຟາຣີຊາຍຍຶດຖືເປັນກົດສຳຄັນ.

ໃນເມື່ອເປັນເຊັ່ນນີ້ ພວກຢິວຜູ້ໄດ້ຍ່າງໄປມາຕາມທ້ອງຕລາດ    ພວກເຂົາຈຳເປັນຕ້ອງເຣັດພິທີລ້າງມື (7:4). ເຣັດດັ່ງນີ້ຈະຊ່ອຍໃຫ້ພວກເຂົາເປັນຄົນສະອາດໄດ້ຈາກຄົນບໍ່ສະອາດທີ່ພວກເຂົາໄດ້ພົບປະແຕ່ລະວັນ.  ຕາມປະເພນີທີ່ເລົ່າຕໍ່ກັນມານັ້ນ ເຂົາຕ້ອງໃຫ້ມືກ້ານຶ່ງຂອງເຂົາບໍ່ໃຫ້ມີຂີ້ຊາຍຫລືໜາກຫີນແຮ່ຕິດ.    ນ້ຳທີ່ໃຊ້ລ້າງນີ້ຕ້ອງເກັບໄວ້ໃນອ່າງຫີນໃຫຍ່ໃຫ້ສະອາດດີ. ເວລາລ້າງມືຕ້ອງໃຫ້ປາຍນິ້ວມືຊີ້ຂຶ້ນ.    ຕ້ອງຖອກນ້ຳລົງໃສ່ມືແລະໃຫ້ໄຫລໄປຫາຂໍ່ແຂນ. ເວລາມືຍັງປຽກຢູ່ນັ້ນໃຫ້ເອົາມືກ້າອື່ນມາຖູໃສ່ກັນ. ຕໍ່ມາໃຫ້ເອົານິ້ວມືຕ່ຳລົງໃຫ້ນ້ຳໄຫລອອກໄປຂໍ່ແຂນ. ນ້ຳນັ້ນຕ້ອງໃຫ້ໄຫລອອກໄປຈາກນິ້ວມື. ສຳລັບພວກຟາຣີຊາຍແລະພວກນັກທັມແລ້ວສິ່ງເຫລົ່ານີ້ແມ່ນສາສນາ.

## 2. ຄູ່ຕໍ່ສູ້ (7:5-19)

ພວກຟາຣີຊາຍແລະພວກນັກທັມມີຄວາມກຽດຊັງຕໍ່ພຣະເຢຊູ.    ມີການໂຕ້ຖຽງກັນລະຫວ່າງພຣະເຢຊູກັບພວກຫົວໜ້າສາສນາ ຊຶ່ງກາຍເປັນການສອນອັນສຳຄັນຂອງອົງພຣະເຢຊູ. ມີສາມຢ່າງຄວນສັງເກດເບິ່ງໃນພິທີລ້າງມືນີ້. ນຶ່ງ, ການປະເຊີນໜ້າລະຫວ່າງພຣະເຢຊູແລະພວກນັກທັມ (7:5-13). ພວກເຂົາໄດ້ຖາມຄຳຖາມຢ່າງເປີດເຜີຍວ່າ "ເປັນຫຍັງສາວົກຂອງທ່ານບໍ່ໄດ້ເອົາກົດທີ່ມາຈາກເຖົ້າແກ່ບູຮານມາໃຊ້ໃນຊີວິດ?"    ພວກເຂົາຖາມດ້ວຍຄຳເວົ້າດຽວສັ້ນໆ ແຕ່ພຣະເຢຊູຕອບພວກເຂົາໃຊ້ຄຳເວົ້າແປດຄຳ.

ເປັນຂອງທັມມະດາ ທີ່ອົງພຣະເຢຊູໄດ້ຕອບຄຳຖາມທີ່ຈິດໃຈຢາກຮູ້ ບໍ່ແມ່ນຕອບຄຳຖາມຈາກຄວາມນຶກຄິດ. ພຣະອົງໄດ້ອ້າງເຖິງຜູ້ປະກາດພຣະທັມຜູ້ຍິ່ງໃຫຍ່ (ເອຊາຢາ 29:13). ພຣະອົງບອກພວກເຂົາວ່າພວກເຂົາເປັນຄົນນັບຖືພຣະເຈົ້າແຕ່ປາກ, ສ່ວນຫົວໃຈຫ່າງໄກ, ແລະການນະມັສການຂອງພວກເຂົາກໍໄຮ້ດຽງສາ (ມາຣະໂກ 7: 6-7). ບາງຄັ້ງ ພຣະເຢຊູຮ້ອງພວກນີ້ວ່າ "ເປັນຄົນໜ້າຊື່ໃຈຄົດ." ຄຳເວົ້າວ່າໜ້າຊື່ໃຈຄົດນັ້ນແມ່ນ ຄຳເວົ້າສອງຄຳທີ່ຕິດຕໍ່ກັນໝາຍຄວາມວ່າ <u>ຕັດສິນຄົນອື່ນ</u>. ຄຳເວົ້ານີ້ກາຍເປັນຄຳເວົ້າໃຊ້ກັບ<u>ນັກສະແດງລະຄອນ</u> ຜູ້ທີ່ທ່ອງຈຳບົດລະຄອນ ແລະທຳຕົວວ່າເປັນເຈົ້າຂອງ. ພວກນັກສາສນານີ້ທຳຕົວເປັນຄົນຢູ່ໃກ້ພຣະເຈົ້າແລະຕັດສິນຄົນອື່ນວ່າເປັນຄົນຜິດບາບ.

ອົງພຣະເຢຊູບໍ່ພຽງແຕ່ຕຳໜິພວກເຂົາໃນນິສັຍໃຈຄໍເທົ່ານັ້ນ ພຣະອົງໄດ້ເວົ້າເຖິງການກະທຳຂອງພວກເຂົານຳ. "ເຈົ້າທັງຫລາຍປະລະພຣະບັນຍັດຂອງພຣະເຈົ້າ ແລະກັບນັບຖືຕາມຄຳສອນທີ່ຕົກທອດມາຈາກມະນຸດ." (7:8). ພຣະເຢຊູບໍ່ໄດ້ເວົ້າວ່າພວກເຂົາໄດ້ຖືເອົາປະເພນີນັ້ນ<u>ເທົ່າທຽມ</u>ກັບພຣະຄຳຂອງພຣະເຈົ້າ ແລະພວກເຂົາໄດ້ເອົາປະເພນີ<u>ເໜືອພຣະຄຳ</u>. ພວກເຂົາຖືວ່າປະເພນີຂອງພວກເຂົານັ້ນ<u>ເໜືອ</u> ຄຳສັ່ງຂອງພຣະເຈົ້າ.

ພວກເຮົາເຊັ່ນກັນ ຕ້ອງເລືອກເອົາລະຫວ່າງພຣະຄຳ ແລະປະເພນີ. ພວກເຮົາບໍ່ສາມາດເອົາທັງສອງຢ່າງພ້ອມກັນ. ອັນນຶ່ງໃຫ້ຍຶດຖືປະເພນີ ແລະຮ້າຍໄປກວ່ານັ້ນທີ່ເອົາຄຳສັ່ງຂອງພຣະເຈົ້າແຍກອອກຈາກຊີວິດ. (7:9). ເປັນໜ້າເສັຽດາຍ ມີຫລາຍໆຄົນໄດ້ຍຶດເອົາປະເພນີໄວ້ ແລະຖືວ່າມັນສຳຄັນກວ່າພຣະຄຳຂອງພຣະເຈົ້າ.

ຕໍ່ມາອົງພຣະເຢຊູໄດ້ອ້າງເຖິງໂມເຊເປັນຜູ້ສຳຄັນຂອງພວກຟາຣີຊາຍແລະພວກນັກທັມບັນດິດ, ພຣະອົງເວົ້າເຖິງຄຳສັນຍາຂອງພວກ "ໂກຣະບານ" (7:10-13). ພວກນີ້ເຂົາພາກັນຖວາຍສິ່ງຂອງຕ່າງໆໃນການຮັບໃຊ້ພຣະເຈົ້າ. ແລະມີຫລາຍໆຄົນໃນພວກ ໂກຣະບານໄດ້ຖວາຍຊັບສິນເພື່ອໃຊ້ໃນສາສນາ. ພວກໂກຣາບານ (ສາສນາຢິວ) ໄດ້ມີກົດບໍ່ຍອມໃຫ້ລູກຊາຍຜູ້ບໍ່ຟັງຄວາມມີໂອກາດເບິ່ງແຍງພໍ່ແມ່. ພຣະເຢຊູສອນວ່າ ພວກຟາຣີຊາຍ ແລະພວກນັກທັມມີຄວາມຕ້ອງການສອງປະການ. ນຶ່ງ, <u>ພວກເຂົາຄວນຈະເບິ່ງແຍງພໍ່ແມ່ດ້ວຍ</u>ເງິນທີ່ເຂົາມີ. ສອງ, ຕາມປົກກະຕິພວກເຂົາໄດ້ເອົາເງິນໄປໃຊ້ສ່ວນຕົວ. ພວກໂກຣະບານໄດ້ນັບຖືປະເພນີເໜືອກວ່າພຣະຄຳຂອງພຣະເຈົ້າ. ດັ່ງນັ້ນ, ອົງພຣະເຢຊູໄດ້ກ່າວວ່າພວກເຂົາໄດ້ຝ່າຝືນ ຫລີຫລີກລ້ຽງຄຳສອນຂອງພຣະເຈົ້າ. (7:13).

ພຣະເຢຊູໄດ້ຕອບກົງໄປຕໍ່ຝູງຊົນທີ່ມາຟັງ (7:14-15). ພຣະອົງໄດ້ເວົ້າຢ່າງລະອຽດວ່າ ການທີ່ບໍ່ສະອາດນັ້ນບໍ່ແມ່ນເຣື່ອງມືເປື້ອນ ແຕ່ເປັນເຣື່ອງຂອງຫົວໃຈບໍ່ບໍຣິສຸດ. ຄວາມບາບໄດ້ເລີ້ມເກີດຂຶ້ນໃນໃຈ. ຜູ້ປະກາດພຣະທັມເຢເຣມີໄດ້ກ່າວວ່າ, "ຈິດໃຈກໍເປັນຕົວລໍ້ລວງເໜືອກວ່າສິ່ງໃດທັງໝົດ ມັນເສື່ອມຊາມຢ່າງຮ້າຍກາດ ຜູ້ໃດຈະຮູ້ຈັກໃຈນັ້ນ." (ເຢຣີມີ 17:9). ອົງພຣະເຢຊູໄດ້ເວົ້າວ່ານັ້ນເປັນຄວາມຈິງຫລັງຈາກຮ້ອຍປີຕໍ່ມາ. (ມາຣະໂກ 7:16).

## 3. <u>ຄວາມຜິດບາບເຖິງຕາຍ</u> (7:20-23)

ອົງພຣະເຢຊູ ໄດ້ກ່າວເຖິງເຣື່ອງນີ້ສາມເທື່ອ: "ສິ່ງທີ່ອອກມາຈາກພາຍໃນມະນຸດນັ້ນແຫລະ, ເຮັດໃຫ້ມະນຸດຊົ່ວມົວໝອງ." (7:20). ຕໍ່ມາພຣະອົງໄດ້ໃຫ້ຕົວຢ່າງທີ່ຄວາມບາບໄດ້ອອກມາຈາກໃຈ. ຄວາມຊົ່ວຮ້າຍເກີດມາຈາກພາຍໃນຂອງມະນຸດ.

ພຣະເຢຊູເລີ້ມກ່າວວ່າ "ຄວາມຄິດຊົ່ວ" ມີດັ່ງຕໍ່ໄປນີ້: ການຜິດຊາຍຍິງ ແມ່ນການຮ່ວມເພດສັມພັນອັນບໍ່ຖືກຕ້ອງໂດຍສະເພາະພວກເປັນໂສດ. ຄຳເວົ້າວ່າ "ໂຈນ" ແມ່ນການເອົາຂອງຄົນອື່ນມາເປັນຂອງຕົນເອງ. ພຣະເຢຊູໄດ້ເຕືອນພວກສາວົກວ່າທັງສອງຢ່າງ: "ຄົນຂ້າຄົນ" ແລະ "ຄົນຫລິ້ນຊູ້" ເລີ້ມມາຈາກໃຈ.

ຍັງເຫລືອອີກຄວາມຜິດບາບແປດຢ່າງ ແຕ່ເຫັນວ່າເປັນສິ່ງບໍ່ອັນຕະລາຍ ແຕ່ຢ່າງໃດກໍຕາມມັນເກີດມາຈາກບ່ອນດຽວກັນ ຄືຫົວໃຈ. (7:22). "ການໂລບ" ຄືຢາກມີສິ່ງຂອງເພີ້ມຂຶ້ນເລື້ອຍໆ, "ການອະທັມ" ຄືມັກສິ່ງຊົ່ວຮ້າຍ. "ການລໍ້ລວງ" ແມ່ນຍົວະເອົາ ຫລອກເອົາໂດຍກົນອຸບາຍ. ນີ້ແມ່ນຍົວະຍົງເອົາ "ຣາຄະຕັນຫາ" ພຣະເຢຊູເວົ້າວ່າມັນເປັນຄວາມຊົ່ວທີ່ບັງຄັບໄວ້ຍາກ. ຄວາມບາບຕໍ່ມາກໍແມ່ນ "ອິດສາ" ມັນແມ່ນໂລບເອົາຂອງຄົນອື່ນ. ຄຳເວົ້າອິດສາ ແມ່ນຄວາມບາບຂອງ<u>ສາຍຕາ</u>, ຫລືເບິ່ງຂອງຄົນອື່ນແລ້ວ ກໍຢາກໄດ້ມາເປັນຂອງຕົນເອງ. "ການນິນທາ" ແມ່ນຄວາມປາຖນາຢາກທຳລາຍຊື່ສຽງຂອງຄົນອື່ນ. ຕາມພາສາ ກຣີກຄຳເວົ້ານີ້ ກໍແມ່ນ ຫ<u>ມິ່ນປມາດ</u>. "ຄວາມ

ຈອງຫອງ " ແມ່ນອວດອ້າງວ່າຕົນເອງຍິ່ງໃຫຍ່ ແມ່ນ ການສະແດງວ່າ ຕົນເອງເກັ່ງກວ່າ ຄົນອື່ນໆ.   ຄວາມບາບສຸດທ້າຍແມ່ນ "ຄວາມໂງ່" ແມ່ນເຮັດບ້າໆ.   ຄົນໂງ່ບໍ່ສາມາດມອງເຫັນສິ່ງດີແລະບໍ່ດີໄດ້ ຫລືທາງຖືກຕ້ອງແລະບໍ່ຖືກຕ້ອງໄດ້.

ອົງພຣະເຢຊູໄດ້ສລູບຄຳສອນຂອງພຣະອົງວ່າ, "ສາຣະພັດຄວາມຊົ່ວເຫລົ່ານີ້ເກີດຈາກພາຍໃນ ແລະເຮັດໃຫ້ມະນຸດຊົ່ວມົວໝອງ." (7:23) ອົງພຣະເຢຊູໄດ້ຖືກຖາມຄຳຖາມດຽວຄືການລ້າງມື. ແຕ່ພຣະອົງໄດ້ເວົ້າເຖິງຄຳຖາມອັນແທ້ຈິງ ເຖິງເຣື່ອງຄວາມຊຳຣະໃຫ້ສະອາດຢ່າງແທ້ຈິງ. ພຣະອົງໄດ້ກ່າວເຖິງເຣື່ອງດັ່ງກ່າວນີ້ 5 ເທື່ອ (7:15, 19, 20, 21, 23).   ພຣະອົງເວົ້າຊ້ຳຫລາຍໆເທື່ອນີ້ເພື່ອຢາກໃຫ້ພວກຟາຣີຊາຍເຂົ້າໃຈຄັກເຖິງກົດທີ່ເລົ່າຕໍ່ ກັນມາແຕ່ບູຮານ ແລະກົດບັນຍັດຈາກພຣະເຈົ້າອັນແທ້ຈິງ ແລະບ່ອນເກີດຂອງຄວາມສະອາດ ແລະຄວາມຜິດບາບ. ພຣະອາຈານໄດ້ສົນທະນາກັບພວກນັກທັມທີ່ພວກເຂົາບໍ່ອາດລືມໃນຄັ້ງນັ້ນໄດ້ເລີຍ.

### ນຳເອົາຄວາມຈິງເຂົ້າມາປະກອບໃນຊີວິດ

ປະເພນີອາດໃຊ້ໃຫ້ເປັນປໂຍດໄດ້ໃນເມື່ອມັນໄດ້ບອກເຖິງຄວາມຈິງ   ແລະເມື່ອມັນບໍ່ໄດ້ກາຍເປັນຕົວແທນຂອງຄວາມຈິງ.  ອົງພຣະເຢຊູ ໄດ້ຕຳໜິພວກຟາຣີຊາຍເພາະພວກເຂົາໄດ້ຍົກເອົາປະເພນີສູງກວ່າພຣະຄຳຂອງພຣະເຈົ້າ.  ຫາເທື່ອພຣະເຢຊູໄດ້ກ່າວວ່າ ສິ່ງທີ່ເຮັດໃຫ້ມະນຸດຊົ່ວມົວໝອງນັ້ນແມ່ນເຣື່ອງຂອງຫົວໃຈ. ໜ້າທີ່ຂອງພວກເຮົາຄືໃຫ້ເອົາໃຈໃສ່ເຣື່ອງຂອງຫົວໃຈ ແລະຕໍ່ສະພາບການມີລັກສະນະເໝືອນພຣະເຈົ້າ.

<u>ຄຳຖາມ:</u>

1. ຕາມຄວາມເຂົ້າໃຈຂອງທ່ານແລ້ວ  ເປັນດ້ວຍເຫດໃດພວກສາວົກຜູ້ຢູ່ໃກ້ຊິດກັບອົງພຣະເຢຊູບໍ່ມີຄວາມເຂົ້າໃຈເຖິງເຣື່ອງນີ້ດີກວ່າພວກຟາຣີຊາຍ ແລະຝູງຊົນ?

2. ປະເພນີອັນໃດ ຈະເປັນອັນດີຫລືບໍ່ດີ ທີ່ຄຣິສຕະຈັກຂອງທ່ານໄດ້ຮັກສາໄວ້ຢູ່?

3. ພວກຟາຣີຊາຍເຫັນວ່າ   ການລ້າງມືໃຫ້ສະອາດເປັນສິ່ງຮອງລົງມາຈາກການກາຍເປັນເໝືອນສະພາບພຣະເຈົ້າ. ໃນທຸກວັນນີ້ທ່ານໄດ້ໃຊ້ກົດເກນຢ່າງນີ້ເພື່ອວັດແທກການເປັນສະພາບເໝືອນພຣະເຈົ້າຢ່າງໃດ?

4. ທ່ານໄດ້ເຮັດຢ່າງໃດທີ່ຈະເຮັດໃຫ້ໃຈຂອງທ່ານສະອາດ?

5. ໃນວິທີທາງໃດໃນຫ້ອງຮຽນຂອງທ່ານຄວນຈະເຮັດເພື່ອຈະຮັບຜິດຊອບຕໍ່ກັນ  ແລະກັນເພື່ອຈະເຮັດໃຫ້ຈິດໃຈເປັນສິ່ງທີ່ຖືກຕ້ອງເປັນທັມໄດ້?

*ບອ*

# ບົດຮຽນທີ 7
# ບໍ່ມີຜູ້ໃດຕາບອດໄປກວ່ານີ້

| | |
|---|---|
| **ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** | ມາຣະໂກ 8:11-26 |
| **ຂໍ້ພຣະຄັມທັງໝົດສໍາລັບບົດຮຽນນີ້:** | ມາຣະໂກ 8:1-26 |
| **ຈຸດສໍາຄັນຂອງບົດຮຽນນີ້:** | ພວກເຮົາຕ້ອງມືນຕາຂຶ້ນ ແລະເອົາຊັຍຊະນະຕໍ່ບ່ອນເຮົາບໍ່ເຫັນ ຖ້າພວກເຮົາຕ້ອງການເຫັນພຣະເຢຊູດີ ແລະຕອບສນອງຕໍ່ພຣະ ອົງຢ່າງຖືກຕ້ອງ. |
| **ຄໍາຖາມເພື່ອການສໍາຣວດ:** | ມີສິ່ງໃດບໍ່ທີ່ພວກເຮົາຕ້ອງການເຫັນ ແລະເຂົ້າໃຈເຖິງອົງພຣະເຢຊູ, ເຖິງເຮົາເອງ, ແລະຄົນອື່ນໆ ຖ້າພວກເຮົາມືນຕາຂຶ້ນ ແລະເອົາຊະນະຕໍ່ບ່ອນເຮົາບໍ່ເຫັນ? |
| **ຈຸດປະສົງຂອງບົດຮຽນນີ້:** | ເພື່ອຈະໄຈ້ແຍກເຖິງຄວາມຕາບອດຂອງພວກຟາຣີຊາຍ, ຂອງພວກສາວົກ ແລະເຮັດໃຫ້ຮູ້ວ່າສິ່ງໃດຈະຊ່ວຍໃຫ້ເຫັນອົງພຣະເຢຊູດີຂຶ້ນ. |

**ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ບອກເຖິງອໍານາດຂອງພຣະຄັມພີທີ່ໃຊ້ແນະນໍາໃນຊີວິດ ແລະການຮັບໃຊ້.
- ເພື່ອຈະແບ່ງປັນຂ່າວປະເສີດກັບທຸກໆຄົນ
- ເພື່ອເສີມສ້າງໃຫ້ຈະເຣີນ, ໃຫ້ມີຄວາມເຊື່ອມີຊີວິດຊີວາ.

## ບົດນໍາ

ພວກຟາຣີຊາຍ, ພວກສາວົກ ແລະຊາຍຄົນນຶ່ງທີ່ໄດ້ທົນທຸກທໍຣະມານຍ້ອນຕາບອດ. ອົງພຣະເຢຊູໄດ້ໃຊ້ເຫດການເຫລົ່ານີ້ເພື່ອຈະປະທານຄວາມຫວັງແດ່ທຸກຄົນຜູ້ສແວງຫາຄວາມຈິງໃນດ້ານວິນຍານ ໃຫ້ເຂົ້າໃຈດີຂຶ້ນ.

ການຟື້ນຟູຫາກໍແລ້ວໄປ ແລະມີຫລາຍຄົນໄດ້ຖວາຍຕົນເອງຕໍ່ອົງພຣະຄຣິດ. ກຸ່ມຂອງຂ້າພະເຈົ້າມີຄວາມຍິນດີກັບການຕັດສິນໃຈຂອງພວກນີ້ ຈຶ່ງຢາກສລອງໂດຍການຂີ່ຣົດອອກໄປໃນຖ້າມກາງອາກາດໜາວ. ຂ້າພະເຈົ້າໄດ້ຖອຍຣົດໂດຍໄດ້ເບິ່ງຈະຈົກຂ້າງ ຈຶ່ງໄດ້ຄໍາຂຽນນ້ອຍໆຕິດຢູ່, "ຈະເຫັນພາບນ້ອຍກວ່າຕົວຈິງ." ນັ້ນແມ່ນຄວາມທໍານວຍ! ເປັນຄວາມຈິງ ຣົດຂອງພວກສາສນາທູດທີ່ຈອດຢູ່ຂ້າງນັ້ນເຫັນວ່າຈອດໃກ້ໆ. ຂ້າພະເຈົ້າໄດ້ເວົ້າກັບເພື່ອນຄົນນຶ່ງວ່າ, "ບໍ່ປາກົດເຫັນມັນເລີຍ." ເວລາເປັນຊາຍໜຸ່ມ ຂ້າພະເຈົ້າໄດ້ຂັບຣົດລ່ວງປ້າຍ ໃນເມື່ອຕໍາຣວດຈັບ ຂ້າພະເຈົ້າກໍຕອບເພີ່ມວ່າ "ບໍ່ເຄີຍເຫັນປ້າຍນັ້ນຈັກເທື່ອ."

ຂ້າພະເຈົ້າເປັນຄົນມີພະຍາດຕາ, ສາຍຕາສັ້ນ, ຕາສອງກ້ໍາກໍເຫັນວ່າບອດໄປ ເປັນໜ້າເສົ້າເພາະຂ້າພະເຈົ້າມີອາຍຸພຽງ 40 ປີເທົ່ານັ້ນ. ດັ່ງນັ້ນ, ຂ້າພະເຈົ້າໄດ້ໃສ່ແວນຕາພິເສດທີ່ມີຄໍາເຕືອນວ່າ, "ຈະເຫັນພາບນ້ອຍກວ່າຕົວຈິງ." ທ່ານເຄີຍມີປະສົບການຢ່າງນີ້ບໍ່?

ອົງພຣະເຢຊູໄດ້ລ້ຽງອາຫານທ່ຽງແກ່ຄົນ 4000 (ມາຣະໂກ 8:1-10). ແຕ່ເຖິງເລລາກິນເຂົ້າແລງມາຝູງຊົນທັງຫລາຍກາຍເປັນຄົນເສັຽສາຍຕາ ລືມໄປໝົດໂດຍບໍ່ຮູ້ວ່າພຣະອົງເປັນໃຜ. ພວກຟາຣີຊາຍ ຕ້ອງການເຫັນສັນຍາລັກອີກອັນໃໝ່ ແລະພວກສາວົກກໍຕ້ອງການຮູ້ວ່າພຣະອົງເປັນໃຜກັນແທ້. ຄົນຕາບອດຕ້ອງການພຽງເຫັນຮຸ່ງໄດ້. ສໍາລັບພວກເຫລົ່ານີ້ແລ້ວ ພຣະເຢຊູມີເຣື່ອງດຽວທີ່ຈະບອກກັບພວກເຂົາ: <u>ພຣະຜູ້ຊ່ວຍອາດຢູ່ໃກ້ເຂົາກວ່າພາບທີ່ເຫັນ.</u>

## 1. <u>ພວກຟາຣີຊາຍຜູ້ບໍ່ສາມາດເບິ່ງເຫັນພຣະເຢຊູໄດ້</u> (8:11-13)

ພວກຫົວໜ້າສາສນາຖືຕົນເອງເປັນສັດຕູຕໍ່ພຣະເຢຊູ. ພວກເຂົາ "ເລີ້ມຖາມພຣະເຢຊູ" (8:11). ຕາມປົກກະຕິແລ້ວພວກເຂົາມັກໂຈມຕີດ້ວຍຄຳຖາມ. ການທົດລອງທີ່ນີ້ງແມ່ນເລີ້ມໃນພຣະຄັມພີເດີມ (ປະຖົມມະການ 3:1). "ພຣະເຈົ້າໄດ້ເວົ້າຢ່າງນີ້ແທ້ບໍ່...? ຕໍ່ໄປພວກເຂົາຢາກເຫັນໝາຍຄຳຄັນ ແຕ່ພວກເຂົາມີຈິດໃຈທີ່ບໍ່ເຊື່ອ. ພວກເຂົາບໍ່ໄດ້ຊອກຫາເຖິງເຄື່ອງໝາຍທີ່ວ່າອົງພຣະເຢຊູເປັນພຣະເຈົ້າ, ແຕ່ພວກເຂົາຊອກຫາສິ່ງກົງກັນຂ້າມ.

ພວກເຂົາຢາກເຫັນສິ່ງງ່າຍໆຄື: "ພວກເຂົາໃຫ້ພຣະອົງສະແດງສິ່ງທີ່ມາຈາກສວັນ" (ມາຣະໂກ 8:11). ສິ່ງເຂົາຢາກເຫັນນັ້ນເປັນສິ່ງນອກເຣື່ອງໃນຫລາຍຂັ້ນຕອນ. ນຶ່ງ, ພວກເຂົາໄດ້ເຫັນໝາຍສຳຄັນມາແລ້ວ. ໃນປື້ມມາຣະໂກນີ້ໄດ້ຈົດໄວ້ວ່າພວກເຂົາໄດ້ເຫັນໝາຍສຳຄັນຫລາຍຢ່າງ ທີ່ອົງພຣະເຢຊູໄດ້ກະທຳໃນທີ່ຊຸມນຸມກ່ອນພວກເຂົາຢາກຈະເຫັນອີກ. ນັ້ນແຫລະຈິ່ງເປັນບັນຫາ. ໃນເມື່ອພວກເຂົາໄດ້ເຫັນແລ້ວ ກໍຢາກເຫັນອີກ. ພຣະເຈົ້າໄດ້ສະຖິດຢູ່ໃນໂລກເປັນຢ່າງຮຽບຮ້ອຍແລ້ວ ສິ່ງທີ່ເຫັນໄດ້ງ່າຍກໍແມ່ນໃນການຊົງສ້າງ, ໃນຄວາມສັດຊື່, ກັບພວກຜູ້ປະກາດພຣະທັມແລະການອັສຈັນຫລາຍປະການ.

ບັນຫາອີກອັນນຶ່ງກໍແມ່ນສິ່ງພວກເຂົາທູນຂໍຢາກເຫັນການສະແດງໃຫ້ຮູ້ໄດ້ວ່າ ພວກເຂົາໄດ້ມີຊີວິດຢູ່ໃນຝ່າຍທາງກົງກັນຂ້າມ. ຫ້າບົດກ່ອນນີ້ພວກເຂົາເວົ້າວ່າ ການທີ່ພຣະເຢຊູໄດ້ກະທຳອັສຈັນນັ້ນແມ່ນດ້ວຍອຳນາດຂອງພະຍາມານ (3:22-30), ແຕ່ມາດຽວນີ້ ພວກເຂົາຢາກໃຫ້ພຣະເຢຊູສະແດງໝາຍສຳຄັນເພື່ອຈະບອກວ່າພຣະອົງຊົງເປັນພຣະເມຊີອາ ຫລືພຣະຜູ້ຊ່ອຍໃຫ້ພົ້ນ. ອີກອັນນຶ່ງທີ່ຮູ້ວ່າພວກເຂົາຢູ່ຝ່າຍກົງກັນຂ້າມ ເພາະເຂົາບົງການໃຫ້ອົງພຣະເຢຊູເຮັດໝາຍສຳຄັນ ເພື່ອຢາກຮູ້ວ່າພຣະອົງສັກສິດແທ້, ແຕ່ພວກເຂົາບັງຄັບໃຫ້ພຣະອົງກະທຳຕາມຫົນທາງຂອງພວກເຂົາ. ແທ້ຈິງ ພຣະເຢຊູຊົງເປັນພຣະຜູ້ເປັນເຈົ້າ ແລະພຣະອົງບໍ່ຈຳເປັນຕ້ອງຢູ່ກ້ອງອຳນາດຂອງຜູ້ໃດ. ສົມມຸດວ່າຖ້າພຣະອົງໄດ້ເຮັດຕາມຄຳສັ່ງຂອງພວກເຂົາ ພວກເຂົາກໍຈະສັ່ງຖາມພຣະອົງໄປເລື້ອຍໆ.

ການຕອບຂອງພຣະເຢຊູຕໍ່ພວກຟາຣີຊາຍໃຊ້ຄຳເວົ້າພຽງ 21 ຄຳ (8:12) ແລະໃຊ້ເວລານ້ອຍດຽວທີ່ຈະຟັງ! ພຣະອົງບໍ່ໄດ້ເຂົ້າໄປໃນການໂຕ້ວາທີ ຫລືສົນທະນາຫຍັງເລີຍ. ພຣະອົງມີສິ່ງອື່ນທີ່ຈະຕ້ອງກະທຳແທນທີ່ຈະເສັຽເວລາຕອບໂຕ້ກັນກັບພວກສັດຕູ. ເຊັ່ນດຽວກັບເຣື່ອງຂອງຜູ້ປະກາດພຣະທັມ ເນເຫມີ ເພິ່ນບໍ່ເອົາຫົວຊາຕໍ່ການທົດລອງຂອງ ຊຳບາລັດແລະໂຕເບັຽ ເພາະພວກເຂົາເປັນປໍຣະປັກໃນການສ້າງກຳແພງເມືອງ (ເນເຫມີ 6:1-3). ອາຈານໂປໂລໄດ້ປັກຕາໃສ່ "ສິ່ງດຽວ" (ຟີລິບປອຍ 3:13). ພຣະເຢຊູຮູ້ຈັກແລະເອົາໃຈໃສ່ພາຣະກິດຂອງພຣະອົງ ແລະບໍ່ຍອມອອກນອກທາງ. ພຣະອົງ "ປັກຕາ" ເບິ່ງກ່ອນພຣະອົງຈະໄດ້ປົວຄົນຫູໜວກ (ມາຣະໂກ 7:34). ພຣະອົງປັກຕາເບິ່ງໃນ ປື້ມມາຣະໂກນີ້ເພາະພຣະອົງໄດ້ເຫັນພະຍາດເຮັດໃຫ້ຄົນເປັນທຸກ ຫລືສັງຄົມທີ່ເປື້ອນເປິະ. ລອງວາດພາບເບິ່ງວ່າຖ້າອົງພຣະເຢຊູຢູ່ກັບພວກເຮົາໃນທຸກວັນນີ້ ພຣະອົງຈະວ່າຢ່າງໃດກັບສັງຄົມຂອງພວກເຮົາ?

ພຣະອາຈານໄດ້ກ່າວວ່າ, "ເຮົາບອກທ່ານຕາມຄວາມຈິງວ່າ...(8:12). ເປັນຄຳເວົ້າສອດເຂົ້າໄປເລື້ອຍໆໃນປື້ມຂ່າວປະເສີດມາຣະໂກ. ຕໍ່ມາພຣະເຢຊູໄດ້ໃຫ້ຄຳຕອບວ່າ, "ຈະບໍ່ຊົງໂຜດໝາຍສຳຄັນແກ່ຄົນໃນສມັຍນີ້" (8:12). ອົງພຣະເຢຊູຮູ້ແລ້ວ ຖ້າພຣະອົງໃຫ້ເຂົາໄດ້ເຫັນໝາຍສຳຄັນອີກ ພວກເຂົາກໍຍັງຄົງບໍ່ເຊື່ອຟັງ. ຍິ່ງໄປກວ່ານັ້ນ ພວກເຂົາອາດເຊື່ອໃນທາງຜິດກໍໄດ້-ຊອກຫາໝາຍສຳຄັນຂອງພຣະເມຊີອາ ແທນທີ່ຈະຊອກຫາພຣະເມຊີອາຜູ້ເຮັດໝາຍສຳຄັນ. ເຊັ່ນດຽວກັນໃນປື້ມມັດທາຍ, ພຣະເຢຊູໄດ້ກ່າວວ່າ ເຂົາໄດ້ເຫັນແລ້ວ "ໝາຍສຳຄັນຂອງໂຢນາ" (ມັດທາຍ 12:38-42). ທີ່ກ່ຽວຂ້ອງກັບການຄືນມາຈາກຕາຍຂອງອົງພຣະເຢຊູ. ພຣະເຢຊູໄດ້ກ່າວເຖິງພຣະພອນອັນໃຫຍ່ທີ່ມີໄວ້ສຳລັບຜູ້ທີ່ເຊື່ອ ທີ່ບໍ່ໄດ້ຊອກຫາໝາຍສຳຄັນອັນໃດ.

ພຣະອົງຕອບພວກເຂົາ, "ພຣະອົງໄດ້ສະເດັດໜີອອກໄປ" (8:13). ບໍ່ມີຫລາຍປໂຍກເປັນຄຳເສົ້າໃຈຄືວ່າ, "ພຣະອົງໄດ້ສະເດັກໜີອອກໄປ" ເປັນສິ່ງສອນໃຫ້ຮູ້ວ່າ ຜູ້ໃດກໍຕາມເລືອກເອົາຫົນທາງທີ່ບໍ່ຍອມກົ້ມຂາບລົງຕໍ່ພຣະເຈົ້າອົງທ່ຽງແທ້ແຕ່ອົງດຽວ ພຣະອົງກໍຈະເຮັດຢ່າງນີ້ແຫລະຕໍ່ຄົນເຫລົ່ານັ້ນ. ຜູ້ທີ່ຢືນຢູ່ໃກ້ກວ່າພາບທີ່ເຫັນອາດຈະໜີອອກໄປໂດຍທີ່ບໍ່ຮູ້ສຶກຕົວ.

## 2. <u>ພວກສາວົກເບິ່ງບໍ່ເຫັນ</u> (8:14-21)

ໃນຂະນະທີ່ມານຍັງຈື່ອົງພຣະເຢຊູໄດ້ວ່າພຣະອົງເປັນໃຜ, ແຕ່ພວກສາວົກເລີຍບໍ່ຮູ້ຫຍັງເລີຍ. ແສງຕາບໍ່ດີໄດ້ປິດບັງພວກເຂົາໄວ້ຕລອດມາ. ພວກເຂົາລືມເອົາເຂົ້າຈີ່ໄປນຳເວລາເດີນທາງ (8:14).

ພຣະເຢຊູໄດ້ໃຊ້ເຂົ້າຈີ່ເປັນບົດຮຽນ. ພຣະອົງໄດ້ເຕືອນພວກສາວົກໃຫ້ "ລະວັງເຊື້ອແປ້ງຂອງພວກຟາຣີຊາຍ ແລະຂອງເຮໂຣດໃຫ້ດີ" (8:15). ເຊື້ອແປ້ງໝາຍເຖິງຄວາມຊົ່ວ. ເຊື້ອແປ້ງແມ່ນກ້ອນທີ່ເຫລືອອົບມາກ່ອນນັ້ນ. ເຊື້ອແປ້ງເຮັດໃຫ້ເຂົ້າຈີ່ໂພງຂຶ້ນ ໝາຍເຖິງການຊັກຊວນ. ຄຳສອນຊົ່ວ ( "ເຊື້ອແປ້ງຂອງພວກຟາຣີຊາຍ" ) ສາມາດທຳລາຍເຮັດໃຫ້ສັງຄົມເສື່ອມເສັຽໄປ.

ອົງພຣະເຢຊູໄດ້ເຕືອນເປັນຢ່າງພິເສດໃຫ້ລະວັງຕົວກັບພວກຟາຣີຊາຍ ແລະເຮໂຣດ. ເຊື້ອແປ້ງຂອງພວກຟາຣີຊາຍ ແມ່ນການໜ້າຊື່ໃຈຄົດ, (ລູກາ 12:1). ແຕ່ "ເຮໂຣດ" ແມ່ນຜູ້ທີ່ພຣະເຢຊູໄດ້ກ່າວເຖິງ ຄືເຮໂຣດແອງຕີປາ ຜູ້ເປັນຕົວແທນຂອງຝ່າຍໂລກ. ເຊື້ອແປ້ງຂອງ ເຮໂຣດ ແມ່ນການເມືອງຊົ່ວ, ສ່ວນຂອງພວກຟາຣີຊາຍ ແມ່ນຄວາມເຊື່ອຜິດ. ພວກເຂົາປາຖນາຢາກໃຫ້ມີການພົວພັນກັບສອງພວກນີ້ໃນໂລກນີ້ເພື່ອຈະໄດ້ຊັກຊວນໃນທາງຜິດ.

ເປັນການແປກໃຈຫລັງຈາກອົງພຣະເຢຊູໄດ້ສິດສອນແລ້ວ ພວກສາວົກຊອກຫາເຫດຜົນແລະກ່າວວ່າ, "ເຫັນເພາະເຮົາບໍ່ມີເຂົ້າຈີ່" (ມາຣະໂກ 8:16). ພວກເຂົາເປັນຄົນຕາບອດເຖິງສິ່ງພຣະເຢຊູໄດ້ກ່າວນັ້ນ. ພຣະເຢຊູໄດ້ເຮັດໃຫ້ເຂົາຮູ້ຢ່າງແນ່ນອນດ້ວຍກ່າວວ່າ, (8:17), "ພວກທ່ານຍັງບໍ່ສັງເກດ ແລະບໍ່ເຂົ້າໃຈຫລື...?"

ບັນຫາຂອງພວກສາວົກນັ້ນບໍ່ແມ່ນພວກເຂົາມີສາຍຕາບໍ່ດີ ແຕ່ເປັນຍ້ອນໃຈແຂງກະດ້າງ. ຄຳເວົ້າຂອງຜູ້ປະກາດພຣະທັມໄດ້ກາຍເປັນຄວາມຈິງໃນສມັຍຂອງພຣະເຢຊູ. "ຈົ່ງເອົາໃຈໃສ່ຊົນຊາດທີ່ໂງ່ຈ້າ ແລະບໍ່ມີຄວາມຄິດເອີຍ ຜູ້ທີ່ມີຕາແຕ່ເບິ່ງບໍ່ເຫັນ ຜູ້ທີ່ຫູແຕ່ບໍ່ໄດ້ຍິນ" (ເຢເລມີຢາ 5:21). ຄົນອິສຣາເອນ "ເຂົາມີຕາແຕ່ເຂົາເບິ່ງບໍ່ເຫັນຫຍັງ, ເຂົາມີຫູແຕ່ເຂົາຟັງບໍ່ໄດ້ຍິນຫຍັງ ເພາະເຂົາເປັນຄົນກະບົດ" (ເອເຊກຽນ 12:2).

ພຣະເຢຊູໄດ້ເຕືອນສາວົກເຖິງການອັສຈັນສອງຢ່າງເວລາລ້ຽງຄົນເປັນຈຳນວນຫລາຍ (ມາຣະໂກ 8:19-20; ເບິ່ງ 6:30-44; 8:1-9). ຫລັງຈາກຊົງລ້ຽງຄັ້ງທີນຶ່ງເຫລືອສິບສອງກະບຸງ. ຄັ້ງທີສອງເຫລືອເຈັດກະບຸງ. ເປັນຄວາມຈິງພຣະເຈົ້າຊ່ອຍພວກເຮົາເກີນຄວາມເຂົ້າໃຈ. ເວລານີ້ອົງພຣະເຢຊູໄດ້ໃຊ້ການອັສຈັນສຸດທ້າຍ ເປັນຄຳຖາມທີ່ແນບນຽນດີ "ພວກທ່ານຍັງບໍ່ເຂົ້າໃຈຫລື?" (8:21). ເພາະພວກສາວົກໄດ້ຈົດຈໍ່ຫາແຕ່ເຂົ້າຈີ່ທີ່ລ້ຽງຮ່າງກາຍເທົ່ານັ້ນ ເຖິງແມ່ນພວກເຂົາໄດ້ຢູ່ກັບພຣະເຢຊູ ຜູ້ໄດ້ລ້ຽງຄົນເປັນຈຳນວນຫລາຍເຖິງສອງຄັ້ງ ໂດຍເຂົ້າຈີ່ບໍ່ຫລາຍກ້ອນ ແລະປາໜ້ອຍດຽວ.

ການທີ່ຈະເອົາບົດຮຽນເຂົ້າມາໃຊ້ໃນຊີວິດປະຈຳວັນນັ້ນແຈ່ມແຈ້ງດີ. ຕາບອດ "ສາຍຕາບໍ່ດີ" ຂອງພວກສາວົກຜູ້ທີ່ຢູ່ກິນ, ຍ່າງໄປມາ ແລະມີຄວາມຊົມຊື່ນຍິນດີຄຽງຂ້າງພຣະເຢຊູ-ພວກເຂົາບໍ່ເຫັນຄັກດີວ່າພຣະອົງເປັນຜູ້ ໃດ. ພວກນີ້ຄວນຈະເຫັນແລະເຂົ້າໃຈວ່າພຣະເຢຊູເປັນຜູ້ໃດກັນແທ້ຢ່າງຄັກແນ່, ພາບທີ່ເຫັນນັ້ນອາດໃກ້ກວ່າຕົວຈິງ.

### 3. <u>ການປົວຂອງພຣະເຢຊູປລາດທີ່ສຸດ</u> (8:22-26)

ຄັ້ງທີສາມ ຮູບພາບຂອງຄວາມບອດນັ້ນໄດ້ແນ່ໃສ່ການປົວຂອງພຣະເຢຊູທີ່ແປກປລາດ. ມັນປະກອບດ້ວຍການຖົ່ມນ້ຳລາຍໃຊ້ຕາສອງເທື່ອຈາກຜູ້ປົວ ກ່ອນຊາຍຄົນນັ້ນຈະເຫັນຮຸ່ງໄດ້ເປັນປົກກະຕິ.

ພຣະຄຳໄດ້ກ່າວວ່າ, "ພວກເຂົາໄດ້ເຂົ້າມາເມືອງເບດຊາອີດາ" (8:22). ມີຄົນຕາບອດຄົນນຶ່ງຖືກນຳມາຫາພຣະເຢຊູ. ການເປັນຄົນຕາບອດນັ້ນແມ່ນການສາບແຊ່ງຂອງຄົນໃນຖິ່ນນັ້ນ, ຫລາຍເທື່ອພະຍາດຕາບອດເກີດຂຶ້ນຈາກພະຍາດຕ່າງໆ, ແສງເຫລື້ອມຂອງແສງຕາເວັນ, ແລະການບໍ່ສະອາດ.

ພຣະເຢຊູ "ຖົ່ມນ້ຳລາຍໃສ່ຕາຂອງຄົນນັ້ນ" (8:23). ຫລັງຈາກພາຄົນນັ້ນອອກຈາກເມືອງ. ພຣະເຢຊູໄດ້ບາຍຕາຄົນນັ້ນ ແລະຖາມວ່າ ໄດ້ເຫັນຫຍັງບໍ່?. ພຣະເຢຊູໄດ້ຮູ້ຄຳຕອບແລ້ວ ແຕ່ພຣະອົງບໍ່ໄດ້ຖາມວ່າຊາຍຄົນນັ້ນເຫັນ <u>ດີບໍ່</u> ແຕ່ຊົງຖາມວ່າໄດ້<u>ເຫັນຫຍັງບໍ່</u>? ຊາຍຄົນນັ້ນຕອບແບບຕ່າງໆແມ່ນບໍ່? ລາວຕອບວ່າ "ຂ້ານ້ອຍເຫັນຄົນຍ່າງໄປມາແຕ່ເບິ່ງເໝືອນຕົ້ນໄມ້" (8:24). ເພາະຊາຍຄົນນັ້ນຍັງປົວບໍ່ໄດ້ດີຄັກເທື່ອ.

ດັ່ງນັ້ນ, ພຣະເຢຊູໄດ້ວາງມືໃສ່ຕາຄົນນັ້ນ "ອີກເທື່ອນຶ່ງ" (8:25). ວາງມືໃສ່ຄັ້ງທີສອງນີ້ "ຕາຂອງຊາຍຄົນນັ້ນໄດ້ເປີດອອກ, ສາຍຕາໄດ້ກັບຄືນມາເໝືອນເດີມ, ແລະລາວໄດ້ເຫັນທຸກຢ່າງດີເປັນປົກກະຕິ" (8:25). ການອັສຈັນທັງສອງຄັ້ງຮວມເຂົ້າກັນເປັນຢ່າງດຽວໃນການປະກາດຂອງພຣະເຢຊູ.

ພຣະເຈົ້າມີພຣະປະສົງຢາກໃຫ້ລູກຂອງພຣະອົງບໍ່ພຽງແຕ່ເຫັນຮຸ່ງ ແຕ່ພຣະອົງຢາກໃຫ້ພວກເຮົາເຫັນຮຸ່ງຄັກດີ. ແນ່ນອນ ພຣະເຢຊູສາມາດປະທານໃຫ້ພວກເຮົາເຫັນໄດ້ດີບາດດຽວ. ແຕ່ເປັນດ້ວຍເຫດໃດພຣະອົງຕ້ອງເຮັດການອັສຈັນເຖິງສອງຄັ້ງເຮົາບໍ່ເຂົ້າໃຈ. ແຕ່ຢ່າງໃດກໍຕາມ ໃນປຶ້ມມາຣະໂກນີ້ເຫັນວ່າເພາະພວກສາວົກບໍ່ເຂົ້າໃຈແລະພວກເຂົາຕ້ອງການສືບຕໍ່ຮຽນຮູ້ວ່າອົງພຣະເຢຊູເປັນໃຜກັນແທ້.

ປົວພະຍາດຊາຍຜີເຂົ້າ (5:19-20) ໃນເມື່ອປົວດີແລ້ວ ພຣະອົງບອກໃຫ້ກັບບ້ານ (8:26). ສັງເກດ, ພຣະເຢຊູສັ່ງລາວກັບບ້ານ. ພຣະເຈົ້າເປັນຜູ້ສັ່ງເຮົາອອກໄປຕາມບ່ອນຕ່າງໆ ຄືໃຫ້ພວກເຮົາເຊື່ອຟັງພຣະອົງ. ພຣະອົງບອກລາວກັບບ້ານເພື່ອຈະເປັນພະຍານ ຖ້າໄປບ່ອນອື່ນຄຳພະຍານຂອງລາວອາດຈະບໍ່ມີພະລັງ. ພຣະເຢຊູສັ່ງລາວກັບບ້ານແທນທີ່ຈະໃຫ້ລາວເຂົ້າຮ່ວມກັບພວກສາວົກສິບສອງຄົນ. ພຣະເຢຊູໄດ້ສັ່ງລາວອອກໄປປະກາດຕໍ່ຜູ້ຄົນທີ່ລາວຮູ້ຈັກສະພາບຂອງລາວເຄີຍເປັນມາ. ພຣະເຢຊູບອກລາວໄປ, "ຢ່າເຂົ້າໄປໃນບ້ານເມືອງ" (8:26). ຢ່າງໃດກໍຕາມສິ່ງທີ່ພຣະເຢຊູໄດ້ເຮັດນັ້ນ ພຣະອົງໄດ້ມີນ້ຳພຣະທັຍເຖິງການປະກາດ ແລະຮັບໃຊ້. ຄົນນັ້ນມີດສງັດຢູ່ນັ້ນເປັນແຜນການທີ່ພຣະອົງຕ້ອງເປີດເຜີຍຕົນເອງວ່າເປັນອົງພຣະຄຣິດຜູ້ "ຕ້ອງທຸກທໍຣະມານ" ແທນທີ່ຈະເປັນເຈົ້ານາຍໃນໂລກ ຫລືນາຍທະຫານຜູ້ຍິ່ງໃຫຍ່ (8:31).

ລອງວາດພາບເບິ່ງວ່າຄົນຕາບອດໄດ້ເຫັນຮຸ່ງເປັນປົກກະຕິຄັ້ງທຳອິດ ລາວຈະມີຄວາມຍິນດີຫລາຍປານໃດ. ແນ່ນອນຄົນທຳອິດລາວເຫັນນັ້ນຄືແມ່ນພຣະເຢຊູ. ສຳລັບຊາຍຄົນນັ້ນຜູ້ຢູ່ໃນຄວາມມືດເພາະຕາບອດຕລອດຊີວິດມາ ພຣະເຢຊູຢູ່ໃກ້ລາວກວ່າພາບທີ່ເຫັນໃນແວ່ນ.

**ນຳເອົາຄວາມຈິງເຂົ້າມາປະກອບໃນຊີວິດ**

ຕາບອດໄດ້ເກີດຂຶ້ນຈາກຫລາຍຮູບແບບ. ພວກຟາຣີຊາຍບໍ່ສາມາດເຫັນໄດ້ເພາະພວກເຂົາເຮັດຕາມກົດເກນແລະມີຖືສາກ ປາກຖືສິນ. ພວກສາວົກເປັນຄົນຕາບອດເພາະພວກເຂົາໄດ້ເອົາໃຈໃສ່ຕໍ່ກັບຄວາມຕ້ອງການປະຈຳວັນ. ຊາຍທີ່ຢູ່ໃນເມືອງ ເບັດເຊດາອີ ໄດ້ຮັບຄວາມທຸກທາງຮ່າງກາຍ. ເຖິງຄົນເຮົາໄດ້ຕາບອດໃນສະພາບໃດກໍຕາມ: ທາງຮ່າງກາຍ ແລະຈິດວິນຍານ ອົງພຣະເຢຊູສາມາດຊ່ອຍໃຫ້ດີໄດ້.

__ຄຳຖາມ:__

1. ເປັນດ້ວຍເຫດໃດ ຈຶ່ງເປັນການຍາກທີ່ພວກຟາຣີຊາຍຈະຮູ້ຈັກກັບພຣະເຢຊູວ່າພຣະອົງເປັນຜູ້ໃດກັນແທ້?

2. ຫຼັງຈາກເຫັນພຣະເຢຊູລ້ຽງຄົນສີ່ພັນແລ້ວ ເປັນຫຍັງພວກສາວົກຈຶ່ງຂາດຄວາມເຂົ້າໃຈວ່າພຣະອົງເປັນໃຜກັນແທ້?

3. ຕາມຄວາມເຂົ້າໃຈຂອງທ່ານ ເປັນຫຍັງພຣະເຢຊູຈຶ່ງປົວຄົນຕາບອດເຖິງສອງເທື່ອຈຶ່ງດີໄດ້?

4. ເຮັດແນວໃດທ່ານຄິດວ່າທ່ານຈະສາມາດເຫັນອົງພຣະເຢຊູໄດ້ດີ?

5. ຈະນຳເອົາບົດຮຽນນີ້ ທີ່ອົງພຣະເຢຊູໄດ້ປົວຄົນຕາບອດເຫັນຮຸ່ງ ໄປບອກໃຫ້ໂລກທີ່ຕາບອດເຫັນໄດ້?

*ບວ*

# ບົດຮຽນທີ 8
# ບໍ່ແມ່ນທາງງ່າຍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 8: 27-38
**ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ:** ມາຣະໂກ 8: 27-38
**ຈຸດສຳຄັນຂອງບົດຮຽນນີ້:** ມີບ່ອນດຽວທີ່ເໝາະສົມສຳລັບທຸກຄົນຄືຢູ່ຂ້າງຫລັງພຣະເຢຊູ, ຕິດຕາມພຣະອົງ, ເຖິງວ່າທາງນັ້ນຈະບໍ່ແມ່ນທາງທີ່ງ່າຍ.
**ຄຳຖາມເພື່ອການສຳຣວດ:** ທ່ານຢູ່ໃສຖ້າເບິ່ງໃສ່ພຣະເຢຊູ-- ຂ້າງໜ້າ, ຂ້າງຫລັງ, ຢູ່ໄກແສນໄກ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອເຂົ້າໃຈຄວາມໝາຍຂອງພຣະທັມໃນຕອນນີ້ສຳລັບຊີວິດຂ້າພະເຈົ້າ ແລະເພື່ອຕອບສນອງ ພຣະເຢຊູໂດຍການຢັ້ງຢືນ ຫລືຢັ້ງຢືນອີກເທື່ອນຶ່ງເຣື່ອງຂໍ້ຜູກມັດຂອງຂ້າພະເຈົ້າກັບພຣະອົງ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດກັບທຸກໆຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍການຊ່ວຍເຫລືອຜູ້ມີຄວາມຕ້ອງການດ້ານວັດຖຸ, ຈິດວິນຍານ, ແລະຄວາມຮູ້ສຶກ.
- ຈັດຕຽມຄົນໃຫ້ເປັນຜູ້ນຳແບບຮັບໃຊ້.

## ຄຳນຳ

ການຕິດຕາມພຣະເຢຊູບໍ່ແມ່ນເຣື່ອງງ່າຍ, ແຕ່ເປັນເຣື່ອງທີ່ເປັນໄປໄດ້. ການຕິດຕາມພຣະເຢຊູ (ໂດຍບໍ່ໄປກ່ອນພຣະອົງຫລືຫລົງທາງຈາກພຣະອົງ) ສາມາດເປັນໄປໄດ້ເວລາພວກເຮົາຮູ້ຈັກກັບພຣະອົງ, ໄວ້ວາງໃຈໃນພຣະອົງ, ແລະມີຍົມຊົມຊອບໃນພຣະອົງ.

ພຣະທັມມາຣະໂກບອກຄວາມຈິງກ່ຽວກັບຄວາມສັມພັນຣະຫວ່າງພວກເຮົາແລະພຣະເຢຊູ. ຜ່ານການພົບກັນຂອງພຣະເຢຊູກັບເປໂຕ ແລະສາວົກຄົນອື່ນໆ, ພວກເຮົາໄດ້ພິສູດເບິ່ງຄວາມເຂົ້າໃຈຂອງພວກເຮົາວ່າພຣະເຢຊູແມ່ນໃຜ ແລະ ຄວາມຕັ້ງໃຈຂອງພວກເຮົາທີ່ຈະຕິດຕາມພຣະອົງ, ເຖິງວ່າການຕິດຕາມພຣະອົງບໍ່ແມ່ນເຣື່ອງງ່າຍ.

**ຕິດຕາມບຸກຄົນທີ່ທ່ານຮູ້ຈັກ** (8: 27-30)
ພຣະເຢຊູຊົງຖາມພວກສາວົກຄຳຖາມທີ່ສຳຄັນທີ່ສຸດ. "ຄົນທັງຫລາຍເວົ້າວ່າເຮົາແມ່ນຜູ້ໃດ?" (ມາຣະໂກ 8:27). ໃນສມັຍນັ້ນມີການເລົ່າລືກັນເຣື່ອງວ່າບຸກຄົນຊື່ເຢຊູນັ້ນແມ່ນຜູ້ໃດ ແລະລາວບໍ່ແມ່ນຜູ້ໃດ. ນອກນັ້ນ ບາງຄົນໃນບ້ານເກີດຂອງທ່ານບັງເກີດ "ມີໃຈໝ່າຍແໜງພຣະອົງ" (ມາຣະໂກ 6:3). ຫລາຍຄົນບໍ່ຍອມຮັບຄຳສອນຂອງພຣະອົງ ແລະຍັງເວົ້າວ່າເຢຊູເປັນພຽງມະນຸດຜູ້ນຶ່ງເທົ່ານັ້ນ. ພວກນັກທັມໄດ້ກ່າວຫາວ່າພຣະເຢຊູ "ມີຜີເບເອນເຊບູນສິງຢູ່" (ມາຣະໂກ

3:22). ແມ່ນແຕ່ພວກສາວົກກໍຄິດວ່າພຣະເຢຊູແມ່ນໂຢຮັນບັບຕິສະໂຕ, ເອລີຢາ, ຫລືຜູ້ນຶ່ງໃນພວກຜູ້ປະກາດພຣະທັມ (8:28). ຄຳຖາມທີ່ວ່າຄົນທັງຫລາຍເວົ້າວ່າພຣະເຢຊູແມ່ນຜູ້ໃດຈຶ່ງກາຍເປັນເຣື່ອງທີ່ຕອບໄດ້ງ່າຍ.

ແຕ່ຫລັງຈາກນັ້ນແມ່ນຄຳຖາມທີສອງ (8:29): "ພວກທ່ານເດ ວ່າເຮົາແມ່ນໃຜ?" ຄຳຖາມຄຳນີ້ເປັນເຣື່ອງທີ່ຕອບຍາກ ເພາະຄຳຕອບສຳລັບຄຳຖາມນີ້ ມີຄວາມໝາຍສຳລັບຊີວິດພວກເຮົາ. ຄຳຕອບຂອງພວກເຮົາຈະບອກໃຫ້ຮູ້ວ່າພວກເຮົາຈະຕິດຕາມພຣະອົງຫລືບໍ່. ພວກເຮົາຄົງຈະບໍ່ຕິດຕາມບຸກຄົນທີ່ພວກເຮົາບໍ່ຮູ້ເລີຍ?

ເວລາເປໂຕຕອບວ່າ "ທ່ານແມ່ນພຣະຄຣິດ," ລາວໄດ້ຢັ້ງຢືນຄຳທຳນວາຍໃນພຣະສັນຍາເດີມເຣື່ອງພຣະເມຊີອາ ຜູ້ທີ່ພຣະເຈົ້າໄດ້ເລືອກ ແລະຊົງສັນຍາໄວ້. "ພຣະຄຣິດ" ຊຶ່ງແມ່ນພາສາກຣີກ ມີຄວາມໝາຍດຽວກັນກັບຄຳວ່າ "ພຣະເມຊີອາ" ໃນພາສາເຮັບເຣີ. ເວລາເປໂຕຕອບວ່າພຣະເຢຊູຊົງເປັນພຣະຄຣິດ, ລາວໄດ້ບອກວ່າລາວໄດ້ເຊື່ອວ່າພຣະເຢຊູຊົງເປັນພຣະຜູ້ຊ່ອຍໃຫ້ພົ້ນທີ່ພຣະເຈົ້າໄດ້ຊົງສັນຍາໄວ້. ພຣະເຢຊູຊົງສັ່ງພວກສາວົກບໍ່ໃຫ້ບອກເຣື່ອງນີ້ແກ່ຄົນອື່ນໆ (8: 30). ພຣະເຢຊູຊົງຮູ້ຄວາມສຳຄັນເຣື່ອງເວລາຂອງພຣະເຈົ້າໃນຊີວິດແລະການຮັບໃຊ້ຂອງພຣະອົງສເມີ (ໂຢຮັນ 2: 4; 17:1).

## <u>ຕິດຕາມບຸກຄົນທີ່ທ່ານໄວ້ວາງໃຈ</u> (8: 31-37)

ຫລັງຈາກທີ່ພຣະເຢຊູຊົງບອກພວກສາວົກບໍ່ໃຫ້ບອກຄົນອື່ນວ່າພຣະອົງແມ່ນໃຜ ແລ້ວ, ພຣະອົງກໍເລີ້ມບອກພວກເຂົາເຖິງອະນາຄົດຂອງພຣະອົງ. ພຣະອົງຊົງກ່າວວ່າພວກຜູ້ນຳສາສນາຈະຕໍ່ຕ້ານພຣະອົງ ແລະຈະຂ້າພຣະອົງ, ແລະພຣະອົງຊົງບອກວ່າພຣະອົງຈະເປັນຄືນມາຈາກຄວາມຕາຍໃນວັນຖ້ວນສາມ. (ມາຣະໂກ 8:31; 9:31; 10:33-34).

ເປໂຕຕໍ່ຕ້ານພຣະເຢຊູໃນສິ່ງທີ່ພຣະອົງບອກວ່າຈະເກີດຂຶ້ນ (8:32). ມັດທາຍໄດ້ຂຽນໄວ້ວ່າ "ການນີ້ຈະບໍ່ເກີດຂຶ້ນແກ່ທ່ານຈັກເທື່ອ" (ມັດທາຍ 16:22). ເຖິງວ່າພຣະເຢຊູຈະໄດ້ຊົງເວົ້າເຣື່ອງນີ້ອີກໃນເວລາຕໍ່ມາ, ພວກສາວົກກໍບໍ່ສາມາດເຂົ້າໃຈຄວາມໝາຍເຣື່ອງພຣະອົງຈະຖືກຂ້າ ແລະຫລັງຈາກສາມວັນພຣະອົງຈະຟື້ນຄືນຈາກຄວາມຕາຍ (ມຣກ 9:32)

ພຣະເຢຊູຊົງຕອບການຕໍ່ຕ້ານຂອງເປໂຕໂດຍການຕໍ່ຕ້ານຕົວມານຊາຕານເອງ. ພຣະອົງຊົງເຕືອນເປໂຕວ່າເຂົາໄດ້ຄິດຢ່າງມະນຸດ ແລະບໍ່ຄິດຢ່າງພຣະເຈົ້າ (8:33). ວິສັຍທັດ (ນິມິດໝາຍ) ຂອງພຣະຄຣິດໄດ້ມາຈາກພຣະເຈົ້າ, ແລະພຣະອົງຈະບໍ່ໃຫ້ມານຊາຕານມາເຮັດໃຫ້ວິສັຍທັດນັ້ນມືດມົວໄປ.

ຄຳຕອບຂອງພຣະເຢຊູເຕືອນພວກເຮົາວ່າ ສາວົກຈະຕ້ອງຢູ່ຂ້າງຫລັງ, ບໍ່ແມ່ນຈະຢູ່ຂ້າງໜ້າພຣະອົງ ຫລືຫລົງທາງຈາກພຣະອົງ. ການຕິດຕາມພຣະເຢຊູແມ່ນການຕັດສິດຂອງຕົນເອງ, ການຖືກຄົນປະຕິເສດ, ແລະການເສັຽສະລະ (8: 34-35). ພວກເຮົາໄດ້ກາຍເປັນລູກຂອງພຣະເຈົ້າ ໂດຍການໄວ້ວາງໃຈໃນພຣະເຢຊູ ແລະການສາຣະພາບວ່າ ພຣະອົງຄືພຣະບຸດຂອງພຣະເຈົ້າ (1 ໂຢຮັນ 4:1-3) ຜູ້ຊົງຕາຍແທນເຮົາເທິງໄມ້ກາງແຂນ ແລະຊົງເປັນຄືນມາຈາກຄວາມຕາຍ (ໂຣມ 10: 9-10). ໃນການຍອມເສັຽຊີວິດເພື່ອການຮັບໃຊ້ພຣະເຈົ້າ ແລະເພື່ອຂ່າວປະເສີດ, ບຸກຄົນນັ້ນຈະຊ່ອຍຊີວິດຂອງຕົວເອງ ຊຶ່ງໝາຍເຖິງຊີວິດຊົ່ວຄາວໃນໂລກນີ້ ແລະຊີວິດນິຣັນ.

## <u>ຕິດຕາມຜູ້ທີ່ທ່ານນິຍົມຊົມຊອບ</u> (8:38)

ໃນຕອນນີ້ ພຣະເຢຊູຊົງຮູ້ວ່າຈະມີຫລາຍໆຄົນທີ່ລັງເລໃຈບໍ່ເຮັດຕາມຄຳສັ່ງສອນຂອງພຣະອົງ; ພຣະອົງຈຶ່ງຊົງໃຊ້ຄຳເດັດຂາດສຳລັບບຸກຄົນທີ່ອາດຈະມີຄວາມລະອາຍເພາະຖ້ອຍຄຳຂອງພຣະອົງ. ສລູບແລ້ວກໍຄືວ່າ ຖ້າພວກເຮົາມີຊີວິດ

ເພື່ອຕົວເອງ, ພວກເຮົາກໍຈະເສັຽຊີວິດ ແລະພຣະອົງກໍຈະມີຄວາມອາຍເພາະພວກເຮົາ; ແຕ່ຖ້າພວກເຮົາມີຊີວິດເພື່ອພຣະຄຣິດ, ພວກເຮົາຈະຮັກສາຊີວິດຂອງຕົນເອງ ແລະຈະໄດ້ຖວາຍພຣະກຽດແດ່ພຣະອົງ (ໂຢຮັນ 12: 23-28). ພຣະເຢຊູຊົງກ່າວໃນຕອນນີ້ວ່າ, "ດັ່ງນັ້ນທຸກຄົນທີ່ຈະຮັບເຮົາຕໍ່ໜ້າມະນຸດ ຝ່າຍເຮົາຈະຮັບຜູ້ນັ້ນຕໍ່ພຣະພັກພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສວັນເໝືອນກັນ. ແຕ່ຜູ້ທີ່ປະຕິເສດເຮົາຕໍ່ໜ້າມະນຸດ ຝ່າຍເຮົາກໍຈະປະຕິເສດຜູ້ນັ້ນຕໍ່ພຣະພັກພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສວັນເໝືອນກັນ" (ມັດທາຍ 10: 32-33).

ການເປັນສາວົກທີ່ດີຈະຊ່ວຍພວກເຮົາບໍ່ໃຫ້ເສັຽເວລາໃນຊີວິດນີ້. ແນ່ນອນ, ການເປັນສາວົກໝາຍເຖິງການແບກໄມ້ກາງແຂນຂອງຕົນເພື່ອຕິດຕາມພຣະເຢຊູ; ແຕ່ການທຸກລຳບາກນັ້ນຈະນຳໄປສູ່ສະງ່າຣາສີໃນບັ້ນປາຍ.

## ຄວາມໝາຍແລະການປະຕິບັດ

ການສາຣະພາບພຣະເຢຊູວ່າເປັນພຣະຄຣິດຈະຊ່ວຍພວກເຮົາໃຫ້ຕິດຕາມພຣະອົງ ຊຶ່ງບໍ່ແມ່ນການຢູ່ຂ້າງໜ້າພຣະອົງ ຫລືການແຍກທາງອອກຈາກພຣະອົງ. ການໄວ້ວາງໃຈວ່າພຣະເຢຊູເປັນພຣະຄຣິດຈະຊ່ວຍພວກເຮົາໃຫ້ໄດ້ຕິດຕາມຄຳສັ່ງສອນຂອງພຣະອົງເຣື່ອງການຕັດສິດຂອງຕົນ ແລະການແບກໄມ້ກາງແຂນຂອງຕົນ. ການນິຍົມຊົມຊອບພຣະເຢຊູວ່າເປັນພຣະຄຣິດຈະຊ່ວຍພວກເຮົາໃຫ້ກ້າເວົ້າເຣື່ອງພຣະອົງຢ່າງເປີດແປນກັບທຸກງຄົນ.

## ຄຳຖາມ

1. ທ່ານຄິດວ່າເປັນຫຍັງພຣະເຢຊູຈຶ່ງຊົງສັ່ງພວກສາວົກບໍ່ໃຫ້ບອກຄົນອື່ນໆວ່າພຣະອົງຊົງເປັນພຣະຄຣິດ?

2. ແມ່ນຫຍັງເຮັດໃຫ້ເປໂຕຕໍ່ຕ້ານຄຳພຍາກອນຂອງພຣະເຢຊູກ່ຽວກັບເຣື່ອງທີ່ຈະເກີດຂຶ້ນກັບພຣະອົງໃນອະນາຄົດ?

3. ທ່ານມີວິທີໃດແດ່ທີ່ຈະບອກຄົນອື່ນ ເຖິງຄວາມເຂົ້າໃຈຂອງທ່ານວ່າພຣະເຢຊູແມ່ນຜູ້ໃດ?

4. ທ່ານພົບກັບອຸປສັກແນວໃດແດ່ ໃນການຕິດຕາມພຣະເຢຊູຂອງທ່ານ?

5. ມີຄຳສອນຂອງພຣະເຢຊູໃນຕອນໃດທີ່ເຮັດໃຫ້ບາງຄົນເກີດມີຄວາມລະອາຍເຣື່ອງພຣະອົງ?

## ປະຕິບັດຕາມຄຳສອນຂອງພຣະເຢຊູ

- ຂຽນລົງເປັນລາຍການວ່າມີສິ່ງໃດແດ່ທີ່ທ່ານຍັງພຍາຍາມຊ່ອຍຊີວິດຕົນເອງຢູ່.
- ອ້ອນວອນພາວັນນາໃນສິ່ງທີ່ທ່ານພຍາຍາມສັບປ່ຽນແທນຊີວິດຂອງທ່ານ.
- ຊອກຫາໂອກາດເພື່ອທ່ານຈະໄດ້ແບກໄມ້ກາງແຂນຂອງຕົນເພື່ອຕິດຕາມພຣະເຢຊູ.
- ຊອກຫາເວລາທີ່ທ່ານຈະສາມາດສາຣະພາບຄວາມເຊື່ອໃນພຣະເຢຊູຢ່າງເປີດແປນ.

*ສຄ*

# ບົດຮຽນທີ 9
# ຕ້ອງແມ່ນ "ຂ້ອຍກ່ອນ"

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ມາຣະໂກ 9: 30-37
**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ມາຣະໂກ 9: 1-50
**ຈຸດສໍາຄັນຂອງບົດຮຽນນີ້:** ພວກເຮົາຈະຕ້ອງປ່ຽນນິສັຍທີ່ວ່າ "ຂ້ອຍກ່ອນ" ຖ້າເຮົາຢາກເປັນຜູ້ສັດຊື່ໃນການຕິດຕາມພຣະເຢຊູ.
**ຄໍາຖາມເພື່ອການສໍາຣວດ:** ມີຫຍັງຜິດບໍ່ ຖ້າທຸກຢ່າງຕ້ອງແມ່ນ "ຂ້ອຍກ່ອນ"? ນັ້ນຄືວິທີຂອງຄົນທັງໂລກບໍ່ແມ່ນບໍ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຮູ້ວ່າ ມີຫຍັງແດ່ທີ່ພຣະເຢຊູຕ້ອງການໃຫ້ພວກເຮົາປ່ຽນແປງຈາກຄວາມຄິດທີ່ວ່າຕ້ອງ "ຂ້ອຍກ່ອນ."

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ຄອບຄົວພຣະເຈົ້າທັງໝົດມີສ່ວນເຣື່ອງການຕັດສິນໃຈແລະການຮັບໃຊ້.
- ເຫັນທຸກຄົນວ່າຖືກສ້າງຂຶ້ນມາຕາມພຣະລັກສະນະຂອງພຣະເຈົ້າ.
- ສົ່ງເສີມຄອບຄົວໃຫ້ສົມບູນດີ.
- ຈັດຕຽມຄົນໃຫ້ເປັນຜູ້ນໍາແບບຮັບໃຊ້.

## ຄໍານໍາ

ພຣະເຢຊູຊົງເອົາຄວາມປາຖນາຢາກເປັນໃຫຍ່ຂອງພວກສາວົກ ແລ້ວປ່ຽນທິດທາງຈາກຄໍາວ່າ "ຂ້ອຍກ່ອນ" ໃຫ້ເປັນ "ຄົນອື່ນກ່ອນ." ພຣະອົງຊົງໃຊ້ເດັກນ້ອຍເພື່ອໃຫ້ຕົວຢ່າງລັກສະນະຂອງການຮັບໃຊ້ຂອງຄຣິສຕຽນ, ຊົງສອນວ່າການຮັບໃຊ້ຜູ້ທີ່ຕໍ່າຕ້ອຍ ແລະຜູ້ທີ່ຊ່ວຍຕົວເອງບໍ່ໄດ້ໃນສັງຄົມຄືຄວາມເປັນຈິງເຣື່ອງການຮັບໃຊ້ພຣະເຈົ້າ.

## ການສ້າງສາວົກໃນຂະນະທີ່ເດີນທາງໄປສູ່ໄມ້ກາງແຂນ (9:30-32)

ໃນຂະນະທີ່ພຣະເຢຊູແລະພວກສາວົກ "ດໍາເນີນຜ່ານແຂວງຄາລີເລ... ພຣະອົງຊົງສັ່ງສອນພວກສາວົກ" (9:30-31). ພຣະອົງໄດ້ຊົງສອນບົດຮຽນຍາກທີ່ພຣະອົງໄດ້ເລີ່ມໃນ 8:31 ຊຶ່ງເປໂຕໄດ້ຕໍ່ຕ້ານພຣະອົງໄປແລ້ວ. ມາເຖິງຕອນນີ້ພວກສາວົກກໍຍັງບໍ່ໄດ້ເຂົ້າໃຈເລີຍ (9:32).

## ຄວາມສັບສົນອັນຍິ່ງໃຫຍ່ (9:33-34)

ໂມຮາເມດ ອາລີ ເຄີຍຄຸຍໂມ້ວ່າລາວເປັນ "ນັກມວຍຜູ້ຍິ່ງໃຫຍ່." ມີຄົນຢ່າງຫລວງຫລາຍເກີດນິຍົມຊົມຊອບອາລີເພາະຖ້ອຍຄໍານີ້; ແລ້ວອາລີກໍເກັ່ງສົມກັບຄວາມຄຸຍໂມ້ຂອງລາວອີຫລີ. ນັກໂຄສະນາກິລາຜູ້ນຶ່ງກ່າວວ່າ "ການຄຸຍໂມ້ບໍ່ແມ່ນການຄຸຍໂມ້ ຖ້າເຮັດໄດ້ອີຫລີ."

ພຣະເຢຊູບໍ່ໄດ້ຕຳໜິພວກສາວົກທີ່ຢາກເປັນຜູ້ຍິ່ງໃຫຍ່. ພຣະອົງຕ້ອງການຢາກໃຫ້ສາວົກທຸກໆຄົນໄດ້ເປັນຜູ້ຍິ່ງໃຫຍ່. ໃນຄຳເວົ້າຂອງພຣະອົງທີ່ວ່າ "ຖ້າຜູ້ໃດຢາກເປັນຜູ້ຕົ້ນ..."(9:35), ພຣະອົງຊົງບອກໃຫ້ຮູ້ວ່າບໍ່ມີຫຍັງຜິດຖ້າຜູ້ໃດຜູ້ນຶ່ງຢາກຈະເປັນໃຫຍ່. ທີ່ຈິງແລ້ວ ພຣະອົງກໍໄດ້ຊົງສົ່ງເສີມໃຫ້ທຸກຄົນທຳງານໜັກຢູ່ແລ້ວໃນຄຳອຸປມາເຣື່ອງເງິນຕາລັນຕົນ (ມັດທາຍ 25: 14-30). ພຣະອົງຊົງປະນາມຂ້ອຍໃຊ້ທີ່ໄດ້ນຳເງິນໄປຝັງໄວ້.

ກ່ອນໜ້ານີ້ ພຣະອົງຊົງຖາມພວກສາວົກວ່າພວກເຂົາຖົກຖຽງກັນເຣື່ອງຫຍັງ, ແຕ່ສາວົກພາກັນມິດຢູ່. ພວກເຂົາອາດຈະລະອາຍໃຈທີ່ພວກຕົນໂຕ້ຖຽງກັນເຣື່ອງການເປັນໃຫຍ່. ໃນຕອນນີ້ ພຣະອົງຊົງຮ່ວມໃນການສົນທະນາ ເພາະພຣະອົງສົນໃຈໃນເຣື່ອງທີ່ພວກສາວົກກຳລັງຂ້ອງໃຈຢູ່ ແລະພຣະອົງຊົງຕ້ອງການຈະຊ່ວຍແຕ່ລະຄົນໃຫ້ພົບກັບຄວາມສຳເຣັດໃນການຢາກເປັນໃຫຍ່ໃນວິທີທາງທີ່ຖືກຕ້ອງ.

ແທນທີ່ຈະຕໍ່ຕ້ານພວກສາວົກເຣື່ອງຄວາມໄຝ່ຝັນຢາກເປັນໃຫຍ່, ພຣະອົງຊົງສອນວິທີທີ່ຈະເປັນໃຫຍ່ແບບຖືກຕ້ອງ. ພຣະອົງຊົງສອນໃຫ້ຮູ້ວ່າພວກເຮົາຈະຕ້ອງໄດ້ປ່ຽນແປງນິສັຍທີ່ວ່າ "ຂ້ອຍກ່ອນ." ແລ້ວໃຫ້ປະຕິບັດຕາມຄຳສອນຂອງພຣະເຢຊູໃນ ມາຣະໂກ 8:34-37 ຊຶ່ງແມ່ນການປະຕິເສດຕົວເອງ. ຄຳສອນນີ້ແມ່ນພາກສ່ວນນຶ່ງຂອງການສ້າງສາວົກໃນຂະນະທີ່ກຳລັງເດີນທາງໄປສູ່ໄມ້ກາງແຂນ.

## <u>ຄວາມສຳຄັນຂອງການຖ່ອມຕົວ</u> (9:35)

ພຣະເຢຊູຊົງເວົ້າເຖິງການທຸກລຳບາກແລະການຕາຍ, ແຕ່ພວກສາວົກສິບສອງຄົນໄດ້ຖົກຖຽງກັນເຣື່ອງການເປັນໃຫຍ່ກວ່າໝູ່. ພວກເຂົາເຂົ້າໃຈຜິດໃນຄຳສອນຂອງພຣະເຢຊູ. ພວກເຂົາດຳເນີນຊີວິດໃນສັງຄົມທີ່ຖືວ່າຕຳແໜ່ງແລະອຳນາດມີຄວາມສຳຄັນ, ແລະພວກເຂົາກໍເລີຍຄິດວ່າໃນຊີວິດຄຣິສຕຽນກໍຄົງຈະບໍ່ມີຫຍັງແຕກຕ່າງໄປຈາກນັ້ນ. ທີ່ຫ້ອງໃຫຍ່ຊັ້ນເທິງ ພວກສາວົກເຄີຍໄດ້ຖົກຖຽງກັນເທື່ອນຶ່ງແລ້ວວ່າໃຜເປັນໃຫຍ່ກວ່າໝູ່ (ລູກາ 22:24-30).

ພຣະເຢຊູຊົງຕຳໜິການເປັນໃຫຍ່ຕາມແບບຂອງສັງຄົມ. ຄວາມຍິ່ງໃຫຍ່ທີ່ແທ້ຈິງບໍ່ໄດ້ຢູ່ທີ່ຕຳແໜ່ງ ຫລືຊັບສົມບັດ ແຕ່ຢູ່ທີ່ລັກສະນະແລະການຮັບໃຊ້. ພຣະເຢຊູຊົງກ່າວກັບສາວົກວ່າ "ຖ້າຜູ້ໃດຢາກເປັນຜູ້ຕົ້ນ ກໍໃຫ້ຜູ້ນັ້ນເປັນຜູ້ປາຍ" (9:35).

## <u>ຮັບໃຊ້ຄົນທັງປວງ</u> (9:35-37)

ພຣະເຢຊູຊົງສອນວ່າເວລາພວກເຮົາເຫັນແກ່ຄົນອື່ນກ່ອນ, ເຮົາກໍກາຍເປັນ "ຜູ້ຮັບໃຊ້ຄົນທັງປວງ" (9:35). ການເປັນຜູ້ຮັບໃຊ້ຄົນທັງປວງກໍບໍ່ແມ່ນເຣື່ອງງ່າຍ. ການເປັນຜູ້ຮັບໃຊ້ຄົນບາງຄົນອາດຈະມີຄວາມຊົມຊື່ນຍິນດີ. ການຮັບໃຊ້ຄົນບາງຄົນອາດຈະມີຄວາມມ່ວນຊື່ນ ແລະຄວາມເພິ່ງພໍໃຈ. ແຕ່ການຮັບໃຊ້ຄົນທັງປວງຄົງຈະເປັນອີກເຣື່ອງນຶ່ງ.

ພຣະເຢຊູໃຊ້ຕົວຢ່າງເຣື່ອງເດັກນ້ອຍເພື່ອເນັ້ນຄຳວ່າ "ຄົນທັງປວງ" ນັ້ນຮວມທັງຄົນທີ່ຊ່ວຍຕົວເອງບໍ່ໄດ້ ແລະຄົນທີ່ບໍ່ສາມາດຕອບແທນຫຍັງເລີຍ. ການຮັບໃຊ້ຄົນພວກນີ້ຈະໄດ້ຮັບຫຍັງຕອບແທນ? ພຣະເຢຊູຊົງສອນວ່າການດີທຸກຢ່າງໃນພຣະນາມພຣະອົງຈະໄດ້ຮັບລາງວັນ (9:41). ໂປໂລໄດ້ຂຽນໄວ້ວ່າ, "ຈົ່ງຮັບໃຊ້ນາຍດ້ວຍຄວາມຊື່ນບານ ເໝືອນກັບຮັບໃຊ້ອົງພຣະຜູ້ເປັນເຈົ້າ ບໍ່ໃຊ່ເໝືອນຮັບໃຊ້ມະນຸດ. ເພາະພວກທ່ານຮູ້ຢູ່ແລ້ວວ່າຜູ້ໃດເຮັດການດີປະການໃດ ຜູ້ນັ້ນກໍຈະໄດ້ຮັບບຳເໜັດຢ່າງນັ້ນຈາກອົງພຣະຜູ້ເປັນເຈົ້າ ບໍ່ວ່າເຂົາຈະເປັນຂ້ອຍຂ້າຫລືເປັນອິສຣະກໍດີ" (ເອເຟໂຊ 6:7-8).

ການຮັບໃຊ້ "ຄົນທັງປວງ" ໝາຍຄວາມວ່າພວກເຮົາຈະຕ້ອງສະລະສິດຕົວເອງ ໂດຍບໍ່ຄິດວ່າເຮົາດີກວ່າຄົນອື່ນໆ. ພວກເຮົາຈະຕ້ອງຮັບໃຊ້ຄົນທັງປວງໂດຍບໍ່ເລືອກຖານະທາງສັງຄົມ, ບໍ່ເລືອກເຊື້ອຊາດ, ບໍ່ເລືອກເພດ, ແລະບໍ່ເລືອກສາ

ສນາ. ການຮັບໃຊ້ຜູ້ຕ້ອຍຕ່ຳໃນພວກເຮົາ ກໍຄືການຮັບໃຊ້ຕົວພຣະເຢຊູເອງ. ພຣະເຈົ້າຈະຊົງຮັບເອົາການຮັບໃຊ້ນັ້ນແລ້ວປ່ຽນເປັນພຣະພອນ.

ຄວາມໝາຍແລະການປະຕິບັດ

ພຣະເຢຊູບໍ່ໄດ້ຊົງປະນາມຄວາມໄຝ່ຝັນຢາກເປັນໃຫຍ່ຂອງພວກເຮົາ. ພຣະອົງຊົງສອນພວກສາວົກເຖິງວິທີທີ່ພວກເຂົາຈະເຮັດໃຫ້ຄວາມໄຝ່ຝັນນັ້ນສຳເຣັດ ໂດຍຜ່ານທາງການຖ່ອມຕົວແລະການຮັບໃຊ້. ຫົນທາງໄປສູ່ການເປັນໃຫຍ່ຢູ່ທີ່ການຖ່ອມຕົວແລະການຮັບໃຊ້ ແລະການເຫັນຄົນອື່ນກ່ອນ ແທນທີ່ຈະຄິດວ່າຕ້ອງແມ່ນ "ຂ້ອຍກ່ອນ". ຫົນທາງໄປສູ່ການເປັນໃຫຍ່ນຳໄປສູ່ການຮັບໃຊ້ພຣະຄຣິດໂດຍການຮັບໃຊ້ຜູ້ຕ້ອຍຕ່ຳໃນພວກເຮົາ.

**ຄຳຖາມ:**

1. ທ່ານມີຄວາມໄຝ່ຝັນຢາກເປັນໃຫຍ່ເຣື່ອງໃດແດ່?

2. ມີຕົວຢ່າງຫຍັງແດ່ ເຣື່ອງພຣະເຈົ້າຊົງເຮັດໃຫ້ຄວາມຕັ້ງໃຈຢາກເປັນໃຫຍ່ຂອງທ່ານໝົດຫວັງ?

3. ມີກໍຣະນີໃດແດ່ ທີ່ທ່ານໄດ້ເລືອກຢູ່ຫາງແຖວ ແທນທີ່ຈະໄປຢູ່ຫົວແຖວ?

4. ມີວິທີໃດແດ່ ທີ່ທ່ານຈະສາມາດຮັບໃຊ້ຜູ້ຕ່ຳຕ້ອຍໃນຄຸ້ມບ້ານຂອງທ່ານ?

5. ໃນຂໍ້ຄວາມ "ຂ້ອຍໃຊ້ຄົນທັງປວງ" (9:35), ແມ່ນໃຜຄື "ຄົນທັງປວງ" ທີ່ຖືກລືມ ໂດຍກຸ່ມຄົນທີ່ເຊື່ອຖືສາສນາ?

6. ມີຕົວຢ່າງແນວໃດແດ່ ທີ່ພຣະເຈົ້າໄດ້ໃຫ້ລາງວັນສຳລັບການຮັບໃຊ້ແບບຖ່ອມຕົວຂອງທ່ານ?

ປະຕິບັດຕາມຄຳສອນຂອງພຣະເຢຊູ

- ຊອກວິທີທີ່ຈະເຫັນ "ແກ່ຄົນອື່ນ" ກ່ອນ-- ຮວມຊື່ທຸກຄົນໃນຄອບຄົວຂອງທ່ານ-- ໃນກິຈການປະຈຳວັນ.
- ອາສາສມັກຮັບໃຊ້ ທີ່ເຮືອນລ້ຽງເຂົ້າຄົນຍາກຈົນ ຫລືບ່ອນຊ່ວຍເຫລືອຄົນທຸກຍາກ.
- ຈົດບັນທຶກໄວ້ວ່າທ່ານໄດ້ພຍາຍາມຈັກເທື່ອແລ້ວ ທີ່ຈະເອົາທີນຶ່ງໃຫ້ໄດ້.
- ໃຫ້ລາງວັນ(ຍ້ອງຍໍຊົມເຊີຍ)ກັບບຸກຄົນ ທີ່ໄດ້ເຮັດສິ່ງດີກັບທ່ານ.

*ສຄ*

## ບົດຮຽນທີ 10
## ສາວົກ = ຂ້ອຍໃຊ້

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 10: 32-45
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ມາຣະໂກ 10: 1-45
**ຈຸດສຳຄັນຂອງບົດຮຽນນີ້:** ການເປັນສາວົກທີ່ແທ້ຂອງພຣະເຢຊູໝາຍເຖິງການເປັນຜູ້ຮັບໃຊ້, ບໍ່ແມ່ນເປັນນາຍ" ຂອງ "ຄົນທັງປວງ."
**ຄຳຖາມເພື່ອການສຳຣວດ:** ທ່ານແມ່ນຂ້ອຍໃຊ້ບໍ່? ທ່ານຮູ້ສຶກແນວໃດເວລາຄົນເຮັດກັບທ່ານເໝືອນກັບເປັນຂ້ອຍໃຊ້?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວິທີທີ່ຈະຕອບຮັບຄຳສອນຂອງພຣະເຢຊູເຣື່ອງການເປັນຂ້ອຍໃຊ້.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ແບ່ງປັນເຣື່ອງຂ່າວປະເສີດກັບທຸກຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍຮັບໃຊ້ຄວາມຕ້ອງການດ້ານວັດຖຸ, ດ້ານຈິດວິນຍານ, ແລະດ້ານຈິດໃຈ.
- ຈັດຕຽມຄົນໃຫ້ເປັນຜູ້ນຳແບບຮັບໃຊ້.

## ຄຳນຳ

ໃນຂະນະທີ່ພຣະເຢຊູກຳລັງເດີນທາງໄປສູ່ໄມ້ກາງແຂນ, ສາວົກສອງຄົນໄດ້ທູນຂໍຕຳແໜ່ງໃນຣາຊອານາຈັກພຣະເຈົ້າ ຈາກພຣະອົງ. ພຣະເຢຊູໄດ້ຊົງເຕືອນພວກສາວົກວ່າ ພວກເຂົາຈະເປັນຜູ້ຮັບໃຊ້ ບໍ່ແມ່ນເຈົ້ານາຍ. ພຣະອົງຈະຊົງສຳແດງຕົວຢ່າງຂອງການເປັນຂ້ອຍໃຊ້ ຊຶ່ງອາດໝາຍເຖິງການຍອມສະລະຊີວິດ. ທ່ານຄິດວ່າພວກສາວົກເຂົ້າໃຈເຣື່ອງນີ້ບໍ່? ແລ້ວທ່ານເດ ເຂົ້າໃຈເຣື່ອງນີ້ບໍ່?

ເທື່ອນີ້ເປັນເທື່ອທີສາມ ທີ່ພຣະເຢຊູໄດ້ຊົງບອກກັບພວກສາວົກເຖິງສິ່ງທີ່ຈະຕ້ອງເກີດຂຶ້ນກັບພຣະອົງ; ພຣະອົງຈະຖືກຂົ່ມເຫງ ແລະຖືກຂ້າ ແລະໃນວັນທີສາມພຣະອົງຈະກັບຄືນມີຊີວິດ (ມາຣະໂກ 10:32-34; 8:31; 9:31). ພວກສາວົກຄົງໄດ້ຍິນສິ່ງທີ່ພຣະເຢຊູໄດ້ຊົງກ່າວກັບພວກຕົນ ແຕ່ພວກເຂົາເຈົ້າບໍ່ເຂົ້າໃຈຄວາມໝາຍຂອງຄຳເວົ້າເຫລົ່ານັ້ນໆ.

ເຖິງວ່າຈະໄດ້ຍິນສິ່ງທີ່ພຣະອົງໄດ້ກ່າວແລ້ວ, ພວກສາວົກສອງຄົນ (ຢາໂກໂບແລະໂຢຮັນ) ຍັງພາກັນຂໍໃຫ້ພຣະອົງແຕ່ງຕັ້ງພວກຕົນໃຫ້ນັ່ງຕັ່ງໃກ້ພຣະອົງເວລາພຣະເຢຊູຢູ່ໃນສະງ່າຣາສີຂອງພຣະເຈົ້າ. ພວກເຂົາໄດ້ຄິດເຖິງແຕ່ເຣື່ອງພຣະຣາຊອານາຈັກຂອງພຣະເຈົ້າໃນແຜ່ນດິນໂລກ ຊຶ່ງພວກເຂົາເຂົ້າໃຈວ່າພຣະເຢຊູຈະຊົງສ້າງຂຶ້ນໃນຕອນນັ້ນ.

(ເຊີນອ່ານ ເບື້ອງຫລັງຂອງບົດຮຽນນີ້ໃນ ມາຣະໂກ 10: 1-31)

**ຕາມືດເພາະຄວາມທະເຍີທະຍານ** (10:32-38)

ພຣະເຢຊູຊົງຕຣຽມຕົວທີ່ຈະຕາຍເພື່ອພວກສາວົກ ແຕ່ພວກເຂົາພາກັນຍາດຕຳແໜ່ງກັນ. ພຣະອົງຫ່ວງໃຍເຣື່ອງການມອບຊີວິດເພື່ອຊ່ວຍໂລກມະນຸດໃຫ້ລອດພົ້ນ ແຕ່ພວກເຂົາຫ່ວງໃຍວ່າໃຜຈະໄດ້ຕຳແໜ່ງໃຫຍ່. ການຍາດຕຳແໜ່ງກັນເຄີຍເປັນອຸປສັກສຳລັບພັນທະກິດຂອງພຣະເຈົ້າ ໃນຖ້າມກາງຜູ້ເຊື່ອທັງຫລາຍ. ໃນຄຳອຸປມາເຣື່ອງການກິນລ້ຽງສົມຣົດ (ລູກາ 14:7-11), ພຣະເຢຊູໄດ້ຊົງເຕືອນພວກສາວົກວ່າ ຜູ້ທີ່ປາຖນາຢາກຢູ່ບ່ອນນັ່ງອັນມີກຽດສູງຈະພົບກັບຄວາມອັບອາຍ.

ຢາໂກໂບແລະໂຢຮັນໄດ້ແນມເບິ່ງມື້ທີ່ພຣະເຢຊູຈະຊົງໄດ້ຊັຍຊະນະ ແລະຈະສ້າງຣາຊອານາຈັກຂອງພຣະອົງໃນໂລກນີ້. ພວກເຂົາພາກັນຂໍຕັ່ງທີ່ຢູ່ໃກ້ພຣະເຢຊູ ຊຶ່ງເປັນຕຳແໜ່ງສຳຄັນຫລາຍ. ພວກເຂົາອາດຈະຄິດວ່າພວກຕົນເປັນຜູ້ສົມຄວນຈະໄດ້ຮັບຕັ່ງເຫລົ່ານັ້ນ ເພາະພວກເຂົາກໍຢູ່ໃນກຸ່ມແກນນຳວົງໃນ ແລະເປັນຜູ້ໃກ້ຊິດທີ່ສຸດກັບພຣະເຢຊູ (ມາຣະໂກ 5:37; 9:2).

ຄວາມທະເຍີທະຍານສ່ວນຕົວເປັນອຸປສັກສຳລັບຄວາມຍິ່ງໃຫຍ່ໃນພຣະຣາຊອານາຈັກ. ພວກເຮົາໄດ້ເຫັນຕົວຢ່າງໃນ 3 ໂຢຮັນ 3:9 ເຣື່ອງດີໂອເທເຟ ຜູ້ມັກຕັ້ງຕົວເປັນໃຫຍ່ເໜືອໝູ່ ຜູ້ທີ່ບໍ່ຍອມຮັບຄົນອື່ນໆທີ່ເຂົ້າມາໃນຄຣິສຕະຈັກ. ຄວາມທະເຍີທະຍານເຮັດໃຫ້ເຮົາຕາບອດໃນການຕິດຕາມພຣະເຢຊູຄຣິດ. ການເປັນສາວົກຂອງພຣະເຢຊູແມ່ນການຍອມຮັບໃຊ້ຄົນອື່ນໆ ຊຶ່ງກົງກັນຂ້າມກັບການຢາກເປັນນາຍໃຫຍ່ເໜືອຄົນທັງຫລາຍ.

<u>**ຊ່ອຍຮັບພາຣະອັນໜັກຂອງພຣະເຢຊູ**</u> (10: 38-40)
ພຣະທັມບອກຢ່າງແຈ່ມແຈ້ງວ່າຄຣິສຕຽນບໍ່ພຽງແຕ່ຈະຄອງຣາດຮ່ວມກັບພຣະເຢຊູເທົ່ານັ້ນ ແຕ່ຈະຕ້ອງຖືກຄວາມລຳບາກຮ່ວມກັບພຣະອົງດ້ວຍ (ຟີລິບປອຍ 1:29). ເໝືອນດັ່ງພວກຟາຣີຊາຍໃນສມັຍນັ້ນ, ພວກສາວົກເຊື່ອວ່າພຣະເມຊີອາຈະລົງມາພ້ອມດ້ວຍຣິດເດດ, ສະງ່າຣາສີ, ແລະການຍຶດອຳນາດ. ສະນັ້ນເຣື່ອງວ່າພຣະເມຊີອາຈະຖືກການທຸກລຳບາກ ຈຶ່ງກາຍເປັນເຣື່ອງທີ່ພວກເຂົາຮັບບໍ່ໄດ້.

ຄົນເຮົາສ່ວນຫລາຍກໍມັກຊອກຫາສິ່ງທີ່ງ່າຍໆສຳລັບຕົວເອງ ແຕ່ການຮູ້ບັງຄັບຕົນ, ການເສັຽສະລະ, ແລະການທຸກລຳບາກ ເປັນປັດໃຈສຳຄັນຂອງຊີວິດຄຣິສຕຽນ. ໃນຕອນທີ່ພຣະເຢຊູຖືກທົດລອງຢູ່ປ່າກັນດານ, ມານຊາຕານໄດ້ຊັກຊວນໃຫ້ພຣະອົງເລືອກທາງງ່າຍໆ ໃນຊີວິດແລະການຮັບໃຊ້ (ມັດທາຍ 4:1-11). ພຣະເຢຊູບໍ່ໄດ້ຊົງເລືອກເອົາທາງງ່າຍ ເພາະການກະທຳຢ່າງນັ້ນຈະເຮັດໃຫ້ພຣະອົງບໍ່ສຳເຣັດແຜນການທີ່ພຣະຜູ້ເປັນເຈົ້າໄດ້ສົ່ງພຣະອົງລົງມາເຮັດທີ່ໂລກມະນຸດ. ຄົນທີ່ມັກເລືອກທາງງ່າຍຈະບໍ່ໄດ້ຮັບຄວາມສຳເຣັດໃນຊີວິດ.

ການເຕີບໃຫຍ່ຝ່າຍຈິດວິນຍານເກີດຂຶ້ນເພາະຄວາມລຳບາກ ແລະການຕໍ່ສູ້ (ໂຣມ 5:3-5). ພຣະເຢຊູໄດ້ຊົງບອກວ່າພວກສາວົກທັງຫລາຍຈະຖືກຄວາມລຳບາກເໝືອນດັ່ງພຣະອົງ. ພວກເຂົາ "ຈະດື່ມຈອກ" ທີ່ພຣະອົງຈະດື່ມ (ມາຣະໂກ 10:38). "ຈອກ" ນັ້ນແມ່ນການທຸກລຳບາກ ແລະການຕາຍຂອງພຣະເຢຊູ. "ການບັບຕິສະມາ" (10:38) ແມ່ນການ ຕາຍແລະການຖືກຝັງໄວ້ ພ້ອມດ້ວຍທຸກໆຢ່າງທີ່ຈະເກີດຂຶ້ນກັບພຣະອົງ. ແລ້ວພຣະເຢຊູຊົງກ່າວກັບພວກສາວົກວ່າ ການຈັດທີ່ນັ່ງຢູ່ເບື້ອງຊ້າຍຫລືຢູ່ເບື້ອງຂວານັ້ນ ແມ່ນພຣະເຈົ້າເປັນຜູ້ຊົງຈັດໄວ້ສຳລັບທຸກຄົນ (10:40). ຈຸດປະສົງຂອງການລົງມາຍັງໂລກມະນຸດຂອງພຣະເຢຊູຄຣິດ ແມ່ນມາເຮັດພຣະປະສົງຂອງພຣະເຈົ້າ (ໂຢຮັນ 6:39).

ຊີວິດທີ່ແທ້ຈິງຈະພົບຢູ່ທີ່ການຍອມສະລະຊີວິດຂອງຕົນເພາະເຫັນແກ່ຂ່າວປະເສີດ. ບາງຄັ້ງທ່ານອາດປະສົບຄວາມສຳເຣັດຢ່າງໃຫຍ່ຫລວງ ແລະໄດ້ເຫັນທຸກຢ່າງທີ່ທ່ານປາຖນາເກີດຂຶ້ນ, ແຕ່ທ່ານຈະຕື່ນຂຶ້ນໃນວັນນຶ່ງແລະຮູ້ວ່າທ່ານໄດ້ຂາດສິ່ງທີ່ສຳຄັນທີ່ສຸດ. ເງິນຄຳບໍ່ສາມາດທີ່ຈະຊື້ເວລາແລະໂອກາດທີ່ຜ່ານໄປຄືນມາໄດ້. ກົດເຣື່ອງຄວາມຍິ່ງໃຫຍ່

ໃນຣາຊອານາຈັກພຣະເຈົ້າ ແມ່ນກົດເຣື່ອງໄມ້ກາງແຂນ.

## ເປັນໃຫຍ່ໃນຣາຊອານາຈັກພຣະເຈົ້າ (10:41-45)

ພຣະເຢຊູໄດ້ຊົງຊີ້ໃຫ້ເຫັນວ່າການໃຊ້ສິດອຳນາດແລະການບັງຄັບບັນຊາເປັນສິ່ງທີ່ບອກເຖິງຄວາມເປັນໃຫຍ່ໃນໂລກນີ້. ຄົນຕ່າງຊາດຕ້ອງການຢາກເປັນໃຫຍ່ ແທນທີ່ຈະເປັນຂ້ອຍໃຊ້. ພຣະເຢຊູຊົງບອກວ່າພວກສາວົກຈະບໍ່ໃຊ້ລະບົບນີ້. ແລະ ພຣະອົງຊົງສອນວ່າການເປັນໃຫຍ່ໃນຣາຊອານາຈັກຂອງພຣະເຈົ້າ ແມ່ນໄດ້ມາຈາກການເປັນຜູ້ຮັບໃຊ້ຄົນທັງຫລາຍ. ພຣະເຢຊູຊົງຢ້ຳວ່າ "ບຸດມະນຸດນັ້ນບໍ່ໄດ້ມາໃຫ້ຄົນອື່ນປະຕິບັດຕົນ ແຕ່ມາເພື່ອປະຕິບັດເຂົາ (10:45).

ໃນໂຢຮັນ 13:15, ພຣະເຢຊູຊົງບອກພວກສາວົກວ່າ ພຣະອົງໄດ້ເປັນແບບຢ່າງເພື່ອພວກເຂົາຈະໄດ້ເຮັດຕາມ. ແບບຢ່າງທີ່ພຣະຄຣິດໄດ້ໃຫ້ໄວ້ຄືການລ້າງຕີນຄົນອື່ນໆ ຊຶ່ງເປັນໜ້າທີ່ຂອງພວກຂ້ອຍໃຊ້ທັງຫລາຍ. ເມື່ອເປໂຕບໍ່ຍອມໃຫ້ພຣະອົງລ້າງຕີນຂອງເຂົາ, ພຣະເຢຊູຊົງບອກວ່າ "ຖ້າເຮົາບໍ່ລ້າງທ່ານ ທ່ານຈະມີສ່ວນໃນເຮົາບໍ່ໄດ້." ໃນຕອນນັ້ນເປໂຕບໍ່ໄດ້ເຫັນຄຸນຄ່າຂອງການເສັຽສະລະ. ໃນທັສນະຂອງເປໂຕ, ການສະລະຊີວິດຂອງຕົນ ເປັນການເສັຽປໂຍດ. ແຕ່ໃນທັສນະຂອງພຣະເຢຊູ, ການສະລະຊີວິດເປັນທາງດຽວທີ່ຈະຊ່ວຍໃຫ້ມະນຸດລອດພົ້ນໄດ້.

## ຄວາມໝາຍແລະການປະຕິບັດ

ການຍອມຮັບຕຳແໜ່ງຂ້ອຍໃຊ້ ໝາຍເຖິງການຍອມຖິ້ມຕຳແໜ່ງນາຍ. ສິ່ງນີ້ໝາຍເຖິງການຖອນສິດຕົວເອງໃນຊີວິດ. ສິ່ງນີ້ໝາຍເຖິງການໃຫ້ພຣະເຢຊູຄຣິດແລະພັນທະກິດຂອງພຣະອົງເປັນກົດຂອງຊີວິດ. ການເປັນຂ້ອຍໃຊ້ອາດຈະໝາຍເຖິງການຍອມເສັຍກຽດເພື່ອຈະຮັບໃຊ້ພຣະເຈົ້າຢູ່ບາງບ່ອນ ຫລືເຮັດສິ່ງທີ່ຕ່ຳຕ້ອຍ. ພຣະເຢຊູຊົງກ່າວກັບພວກສາວົກວ່າ "ຖ້າຜູ້ໃດຈະຮັບເດັກນ້ອຍຜູ້ນຶ່ງຢ່າງນີ້ໄວ້ໃນນາມຂອງເຮົາ ຜູ້ນັ້ນກໍໄດ້ຮັບເຮົາ" (ມັດທາຍ 18:5). ການດຳເນີນຊີວິດແບບຂ້ອຍໃຊ້ຂອງພຣະຄຣິດໝາຍເຖິງການດຳເນີນຊີວິດທີ່ຖືວ່າພຣະປະສົງຂອງພຣະເຈົ້າ ແລະຄວາມຕ້ອງການຂອງຄົນອື່ນສຳຄັນກວ່າທຸກຢ່າງ. ການຮັບໃຊ້ຄືປັດໃຈສຳຄັນຂອງຄວາມເຊື່ອຄຣິສຕຽນ.

ໃນມັດທາຍ 25:31-46, ມີຄຳອະທິບາຍເຣື່ອງການພິພາກສາບັນດາຊົນຊາດທັງຫລາຍ. ໃນຄຳອຸປມານີ້ ພຣະເຢຊູໄດ້ຊົງເວົ້າເຖິງການແຍກຝູງແກະແລະຝູງແບ້ອອກຈາກກັນໃນຣາຊແຜ່ນດິນຂອງພຣະເຈົ້າ. ພວກເຮົາອາດຈະບໍ່ສາມາດເບິ່ງໄດ້ຢ່າງງ່າຍໆວ່າໃຜເປັນແກະແລະໃຜເປັນແບ້. ແຕ່ສິ່ງທີ່ແນ່ນອນຄືການຮັບໃຊ້ຜູ້ຕ້ອຍຕ່ຳທີ່ສຸດໃນໂລກຂອງພວກເຮົາ. ພຣະເຢຊູຊົງມີພຣະປະສົງໃຫ້ພວກເຮົາຮັບໃຊ້ຜູ້ທີ່ບໍ່ສາມາດຕອບແທນຫຍັງກັບພວກເຮົາໄດ້.

## ຄຳຖາມ:

1. ພວກເຮົາຈະເປັນຂ້ອຍໃຊ້ ແຕ່ບໍ່ເປັນຜ້າເຊັດຕີນຂອງຄົນໄດ້ຢ່າງໃດ?

2. ພວກເຮົາຈະນຳຄຳສອນຂອງພຣະເຢຊູເຣື່ອງການຮັບໃຊ້ມາປະຕິບັດໃນຄຣິສຕະຈັກທ້ອງຖິ່ນໄດ້ແນວໃດ?

3. ພວກເຮົາຈະນຳຄຳສອນຂອງພຣະເຢຊູເຣື່ອງການຮັບໃຊ້ມາປະຕິບັດໃນທີ່ທຳງານໄດ້ວິທີໃດ ຖ້າພວກເຮົາຢູ່ໃນຕຳແໜ່ງຜູ້ບໍຣິຫານ?

*ສຄ*

# ບົດຮຽນທີ 11
# ຕຽມພ້ອມທຸກເວລາ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 13:9-13, 32-35
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ມາຣະໂກ 13
**ຈຸດສຳຄັນຂອງບົດຮຽນນີ້:** ພວກສາວົກພົບອັນຕະລາຍເຖິງຂັ້ນເສັຽຊີວິດ ແຕ່ຍັງດຳເນີນໂດຍພຣະວິນຍານ
**ຄຳຖາມເພື່ອການສຳຣວດ:** ເຮົາຈະເປັນຄືສາວົກໄດ້ຫລາຍປານໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສຳຣວດຕົນເອງວ່າເຮົາໄດ້ເຮັດແທ້ເທົ່າໃດໃນຄວາມເຊື່ອຂອງເຮົາ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

**ບົດນຳ**

ພຣະເຢຊູໄດ້ເຕືອນສາວົກລ່ວງໜ້າວ່າພວກສາວົກຈະພົບກັບບັນຫານາໆປະການ ຈົນເຖິງຂັ້ນຖືກຈັບຂຶ້ນສານເພາະສາວົກເປັນຝ່າຍພຣະເຢຊູ ແລະພຣະອົງຍັງເຕືອນອີກວ່າເມື່ອມີເຣື່ອງເຊັ່ນນັ້ນບໍ່ຕ້ອງຢ້ານວ່າຈະເຮັດແນວໃດ ຫລືຈະຕອບພວກນັກກົດໝາຍທີ່ສານແນວໃດນັ້ນບໍ່ຕ້ອງວິຕົກກັງວົນ ເຖິງເວລານັ້ນມາພຣະວິນຍານຂອງພຣະເຈົ້າຈະນຳພາໃນການເວົ້າຂໍແຕ່ເຊື່ອໝັ້ນໃນພຣະເຈົ້າກໍພໍ.

**ຊົງທຳນວາຍເຣື່ອງພຣະວິຫານ** (13:1-4)

ພຣະວິຫານເປັນບ່ອນນະມັສການແລະເປັນສູນກາງອັນສຳຄັນຊາວຢູດາຍ, ແລະຊາວຢູດາຍເປັນເຜົ່າໜຶ່ງຂອງປະເທດອິສຣາເອນ ອີກປະການໜຶ່ງຄຳວ່າຊາວຢິວຕົ້ນເດີມນັ້ນມີຄວາມເຊື່ອໂຍງມາຈາກຄຳວ່າຢູດາຍ. ເນື່ອງຈາກວ່າຄົນຢິວຖືວ່າພຣະວິຫານເປັນບ່ອນສຳຄັນໃນຊີວິດເຂົາຈຶ່ງສະສົມເງິນຄຳໄວ້ ເພື່ອເດີນທາງມານະມັສການທີ່ພຣະວິຫານໃນກຸງເຢຣູຊາເລັມ. *"ເມື່ອພຣະເຢຊູກຳລັງສະເດັດອອກຈາກບໍຣິເວນພຣະວິຫານ ມີສາວົກຂອງພຣະອົງຜູ້ນຶ່ງທູນວ່າ, "ເບິ່ງດູ, ອາຈານເອີຍ, ກ້ອນຫີນແລະຕຶກເຫລົ່ານີ້ເກີນວ່າງົດງາມ"* (ຂໍ້ 1). ອີງຕາມປະຫວັດສາດແລ້ວແມ່ນເຮໂຣດຜູ້ຍິ່ງໃຫຍ່ ຫລືລາງຄົນຮ້ອງເພິ່ນວ່າ ເຮໂຣດມະຫາຣາດເປັນຜູ້ສ້າງພຣະວິຫານອັນສວຍງາມນີ້ໃນປີກ່ອນ ຄ.ສ 20 (20 B.C) ແລະສຳເຣັດລົງໃນປີຫລັງ ຄ.ສ 64 (A.D. 64). ນັບວ່າເປັນເວລາ 84 ປີຈຶ່ງສຳເຣັດ, ຫີນຝາພຣະວິຫານທີ່ນຳເອົາມາສ້າງນັ້ນມີຂນາດ 10x12 ft ຫລື 3x3.6 ແມດ ສ່ວນຫີນພື້ນນັ້ນໃຫຍ່ກວ່ານັ້ນອີກ. ດ້ວຍເຫດນີ້ສາວົກຜູ້ນຶ່ງຈຶ່ງກ່າວວ່າ *"ກ້ອນຫີນແລະຕຶກເຫລົ່ານີ້ເກີນວ່າງົດງາມ"* ແຕ່ພຣະເຢຊູຊົງຕອບວ່າ *"ທ່ານເຫັນຕຶກໃຫຍ່ເຫລົ່ານີ້ຫລືກ້ອນຫີນທີ່ຊ້ອນທັບກັນຢູ່ນີ້ຈະຖືກທຳລາຍລົງຈົນບໍ່ເຫລືອຈັກກ້ອນດຽວ" (ຂໍ້ 2).* ພວກສາວົກໄດ້ຍິນຄຳທຳນວາຍ ທີ່ພຣະເຢຊູໄດ້ກ່າວແລ້ວຈຶ່ງພາກັນຕົກຕະລຶງໃນຄຳທຳນວາຍນັ້ນດ້ວຍວ່າພຣະວິຫານໃຫຍ່ແລະສວຍງາມດ້ວຍແຜ່ນຫີນທີ່ສ້າງມາເປັນເວລາ 84 ປີ ພຣະວິຫານໃຫຍ່ທີ່ສວຍງາມຫລັງທີ່ກ່າວນີ້ໄດ້ຖືກທຳລາຍໃນຣະຫວ່າງສົງຄາມໂຣມັນໃນປີ ຄ.ສ. 70 A.D 70 ທີ່ຮ້ອງກັນວ່າກຸງເຢຣູຊາເລັມຫລົ້ມຈົມ.

ສາສນາສາດຜູ້ນຶ່ງໃນສມັຍນີ້ໄດ້ຕີກຕອງຄຳເວົ້າຂອງພຣະເຢຊູທີ່ກ່າວວ່າ *"ທ່ານເຫັນຕຶກໃຫຍ່ເຫລົ່ານີ້ຫລືກ້ອນຫີນທີ່ຊ້ອນທັບກັນຢູ່ນີ້ຈະຖືກທຳລາຍລົງຈົນບໍ່ເຫລືອຈັກກ້ອນດຽວ"* ແລ້ວຈຶ່ງເຂົ້າໃຈວ່າທຸກສິ່ງສວຍງາມທີ່ຕາເຫັນໃນເວລານີ້ກໍຈະບໍ່ຫຍັງເຫລືອໃນວັນນຶ່ງຂ້າງໜ້າ . ເພິ່ນຍັງຍົກຕົວຢ່າງເຣື່ອງຮ່າງກາຍຂອງຍິງສາວທີ່ສວຍງາມກໍຈະຕ້ອງເຖົ້າແລະແກ່ຊະຣາລົງ ແລະໃນທີ່ສຸດກໍຈະຕາຍແລ້ວຝັງລົງໃນດິນ ເມື່ອນັ້ນຄວາມສວຍງາມກໍຈະສິ້ນສຸດເຫລືອໄວ້ແຕ່ກະດູກຫລ້ອນທີ່ໜ້າຢ້ານກົວ, ຈະເອົາໃຫ້ໃຜກໍບໍ່ມີໃຜຢາກໄດ້ອີກແລ້ວ. ຕົວຢ່າງທີ່ສອງເພິ່ນກ່າວເຖິງຕຶກສູງສອງຕຶກທີ່ນະຄອນນິວຢອກ ອາດຈະເປັນພາບພົດອັນນຶ່ງໃຫ້ເຮົາວາດພາບໃນຈິນຕະການຂອງເຮົາໃນເຣື່ອງຂອງຕຶກວິຫານໃນກຸງເຢຣູຊາເລັມຖືກທຳລາຍໄດ້.

ຫລັງຈາກພວກສາວົກພາກັນຕົກຕະລຶງແລ້ວກໍພາກັນຕັ້ງຄຳຖາມອີກວ່າ *"ຂໍໂຜດໃຫ້ພວກຂ້ານ້ອຍຊາບແດ່ວ່າເຫດການເຫລົ່ານີ້ຈະບັງເກີດຂຶ້ນເມື່ອໃດ ແລະສິ່ງໃດຈະເປັນໝາຍສຳຄັນວ່າ ການທັງປວງນີ້ໃກ້ຈະສຳເຣັດແລ້ວ"* (ຂໍ້ 4). ສັງເກດເຫັນວ່າສາວົກມີຄວາມສົນໃຈແລະຢາກຮູ້ຫລາຍຈຶ່ງໃຊ້ຄຳຖາມພຣະອົງເປັນຄຳຖາມຊ້ອນຄຳຖາມຄື; 1. *"ເຫດການເຫລົ່ານີ້ຈະບັງເກີດຂຶ້ນເມື່ອໃດ"?* 2. *"ສິ່ງໃດຈະເປັນໝາຍສຳຄັນ"*

**<u>ໝາຍສຳຄັນ</u>** (13:5-8)

ພຣະເຢຊູບໍ່ໄດ້ຕອບຄຳຖາມສາວົກໂດຍກົງ ກໍເພາະພຣະອົງຢ້ານວ່າພວກສາວົກຈະບໍ່ຜ່ານພົ້ນຕໍ່ເຫດການທີ່ຈະເກີດຂຶ້ນນັ້ນໄດ້ຈຶ່ງຊົງກ່າວເປັນຄຳເຕືອນວ່າ *"ຈົ່ງລະວັງໃຫ້ດີ ຢ່າໃຫ້ຜູ້ໃດຫລອກລວງພວກທ່ານໃຫ້ຫລົງ"* (ຂໍ້ 5). ເປັນຄຳເຕືອນນີ້ພຣະເຢຊູເນັ້ນໜັກເປັນພິເສດ ດ້ວຍວ່າພຣະອົງຊົງເປັນຫ່ວງພວກສາວົກທີ່ພຣະອົງຊົງຮັກ ແລະຢ້ານວ່າເຂົາຈະຫລົງໄປທາງວັດຖຸເນື້ອໜັງຫລາຍກວ່າຝ່າຍຈິດວິນຍານ. ທັງນີ້ກໍເພາະວ່າສາວົກໄດ້ຫລົງໃນຄວາມສວຍງາມແຜ່ນຫີນແລະຕຶກຂອງພຣະວິຫານມາແລ້ວ. ຄຳເຕືອນທີ່ພຣະເຢຊູໄດ້ເຕືອນພວກສາວົກນັ້ນຍັງເປັນຄຳເຕືອນທີ່ດີຈົນເຖິງທຸກວັນນີ້, ເພາະວ່າຫລາຍເທື່ອຄຣິສຕຽນລາງຄົນຍັງຊອກສແວງຫາສິ່ງທີ່ເສັຽໄປຫລາຍກວ່າຊອກສແວງຫາແຜ່ນດິນສວັນຂອງພຣະເຈົ້າ. *"ແຕ່ກ່ອນອື່ນ, ທ່ານທັງຫລາຍຈົ່ງສແວງຫາຣາຊອານາຈັກຂອງພຣະເຈົ້າ ແລະຄວາມຊອບທັມຂອງພຣະອົງ ແລະພຣະອົງຈະຊົງເພີ້ມເຕີມສິ່ງທັງປວງເຫລົ່ານີ້ໃຫ້ແກ່ທ່ານ"* (ມັດທາຍ 6:33).

ກ່ອນເຫດການຈະມີໝາຍສຳຄັນດັ່ງນີ້; *"ດ້ວຍວ່າຈະມີຫລາຍຄົນມາອ້າງນາມຂອງເຮົາວ່າ "ເຮົານີ້ແຫລະ, ເປັນຜູ້ນັ້ນ" ແລະຈະຫລອກລວງຫລາຍຄົນໃຫ້ຫລົງໄປ ເມື່ອທ່ານທັງຫລາຍໄດ້ຍິນເຣື່ອງການເສິກແລະຂ່າວເລົ່າລືເຣື່ອງການເສິກສົງຄາມນັ້ນ ຢ່າຕົກໃຈ ດ້ວຍວ່າເຫດການເຫລົ່ານີ້ຈຳເປັນຕ້ອງເກີດຂຶ້ນ ແຕ່ວັນສຸດທ້າຍຍັງບໍ່ມາເຖິງດ້ວຍວ່າປະເທດຕໍ່ປະເທດ ອານາຈັກຕໍ່ອານາຈັກ ຈະສູ້ຮົບກັນ ທັງຈະເກີດແຜ່ນດິນໄຫວໃນບ່ອນຕ່າງໆແລະຈະເກີດຄວາມອຶດຢາກ ເຫດການເຫລົ່ານີ້ເປັນເໝືອນຂັ້ນຕົ້ນຂອງຄວາມເຈັບປວດໃນການເກີດລູກ "* (ຂໍ້ 6-8). ມີເນື້ອໃນສຸບດັ່ງນີ້ 1. ຈະມີພວກຜູ້ທຳນວາຍປອມ, ຄຣູສອນປອມອ້າງວ່າເປັນຜູ້ທຳນວາຍຈາກພຣະເຈົ້າ. 2. ຈະມີເສິກສົງຄາມເກີດຂຶ້ນ. 3. ຈະມີແຜ່ນດິນໄຫວໃນບ່ອນຕ່າງໆ 4. ຈະມີການອຶດຢາກເກີດຂຶ້ນ.

**<u>ໂລກຈະກຽດຊັງທ່ານ</u>** (13:9-13)

*"ແຕ່ຈົ່ງລະວັງຕົວໃຫ້ດີ ເພາະເຂົາຈະຈັບຕົວພວກທ່ານຂຶ້ນສານ ແລະຈະຂ້ຽນພວກທ່ານໃນໂຮງທັມມະເທສນາ ທັງຈະເອົາພວກທ່ານໄປຢືນຢູ່ຕໍ່ໜ້າຜູ້ປົກຄອງແລະກະສັດເພາະເຫັນແກ່ເຮົາ ເພື່ອຈະໄດ້ເປັນພຍານແກ່ເຂົາ"* (ຂໍ້ 9). ພຣະເຢຊູເຕືອນສາວົກອີກຄັ້ງນຶ່ງ ແຕ່ຄັ້ງນີ້ພຣະອົງປ່ຽນຈາກຄຳວ່າ *"ຈົ່ງຣະວັງໃຫ້ດີ"* ມາເປັນ *"ຈົ່ງຣະວັງຕົວໃຫ້ດີ"* ດ້ວຍວ່າພວກສາວົກຈະພົບກັບບັນຫາເຣື່ອງຄົນທັງຫລາຍຈະກຽດຊັງເຂົາຍ້ອນວ່າເຂົາເປັນພັກພວກຂອງພຣະເຢຊູ. ພວກສາ

ວິກຈະມີເຣື່ອງສາມຢ່າງດັ່ງຕໍ່ໄປນີ້; 1. ເຂົາຈະຖືກຈັບຂຶ້ນສານ, ຄໍາວ່າສານໃນຕອນນີ້ໝາຍເຖິງສານທ້ອງຖິ່ນຊຶ່ງປະກອບດ້ວຍພວກຜູ້ໃຫຍ່ທ້ອງຖິ່ນແລະຜູ້ດູແລໂຮງທັມມະເທສນາ. 2. ເຂົາຈະຂ້ຽນຕີຕາມກົດຣະບຽບຂອງຢິວເຖິງ 40 ຄັ້ງ (ພຣະບັນຍັດສອງ 25:2-3). 3. ຈະໄດ້ຢືນຢູ່ຕໍ່ໜ້າຜູ້ປົກຄອງ ໝາຍເຖິງຢືນຢູ່ຕໍ່ຫນ້າພວກເຈົ້າເມືອງ, ຢືນຢູ່ຕໍ່ໜ້າເຈົ້າຊີວິດເພື່ອສືບສວນແລະລົງໂທດ. ໃນເວລານັ້ນທ່ານຈະເປັນທຸກໃຈແລະມີຄວາມຢ້ານກົວຕາມທັມມະດາຂອງຄົນທົ່ວໄປ, ພຣະເຢຊູຈຶ່ງເລົ້າໂລມໃຈສາວົກວ່າ "*ແຕ່ເມື່ອເຂົາມອບທ່ານໄວ້ນັ້ນ ຢ່າເປັນທຸກຮ້ອນໃຈກ່ອນວ່າຈະເວົ້າຢ່າງໃດ ແຕ່ຈົ່ງເວົ້າຕາມທີ່ພຣະ ເຈົ້າຊົງໂຜດໃຫ້ທ່ານເວົ້າ ເພາະວ່າບໍ່ແມ່ນທ່ານເປັນຜູ້ເວົ້າ ແຕ່ແມ່ນພຣະວິນຍານບໍຣິສຸດຊົງເປັນຜູ້ເວົ້າ* "(ຂໍ້ 11). ຂ້າພະເຈົ້າຫວັງໃຈວ່າເຮົາທຸກຄົນຈະຮັບເອົາຄໍາເລົ້າໂລມນີ້ມາເປັນຂອງເຮົາ.

**<u>ຈົ່ງຣະວັງ</u>** (13:32-37)

ໃນພຣະທັມມາຣະໂກນີ້ພຣະເຢຊູໄດ້ເຕືອນສາວົກຕັ້ງຫຼາຍຄັ້ງ ໃນຂໍ້ 5, 9, 23, 33, 35, ແລະ 37 ຍ້ອນວ່າພຣະອົງຊົງເປັນຫ່ວງຢ່າງຫລວງຫລາຍ, ໂດຍສເພາະຢ່າງຍິ່ງໃນຂໍ້ 23 ຊົງເຕືອນວ່າ "*ແຕ່ທ່ານທັງຫຼາຍຈົ່ງລະວັງໃຫ້ດີ ເພາະເຮົາໄດ້ບອກທຸກສິ່ງໃຫ້ທ່ານຮູ້ໄວ້ກ່ອນແລ້ວ* " (ຂໍ້ 23) ການທີ່ຮູ້ເຫດການລ່ວງໜ້າເປັນການດີທີ່ສຸດເພາະເຮົາຈະໄດ້ຕຽມຕົວຫາວິທີທາງປ້ອງກັນຫລືຮັບມືກັບສິ່ງທີ່ຈະເກີດຂຶ້ນ ຫາກເຮົາບໍ່ຮູ້ຈັກອັນໃດເລີຍນັ້ນກໍຄ້າຍຄືເຮົາຢູ່ໃນຄວາມມືດນັ້ນເອງ, ສ່ວນວັນເວລາອັນແນ່ນອນນັ້ນບໍ່ມີໃຜຮູ້ ນອກຈາກພຣະບິດາອົງດຽວເທົ່ານັ້ນ "*ແຕ່ເຣື່ອງວັນຫລືໂມງນັ້ນບໍ່ມີໃຜຮູ້ ແມ່ນເທວະດາໃນສວັນຫລືພຣະບຸດກໍບໍ່ຮູ້ ຮູ້ແຕ່ພຣະບິດາອົງດຽວ* "(ຂໍ້ 32). ລາງເທື່ອເຮົາອາດຈະມີຄໍາຖາມວ່າວັນຫລືໂມງເຣື່ອງອັນໃດ? ໃນພຣະທັມຕອນນີ້ໄດ້ເວົ້າເຖິງເຣື່ອງວັນເວລາທີ່ພຣະເຢຊູຈະສະເດັດກັບຄືນມາໃນໂລກຄັ້ງທີສອງນັ້ນເອງ, ເຫດທີ່ກ່າວວ່າພຣະບຸດກໍບໍ່ຮູ້ເຣື່ອງວັນເວລາຈະກັບຄືນມາສູ່ໂລກນັ້ນ ບໍ່ໄດ້ໝາຍຄວາມວ່າພຣະບຸດບໍ່ມີສິດຈະຮູ້ ແຕ່ພຣະບຸດສະແດງຄວາມຖ່ອມຕົວເຮັດຕາມວັນເວລາຂອງພຣະບິດາຊົງກໍານົດໄວ້. ດັ່ງນັ້ນພຣະເຢຊູຈຶ່ງບອກເຕືອນອີກເທື່ອນຶ່ງວ່າ "*ຈົ່ງເຝົ້າລະວັງຢູ່ ເພາະພວກທ່ານບໍ່ຮູ້ວ່າເວລາກໍານົດນັ້ນຈະມາເຖິງເມື່ອໃດ* "(ຂໍ້ 33).

ຈາກຂໍ້ 34-37 ພຣະເຢຊູຊົງກ່າວກັບສາວົກເປັນຄໍາອຸປະມາເພື່ອເຕືອນສະຕິສາວົກຂອງພຣະອົງໃຫ້ມີສະຕິຣະວັງຕົວຢູ່ທຸກເວລາ, ຄໍາອຸປະມານີ້ແມ່ນພຣະອົງເວົ້າເຖິງພຣະອົງກັບພວກສາວົກນັ້ນເອງ. ອີກສິ່ງນຶ່ງສໍາຄັນໃນຄໍາອຸປະມາຂອງພຣະອົງຄືພຣະອົງກ່າວວ່າ "*ໄດ້ມອບອໍານາດໃຫ້ຂ້ອຍທຸກຄົນໃຫ້ຮັບຮູ້ການງານຂອງໃຜລາວ* "(ຂໍ້ 34ຂ). ຊຶ່ງມີຄວາມໝາຍວ່າທຸກຄົນໄດ້ຮັບອໍານາດຕາມໜ້າທີ່ການງານຂອງໃຜລາວ. ດັ່ງນັ້ນທຸກຄົນຄວນໃຊ້ອໍານາດທີ່ໄດ້ຮັບນັ້ນໃນໜ້າທີ່ການງານຂອງຕົນໃຫ້ເໝາະສົມກັບການທີ່ພຣະອົງຊົງມອບໝາຍໃຫ້ນັ້ນໃຫ້ຫລ້ອນໜ້າທີ່ດ້ວຍຄວາມຣະມັດຣະວັງໂດຍຣະນຶກເຖິງຄໍາເຕືອນທີ່ກ່າວແລ້ວວ່າ "*ເຫດສັນນັ້ນທ່ານທັງຫລາຍຈົ່ງເຝົ້າລະວັງຢູ່ ເພາະພວກທ່ານບໍ່ຮູ້ວ່າເຈົ້າເຮືອນຈະມາຍາມໃດ ຈະມາຫົວຄໍ່າ ຫລືທ່ຽງຄືນ ຫລືເວລາໄກ່ຂັນ ຫລືຮຸ່ງເຊົ້າຢ້ານວ່າຈະມາໃນທັນທີ ແລະພົບພວກທ່ານນອນຫລັບຢູ່ຊຶ່ງເຮົາບອກພວກທ່ານ ເຮົາກໍບອກຄົນທັງປວງເຫມືອນກັນ ຈົ່ງເຝົ້າຣະວັງຢູ່*" (ຂໍ້ 35-37).

<u>ຄໍາຖາມ:</u>

1. ເມື່ອສາວົກຍົກຍ້ອງພຣະວິຫານສວຍງາມນັ້ນພຣະເຢຊູຕອບວ່າແນວໃດ?

2. ພຣະວິຫານເປັນຫຍັງຈຶ່ງຖືກທໍາລາຍ?

3. ພຣະເຢຊູຊົງເຕືອນວ່າ "ຈົ່ງຣະວັງໃຫ້ດີ" ຕັ້ງຫລາຍເທື່ອນັ້ນທ່ານເຂົ້າໃຈແນວໃດ?

4. ມີຫຍັງເປັນເຄື່ອງໝາຍສຳຄັນວ່າຍຸກສຸດທ້າຍຈະມາເຖິງ?

5. ເມື່ອຖືກຈັບຂຶ້ນສານທ່ານຈະຕອບແນວໃດ? ໃຜຈະເປັນຜູ້ຊ່ອຍ?

6. ແມ່ນໃຜຮູ້ວັນເວລາໃນການສະເດັດກັບຄືນມາຄັ້ງທີສອງຂອງພຣະເຢຊູ?

7. ໃນຂະນະທີ່ລໍຄອຍວັນກັບມາຂອງພຣະອົງເຮົາຄວນເຮັດຫຍັງແດ່?

*ຫວ*

# <u>ບົດຮຽນທີ 12</u>
# <u>ບໍ່ແມ່ນຂ້ອຍດອກ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 14:10-31

**<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u>** ມາຣະໂກ 14:1931

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ບອກໃຫ້ຮູ້ວ່າເຮົາມີຊີວິດໃຫມ່ໃນພຣະເຢຊູ

**<u>ຄຳຖາມເພື່ອການສຳຣວດ:</u>** ເຮົາຈະປ້ອງກັນຕົວແນວໃດບໍ່ໃຫ້ຫລົງທາງ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອນຳພາເຮົາໃຫ້ລະນຶກເຖິງພຣະຄຸນພຣະເຈົ້າ ໂດຍວາງໃຈເຊື່ອຢ່າງແທ້ຈິງ

**<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## <u>ບົດນຳ</u>

ຄຣິສຕຽນໃນສມັຍນັ້ນແລະສມັຍນີ້ກໍບໍ່ແຕກຕ່າງກັນຫລາຍເທົ່າໃດເຣື່ອງຄວາມເຊື່ອແລະຄວາມຢ້ານກົວ ໃນຂະນະທີ່ພົບກັບການຂູ່ເຂັນຈາກຜູ້ມີອຳນາດ ເມື່ອຖືກຂູ່ແລ້ວສ່ວນຫລາຍຄຣິສຕຽນມັກຈະເອົາຕົວລອດສາກ່ອນ. ໃນບົດຮຽນວັນນີ້ ອາດຈະຊ່ອຍທ່ານບໍ່ໃຫ້ປະຕິເສດພຣະເຢຊູເມື່ອເວລານັ້ນມາເຖິງ.

ເຫດການທີ່ເກີດຂຶ້ນໃນບົດຮຽນນີ້ແມ່ນກົງກັບເທສການກິນເຂົ້າຈີ່ບໍ່ມີເຊື້ອແປ້ງຂອງຊົນຊາດອິສຣາເອນເພື່ອລະນຶກເຖິງພຣະຄຸນພຣະເຈົ້າທີ່ຊົງໄຖ່ອອກຈາການເປັນຂ້າທາດທີ່ປະເທດເອຢິບໃນພຣະທັມອົພຍົບ 12 ຄົນ ຍິວແຕ່ລະບ້ານເມືອງຕ່າງກໍພາກັນເດີນທາງມາຍັງກຸງເຢຣູຊາເລັມ ເພາະທີ່ນີ້ເປັນສູນກາງໃຫຍ່.

**<u>ຜູ້ນຶ່ງຈະທໍຣະຍົດ</u>** (14: 10-21)

*ຝ່າຍຢູດາອິສກາຣິອົດ ເປັນຜູ້ນຶ່ງໃນພວກສິບສອງຄົນນັ້ນ ໄດ້ໄປຫາພວກປະໂຣຫິດຄົນໃຫຍ່ເພື່ອຈະມອບພຣະອົງໃຫ້ເຂົາ ເມື່ອເຂົາໄດ້ຍິນດັ່ງນັ້ນກໍດີໃຈ ແລະສັນຍາວ່າຈະເອົາເງິນໃຫ້ ແລ້ວຢູດາກໍຊອກຫາໂອກາດທີ່ຈະມອບພຣະອົງໃຫ້ເຂົາ* ຂໍ້ 10-11. ຢູດາແມ່ນຜູ້ນຶ່ງໃນຈຳນວນສາວົກສິບສອງຄົນແລະຍັງເປັນຜູ້ເກັບກຳເງິນຫລືນາຍຄັງຂອງພຣະເຢຊູ, ຜູ້ນີ້ໄດ້ຄິດທໍຣະຍົດຕໍ່ພຣະເຢຊູໂດຍລັກໄປຫາພວກປະໂລຫິດເພື່ອບອກຄວາມລັບໃນການຈັບກຸມພຣະເຢຊູ ແລ້ວຕົນເອງຈະໄດ້ຮັບເງິນຄ່າຈ້າງໃນການທໍຣະຍົດຕໍ່ພຣະອາຈານຂອງຕົນ.

ສ່ວນພຣະເຢຊູໄດ້ສົ່ງສາວົກຂອງພຣະອົງໄປຈັດຕຽມເທສການນີ້ທີ່ກຸງເຢຣູຊາເລັມໂດຍສັ່ງເຂົາວ່າ *"ຈົ່ງເຂົ້າໄປໃນກຸງ ແລະຈະມີຊາຍຄົນນຶ່ງທູນຫມໍ້ມາພົບພວກທ່ານຈົ່ງຕາມຜູ້ນັ້ນໄປເຂົາຈະເຂົ້າໄປໃນເຮືອນຫລັງໃດ ຈົ່ງບອກເຈົ້າເຮືອນນັ້ນວ່າ "ອາຈານຖາມວ່າ ຫ້ອງຮັບແຂກສຳລັບເຮົາທີ່ເຮົາຈະກິນປັສຄາກັບພວກສາວົກຂອງເຮົາໄດ້ນັ້ນຢູ່ທີ່ໃດ?* (ຂໍ້ 13-14) (ຄຳວ່າທູນໝໍ້ ແປວ່າແບກໄຫນໍ້າ). ສາວົກສອງຄົນໄດ້ແກ່ເປໂຕ ແລະໂຢຮັນ ອີງຕາມພຣະທັມລູກາ, ເມື່ອທັງສອງໄປເຖິງທຸກຢ່າງກໍເປັນໄປຕາມພຣະຊູຊົງກ່າວ ແລ້ວສາວົກທັງສອງຈຶ່ງຕາມຊາຍຄົນນັ້ນໄປ, ແລ້ວທັງສອງຈຶ່ງຖາມວ່າ *"ອາຈານຖາມວ່າ ຫ້ອງຮັບແຂກສຳລັບເຮົາທີ່ເຮົາຈະກິນປັສຄາກັບພວກສາວົກຂອງເຮົາໄດ້ນັ້ນຢູ່ທີ່ໃດ* " (ຂໍ້ 14). ຖາມຄືພຣະເຢຊູໄດ້ຈອງໄວ້ລ່ວງໜ້າແລ້ວ ຄ້າຍຄືເຮົາຈອງໂຮງແຮມໄວ້ກ່ອນທີ່ເຮົາຈະໄປເຖິງ ດ້ວຍວ່າຜູ້ຖືໄຫນໍ້າແລະສາວົກເວົ້າເຂົ້າໃຈກັນດີ, ແຕ່ຂ້າພະເຈົ້າເຂົ້າໃຈວ່າເປັນການອັສຈັນຫລາຍກວ່າ ພຣະອົງຍັງບອກສາວົກອີກວ່າ ເມື່ອຖາມຊາຍຄົນນັ້ນແລ້ວລາວຈະບອກທ່ານວ່າຢູ່ທີ່ໃດ *ເຈົ້າຂອງເຮືອນຈະຊີ້ໃຫ້ພວກທ່ານເຫັນຫ້ອງໃຫຍ່ຊັ້ນເທິງທີ່ຕົກແຕ່ງພ້ອມໄວ້ແລ້ວ ທີ່ນັ້ນແຫລະ, ຈົ່ງຈັດແຈງໄວ້ສຳລັບພວກເຮົາ"* (ຂໍ້ 14- 15).

ຫລັງຈາກສາວົກຈັດແຈງບ່ອນໄວ້ຮຽບຮ້ອຍແລ້ວພຣະອົງກໍພາສາວົກມາທີ່ຫ້ອງຊັ້ນເທິງທີ່ເຮືອນຂອງຊາຍຜູ້ນັ້ນແລ້ວພຣະເຢຊູແລະສາວົກກໍມາຍັງຫ້ອງຊັ້ນເທິງເພື່ອກິນປັສຄາຮ່ວມກັບສາວົກ, ໃນຂະນະທີ່ຮ່ວມພາເຂົ້າແລງນັ້ນພຣະເຢຊູຊົງກ່າວວ່າຜູ້ນຶ່ງໃນຈຳນວນພວກສາວົກຈະທໍຣະຍົດພຣະອົງ *"ເຮົາບອກທ່ານທັງຫລາຍຕາມຈິງວ່າ ຄົນນຶ່ງໃນພວກທ່ານຈະທໍຣະຍົດຕໍ່ເຮົາ ແມ່ນຜູ້ນຶ່ງທີ່ກຳລັງຮັບປະທານອາຫານຢູ່ກັບເຮົານີ້ແຫລະ"* (ຂໍ້ 18). ເມື່ອພວກສາວົກໄດ້ຍິນດັ່ງນັ້ນຈຶ່ງພາກັນເປັນທຸກໃຈ ແລ້ວຈຶ່ງພາກັນຖາມພຣະອົງເທື່ອລະຄົນວ່າບໍ່ແມ່ນຂ້ານ້ອຍຕີ້ ເພາະຕ່າງຄົນຕ່າງກໍແນ່ໃຈໃນຕົນເອງວ່າຈະບໍ່ເປັນຄົນແນວນັ້ນ *"ຝ່າຍເຂົາກໍພາກັນທຸກໃຈ ແລະທູນຖາມພຣະອົງເທື່ອລະຄົນວ່າ, "ບໍ່ແມ່ນຂ້ານ້ອຍຕີ້"* (ຂໍ້ 19). ຄຣິສຕຽນເຮົາກໍຄິດຢ່າງດຽວກັນໃນເມື່ອບໍ່ມີອັນຕະລາຍມາເຖິງ ແຕ່ຫລາຍເທື່ອຍັງບໍ່ທັນເຖິງອັນຕະລາຍເທື່ອພໍພຽງຄວາມທຸກຍາກຂາດເຂີນຫລືມີເຣື່ອງຕ່າງໆເກີດຂື້ນເຮົາກໍທໍ້ໃຈແລະຖອຍເສັຽແລ້ວ. ພຣະເຢຊູບໍ່ໄດ້ຕອບຄຳຖາມຂອງສາວົກວ່າຜູ້ທີ່ທໍຣະຍົດນັ້ນແມ່ນໃຜ ແຕ່ບອກເປັນພາງໆວ່າ *"ເປັນຜູ້ນຶ່ງໃນສິບສອງຄົນນີ້ ຄືຜູ້ທີ່ກຳລັງຈໍ້າຮ່ວມຊາມດຽວກັບເຮົາ"* (ຂໍ້ 20).

<u>**ຊົງຕັ້ງສິນມະຫາສະນິດ**</u> (14:22-25)

ເທສການກິນເຂົ້າຈີ່ບໍ່ມີເຊື່ອແປ້ງທີ່ໄດ້ກາວມາກ່ອນຂ້າງເທິງນັ້ນແມ່ນເທສການລະນຶກເຖິງການຊົງໄຖ່ອອກຈາກການເປັນຂ້າທາດທີ່ເອຢິບ, ເທສການນີ້ມີພິທີການກິນເຂົ້າຈີ່ບໍ່ມີເຊື້ອແປ້ງນີ້ແມ່ນເລີ້ມຈາກຫົວໜ້າຄອບຄົວລົງມາຈົນເຖິງຜູ້ນ້ອຍທີ່ສຸດໃນຄອບຄົວ ແຕ່ສຳລັບ ແລງວັນນີ້ພຣະເຢຊູຊົງໃຫ້ຄວາມໝາຍໃໝ່ພິເສດດັ່ງນີ້; *ລະຫວ່າງອາຫານມື້ນັ້ນພຣະເຢຊູຊົງຈັບເຂົ້າຈີ່ມາຂໍພຣະພອນແລ້ວຊົງຫັກເຂົ້າຈີ່ນັ້ນຍື່ນໃຫ້ແກ່ພວກສາວົກໂດຍຊົງກ່າວວ່າ, "ຈົ່ງຮັບເທີ້ນ ນີ້ແຫລະ, ຄືກາຍຂອງເຮົາ"* (ຂໍ້ 22). ພຣະເຢຊູຊົງເປັນເໝືອນຫົວໜ້າຄອບຄົວ ແຕ່ມີຄວາມໝາຍໃໝ່ໂດຍພຣະອົງໃຊ້ຄຳວ່າ *"ນີ້ແຫລະ, ຄືກາຍຂອງເຮົາ"* ທີ່ບໍ່ໄດ້ກ່າວໃນເທສການປັສຄາມາກ່ອນ, ພຣະອົງຊົງກ່າວຢ່າງມີຄວາມໝາຍວ່າເຂົ້າຈີ່ບໍ່ມີເຊື້ອແປ້ງນັ້ນປຽບເໝືອນຮ່າງກາຍຂອງພຣະອົງທີ່ກຳລັງຈະແຕກຫັກດັ່ງເຂົ້າຈີ່ນັ້ນ. ໃນພຣະທັມມັດທາຍໄດ້ບອກໃຫ້ເຮົາຮູ້ວ່າຄາບເຂົ້ານີ້ແມ່ນຄາບ ແລງ *"ຄັນເຖິງເວລາຄໍ່າແລ້ວ* " (ມັດທາຍ 26: 20), ພຣະທັມລູກາໄດ້ບອກວ່າ *"ເມື່ອເຖິງໂມງແລ້ວ* " (ລູກາ 22:14). ພວກອັຄສາວົກທັງສາມໄດ້ບັນທຶກເຣື່ອງດຽວກັນແລະກໍບັນທຶກຄ້າຍຄືກັນ, ສິ່ງສຳຄັນໃນເຣື່ອງຂອງເວລາແມ່ນກົງກັບເວລາດຽວກັນກັບອິສຣາເອນຖືກປົດປ່ອຍຈາກການເປັນຂ້າທາດທີ່ເອຢິບ.

ຫລັງຈາກຫັກເຂົ້າຈີ່ແລ້ວພຣະອົງກໍຈັບເອົາຈອກນໍ້າອະງຸ່ນມາແລ້ວກ່າວວ່າ *"ນີ້ແຫລະ, ຄືເລືອດຂອງເຮົາ ແມ່ນເລືອດກ່ຽວກັບພຣະສັນຍາທີ່ຫລັ່ງອອກເພື່ອຄົນຫລາຍຄົນເຮົາບອກທ່ານທັງ ຫລາຍຕາມຈິງວ່າ ເຮົາຈະບໍ່ດື່ມນໍ້າຜົນອະງຸ່ນຕໍ່ໄປອີກຈົນກວ່າວັນນັ້ນມາເຖິງ ຄືວັນທີ່ເຮົາຈະດື່ມອັນໃຫມ່ໃນຣາຊແຜ່ນດິນຂອງພຣະເຈົ້າ"* (ຂໍ້ 24-25) ດ້ວຍເຫດນີ້ຈຶ່ງ

ໄດ້ຊື່ວ່າຊົງຕັ້ງສິນມະຫາສນິດ, ຈາກການຕັ້ງສິນມະຫາສນິດຫລືສິນລະນຶກທີ່ ເຮົາຮ້ອງກັນນັ້ນກໍເນື່ອງຈາກວ່າພະອົງຊົງສັ່ງໃຫ້ເຮັດຢ່າງນີ້ເພື່ອລະນຶກເຖິງພຣະອົງ *"ຈົ່ງເຮັດຢ່າງນີ້ເພື່ອເປັນທີ່ລະນຶກເຖິງເຮົາ"* (ລູກາ 22:19). ດ້ວຍເຫດນີ້ລາງຄົນຮ້ອງພິທີນີ້ວ່າ ສິນມະຫາສນິດ ເພາະພຣະອົງຊົງຕັ້ງ, ລາງຄົນ ຮ້ອງພິທີນີ້ວ່າສິນລະນຶກ ເພາະພຣະອົງຊົງສັ່ງວ່າໃຫ້ເຮັດດັ່ງນີ້ເພື່ອລະນຶກເຖິງພຣະອົງ ແຕ່ພຣະອົງບໍ່ໄດ້ບອກວ່າເຮັດແນວນີ້ດົນປານໃດ. ໃນພຣະທັມ 1ໂກຣິນໂທ 22 ແມ່ນຄັ້ງດຽວທີ່ບັນທຶກໃນພຣະຄັມພີຫລັງຈາກພຣະເຢຊູສະເດັດສູ່ສວັນ ດັ່ງນັ້ນໂບດຕ່າງໆຈຶ່ງປະຕິບັດກັນມາຈົນເຖິງທຸກວັນນີ້ຕາມຄວາມເຂົ້າໃຈຂອງຕົນ.

## <u>ຊົງເຕືອນຄັ້ງສຸດທ້າຍ</u> (14:26-31)

ຫລັງຈາກນັ້ນພຣະເຢຊູພາພວກສາວົກໄປຍັງພູໝາກກອກເທດແລ້ວກ່າວກັບສາວົກວ່າ *"ພວກທ່ານທຸກຄົນຈະສະດຸດໃຈເພາະມີຄຳຂຽນໄວ້ໃນພຣະຄັມພີວ່າ "ເຮົາຈະປະຫານຜູ້ລ້ຽງແກະ ແລະແກະຝູງນັ້ນຈະແຕກຊະກັນໄປ"* (ຂໍ້ 27). ພຣະທັມທີ່ພຣະເຢຊູກ່າວເຖິງມາຈາກພຣະທັມ ຊາຂາຣີຢາ 13:7 ກ່າວໄວ້ລ່ວງໜ້າແລະມີຄວາມໝາຍວ່າ ເມື່ອພຣະເຢຊູຖືກຈັບພວກສາວົກກໍຈະແຕກຊະກັນໄປ. ເມື່ອພວກສາວົກທຸກຄົນໄດ້ຍິນດັ່ງນັ້ນກໍພາກັນສະດຸດໃຈ ເພາະຕ່າງຄົນຕ່າງກໍແນ່ໃຈວ່າຈະບໍ່ປະຖິ້ມພຣະເຢຊູຢ່າງເດັດຂາດ, ເປໂຕເປັນຄົນກ້າຫານກວ່າຜູ້ອື່ນຈຶ່ງກ່າວວ່າ *"ເຖິງແມ່ນວ່າທຸກຄົນຈະສະດຸດໃຈ ສ່ວນຂ້ານ້ອຍບໍ່ສະດຸດໃຈ"* ພຣະເຢຊູຊົງຕອບເປໂຕວ່າ, *"ເຮົາບອກທ່ານຕາມຈິງວ່າ ໃນຄືນວັນນີ້ແຫລະ, ກ່ອນໄກ່ຈະຂັນສອງເທື່ອ ທ່ານຈະປະຕິເສດເຮົາເຖິງສາມຄັ້ງ"* (ຂໍ້ 29-30). ເປໂຕຢັ້ງຢືນຄວາມເຊື່ອຂອງຕົນຢ່າງຄັກແນ່ເຖິງແມ່ຜູ້ອື່ນຈະສະດຸດລາວກໍຈະບໍ່ສະດຸດ ຫາກຈະເວົ້າຕາມພາສາຊາວບ້ານແລ້ວ "<u>ບໍ່ແມ່ນຂ້ານ້ອຍດອກ</u>" ແຕ່ພຣະເຢຊູບອກຄວາມຈິງທີ່ຈະເກີດຂຶ້ນຄືເປໂຕຜູ້ຢັ້ງຢືນນັ້ນແຫລະຈະປະຕິເສດພຣະອົງ. ເມື່ອເປໂຕຢັ້ງຢືນເຊັ່ນນັ້ນສາວົກຜູ້ອື່ນກໍຢັ້ງຢືນຄືກັນ *"ຝ່າຍພວກສາວົກກໍທູນຢ່າງນັ້ນເຫມືອນກັນທຸກຄົນ"* (ຂໍ້ 31ຂ). ພວກສາວົກຕ່າງຄົນກໍຢັ້ງຢືນຄວາມເຊື່ອຂອງຕົນເອງ ແລະຍັງຢາກຮູ້ວ່າ ແມ່ນໃຜໃນຈຳນວນສິບສອງຄົນຈະເປັນຜູ້ປະຕິເສດພຣະອົງ.

ຢູດາກາຍເປັນຄົນທໍຣະຍົດແລະຂາຍພຣະເຢຊູດ້ວຍເງິນຈຳນວນນ້ອຍ, ຍ້ອນຢາກໄດ້ສິ່ງຂອງຝ່າຍໂລກ, ເປໂຕປະຕິເສດພຣະເຢຊູ ຍ້ອນຄວາມຢ້ານ ຊີວິດຂອງສາວົກທັງສອງກາຍເປັນບົດຮຽນອັນລ້ຳຄ່າຂອງພວກເຮົາ ຫາກແມ່ນເຮົາມັກສິ່ງຂອງຝ່າຍໂລກເຮົາອາດເປັນຄືຢູດາ, ຫາກເຮົາເປັນຄົນຢ້ານຕໍ່ການກົດຂີ່ຂົ່ມເຫັງ ຫລືຂາດຄວາມອົດທົນເຮົາກໍຈະເປັນຄືເປໂຕ ແຕ່ເມື່ອເຮົາໄດ້ຮັບບົດຮຽນຈາກຊີວິດຂອງສາວົກທັງສອງແລ້ວ ເຣື່ອງພຣະເຢຊູຊົງກ່າວຕໍ່ຢູດາແລະເປໂຕກໍມາເຖິງເຮົາດ້ວຍ ດັ່ງນັ້ນຂໍເຮົາທັງຫລາຍຮັບບົດຮຽນຈາກຢູດາແລະເປໂຕ ຈົນກວ່າພຣະອົງຈະກັບມາຮັບເຮົາ.

ພຣະເຢຊູໄດ້ເຕືອນສາວົກເປໂຕເປັນເທື່ອສຸດທ້າຍຢ່າງໜັກແໜ້ນວ່າ ເປໂຕຈະປະຕິເສດພຣະອົງ ແຕ່ເຖິງປານນັ້ນເປໂຕສາວົກຜູ້ໃກ້ຊິດພຣະເຢຊູກໍຍັງບໍ່ຈື່ຈຳຄຳເຕືອນ ຈົນເຖິງຂັ້ນປະຕິເສດພຣະອົງເຖິງສາມເທື່ອ, ຫາກເພິ່ນບໍ່ເຕືອນກໍຈະບໍ່ຕັ້ງໃຈ ແຕ່ນີ້ເຕືອນແລ້ວຍັງປະຕິເສດຢູ່ຈຶ່ງກາຍເປັນບົດຮຽນອັນລ້ຳຄ່າສຳລັບເຮົາທຸກຄົນເພື່ອຈະບໍ່ໄດ້ປະຕິເສດພຣະອົງໃນເມື່ອປະເຊີນກັບສະພາບການຂ້າງໜ້າ.

<u>ຄຳຖາມ:</u>

1. ທ່ານຄິດວ່າຢູດາຄິດແນວໃດຈຶ່ງຄິດຈະຂາຍພຣະເຢຊູ?.

2. ທ່ານເຄີຍຄິດເກືອບປະຕິເສດພຣະເຢຊູເທື່ອນຶ່ງແລ້ວມີບໍ່? ໃນສະພາບການແນວໃດ?

3. ວັນນຶ່ງຂ້າງໜ້າຫາກຖືກຂູ່ວ່າຫາກບໍ່ເຊົາເຊື່ອພຣະເຢຊູຈະເອົາເຂົ້າຄຸກ ທ່ານຈະວ່າແນວໃດ?

4. ທຸກຄັ້ງທີ່ມີພິທີສິນມະຫາສນິດ ຫລືສິນລະນຶກໃນໂບດຂອງທ່ານໆຄິດແນວໃດ?

5. ຄຳເຕືອນທີ່ພຣະເຢຊູເຕືອນເປໂຕ ເປັນບົດຮຽນແກ່ທ່ານຢ່າງໃດ?

*ທວ*

# ບົດຮຽນທີ 13
# ຂ່າວດີໃນເຣື່ອງຮ້າຍ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ມາຣະໂກ 14:61-64; 15:9-24, 37-41; 16:1-8

**ຂໍ້ພຣະຄັມທັງໝົດສໍາລັບບົດຮຽນນີ້:** ມາຣະໂກ 14:32--16:1-8

**ຈຸດສໍາຄັນຂອງບົດຮຽນນີ້:** ຊັກຊວນໃຫ້ເຊື່ອວ່າພຣະເຢຊູຊະນະຄວາມຕາຍ.

**ຄໍາຖາມເພື່ອການສໍາຣວດ:** ການຕາຍແລະການຄືນມາຂອງພຣະເຢຊູມີຜົນຕໍ່ຊີວິດເຮົາແນວໃດ?

**ຈຸດປະສົງຂອງບົດຮຽນນີ້:** ການຖືກຄຶງໃຫ້ຕາຍແລະການຟື້ນພຣະຊົນແມ່ນຊັຍມະຊະ

**ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນໍາ

ເມື່ອໃກ້ເວລາທີ່ພຣະເຈົ້າຈະມອບພຣະເຢຊູໄວ້ກັບມືຂອງພວກທະຫານ ພຣະເຢຊູໄດ້ພາພວກສາວົກໄປຍັງສວນເຄັດເຊມາເນ ເພື່ອໃຫ້ສາວົກເຝົ້າຣະວັງຢູ່ ແຕ່ພວກສາວົກພາກັນນອນຫລັບຈຶ່ງເພີ້ມຄວາມທຸກໃຈແກ່ພຣະອົງເປັນຢ່າງຍິ່ງ ເພາະວ່າພຣະບິດາມີພຣະປະສົງໃຫ້ພຣະເຢຊູຄຣິດຖືກຂ້າຕາຍທີ່ໄມ້ກາງແຂນ ເພື່ອເປັນຄ່າໄຖ່ບາບຂອງຄົນທັງປວງ. ຄວາມທຸກໃຈຂອງພຣະອົງນັ້ນເຫລືອປະມານແລ້ວ ຈຶ່ງຂໍໃຫ້ສາວົກເວົ້າຣະວັງແລະອ້ອນວອນ ແຕ່ເຂົາພາກັນນອນຫລັບ, ໃນທີ່ສຸດຢູດາສາວົກຜູ້ທໍຣະຍົດກໍປາກົດຕົວພ້ອມກັບພວກທະຫານເພື່ອຈັບກຸມພຣະເຢຊູ (14:43-49).

### ພຣະເຢຊູຂຶ້ນສານ (14: 61-64)

ທີ່ສານສູງສຸດນັ້ນປະກອບດ້ວຍພວກມະຫາປະໂຣຫິດຄົນໃຫຍ່, ພວກເຖົ້າແກ່ ແລະພວກນັກທັມ ພວກເຂົາພະຍາຍາມຊອກຫາຫລັກຖານເພື່ອຈັບຄວາມຜິດພຣະເຢຊູ ແຕ່ກໍບໍ່ມີຫລັກຖານອັນໃດພໍທີ່ຈະລົງໂທດພຣະອົງເຖິງຕາຍ ພວກເຂົາໄດ້ໂຈດຖາມພຣະເຢຊູມາດົນນານແລ້ວພຣະອົງກໍບໍ່ຕອບເຂົາຢ່າງໃດ ດັ່ງນັ້ນເຂົາຈຶ່ງຖາມອີກວ່າ *"ເຈົ້າເປັນພຣະຄຣິດພຣະບຸດຂອງພຣະເຈົ້າຜູ້ຊົງຄວາມສຸກຫລີ"* (ຂໍ້ 61ຂ). ຄັ້ງນີ້ພຣະເຢຊູຕອບເຂົາວ່າ *"ເຮົາເປັນຜູ້ນັ້ນແຫລະ, ແລະພວກທ່ານຈະໄດ້ເຫັນບຸດມະນຸດນັ່ງຢູ່ເບື້ອງຂວາຂອງຜູ້ຊົງຣິດທານຸພາບ ແລະກໍາລັງສະເດັດມາໃນເມກແຫ່ງຟ້າສວັນ"* ແປວ່າພຣະອົງຊົງບອກເຂົາວ່າພຣະອົງນັ່ງບັນລັງເບື້ອງຂວາທີ່ຟ້າສວັນ (ເພງສັຣເສີນ 110:1) ແລະພຣະອົງຈະສະເດັດມາໂລກເທື່ອທີ່ສອງເພື່ອຕັດສິນລົງໂທດຜູ້ບໍ່ເຊື່ອແລະໃຫ້ຣາງວັນຜູ້ເຊື່ອພຣະອົງໃນອະນາຄົດອັນໃກ້ (ດານີເອນ 7:13). ພຣະເຢຊູຕອບມະຫາປະໂຫຫິດກ່ຽວກັບຄວາມຈິງທີ່ຈະເກີດຂຶ້ນ ແຕ່ເຂົາບໍ່ເຂົ້າໃຈວ່າພຣະອົງຊົງເປັນດັ່ງນັ້ນແທ້ ເຂົາຄິດວ່າພຣະເຢຊູເວົ້າໝິ່ນປມາດພຣະເຈົ້າ ໂດຍຖືຕົນເອງເປັນພຣະເຈົ້າ ດ້ວຍເຫດນີ້ມະຫາປະໂຣຫິດຈຶ່ງຈີກເສື້ອຂອງຕົນດ້ວຍຄວາມໂມໂຫຢ່າງຮ້າຍແຮງທັງເປັ່ງສຽງຮ້າຍ *"ມະຫາປະໂຣຫິດຜູ້ນັ້ນໄດ້ຈີກເສື້ອຂອງຕົນແລ້ວກ່າວວ່າ, ພວກເຮົາຍັງຕ້ອງການພຍານອັນໃດອີກທ່ານທັງຫລາຍໄດ້ຍິນຄໍາໝິ່ນປມາດພຣະເຈົ້າແລ້ວ ພວກທ່ານຄິດເຫັນຢ່າງໃດ ຂາ*

*ປະຊຸມທັງຫມົດຈຶ່ງເຫັນວ່າພຣະອົງຄວນຖືກໂທດປະຫານຊີວິດ* "(ຂໍ້ 63-64). ດັ່ງນັ້ນເຂົາຈຶ່ງພາພຣະເຢຊູໄປຫາປີລາດຊາວໂຣມມັນແລະຜູ້ປົກຄອງຊາດຢິວໃນເວລານັ້ນ ເພື່ອຂໍໃຫ້ທ່ານສັ່ງປະຫານພຣະເຢຊູ ດ້ວຍວ່າສານຂອງຢິວບໍ່ມີສິດສັ່ງຂ້າຜູ້ໃດ, ພວກປະໂຣຫິດຟ້ອງພຣະເຢຊູໃນຖານໝິ່ນປມາດພຣະເຈົ້າ. *"ຜູ້ໃດທີ່ຫມິ່ນປມາດພຣະນາມຂອງພຣະເຈົ້າຈະຕ້ອງຖືກໂທດເຖິງຕາຍ ໃຫ້ຊຸມນຸມຊົນຄວ້າງກ້ອນຫີນໃສ່ເຂົາເສັຽໃຫ້ຕາຍ ຄົນຕ່າງດ້າວຫລືຊາວເມືອງກໍດີເມື່ອເຂົາຫມິ່ນປມາດພຣະນາມ ຈະຕ້ອງຖືກໂທດເຖິງຕາຍ* "(ລະບຽບພວກເລວີ 24:16).

**<u>ຕໍ່ໜ້າປີລາດ</u>** (15:9-20)

ພວກມະຫາປະໂຣຫິດແລະພວກຢິວເອົາພຣະເຢຊູໄປຫາປີລາດຫວັງໃຈວ່າຈະໃຫ້ປີລາດສັ່ງປະຫານພຣະເຢຊູ ແຕ່ພໍເມື່ອ ໄປຮອດແລ້ວປີລາດກໍມີໃຈຢາກປ່ອຍພຣະເຢຊູ ດ້ວຍປີລາດຮູ້ຂ່າວວ່າພວກປະໂຣຫິດຕົນໃຫຍ່ອິດສາພຣະເຢຊູ, ດັ່ງນັ້ນ ປີລາດຈຶ່ງເວົ້າກັບເຂົາວ່າ *"ເຈົ້າທັງຫລາຍຢາກໃຫ້ເຮົາປ່ອຍກະສັດຂອງຊາດຢິວໃຫ້ພວກເຈົ້າຫລື"* (ຂໍ້ 9). ເພາະວ່າໃນ ຄາວກ່ອນເມື່ອພວກຢິວສລອງເທສການກິນເຂົ້າຈີ່ບໍ່ມີເຊື້ອແປ້ງແນວນີ້ ເພື່ອລະນຶກເຖິງວັນທີ່ໄດ້ຮັບເອກະຣາດ (ປົດ ປ່ອຍ) ຈາກເອຢິບນັ້ນພວກຢິວເຄີຍໄດ້ມາຂໍໃຫ້ປີລາດປ່ອຍນັກໂທດຜູ້ນຶ່ງເພື່ອເປັນສີຣິມຶງຄຸນໃນວັນເອກຣາດຂອງເຂົາ, ດັ່ງນັ້ນວັນນີ້ປີລາດຈຶ່ງຊອກຫາວິທີທາງທີ່ຈະຊ່ອຍພຣະເຢຊູໃຫ້ພົ້ນຈາກການກ່າວຫານີ້. ຄວາມຈິງແລ້ວພຣະເຢຊູຊົງ ເປັນພຣະເຈົ້າບໍ່ຈຳເປັນຈະເພິ່ງອຳນາດໃດໆໃນໂລກ, ຫາກເພິ່ນຈະໃຊ້ຣິດອຳນາດຂອງພຣະເຈົ້າກະໄດ້ແຕ່ເຮົາເຂົ້າ ໃຈວ່າຍັງບໍ່ທັນເຖິງເວລາເທື່ອ. ເມື່ອປີລາດຖາມເຊັ່ນນັ້ນ ພວກເຂົາກໍຫາວິທີໃຫ້ປີລາດປ່ອຍນັກໂທດຂ້າຄົນ *"ແຕ່ພວກປະໂຣຫິດຕົນໃຫຍ່ໄດ້ຍົວະຍົງປະຊາຊົນ ໃຫ້ຂໍປີລາດປ່ອຍບາຣາບາແທນພຣະເຢຊູ"* (ຂໍ້ 11).

ສ່ວນປີລາດຍັງພະຍາຍາມຫາຊ່ອງທາງຊ່ອຍພຣະເຢຊູອີກຈຶ່ງກາວກັບພວກປະໂຣຫິດວ່າ, *"ຖ້າຢ່າງນັ້ນຢາກໃຫ້ເຮົາເຮັດຢ່າງໃດແກ່ຜູ້ທີ່ພວກເຈົ້າເອີ້ນວ່າກະສັດຂອງຊາດຢິວ"ເຂົາຮ້ອງຂຶ້ນອີກວ່າ, "ຄຶງມັນໄວ້ທີ່ໄມ້ກາງແຂນ"ປີລາດຈຶ່ງຖາມເຂົາວ່າ, "ຄຶງເຮັດຫຍັງ ຄົນນີ້ໄດ້ເຮັດຜິດອັນໃດ" ແຕ່ປະຊາຊົນແຮ່ງຮ້ອງຂຶ້ນອີກວ່າ, "ຄຶງໄວ້ທີ່ໄມ້ກາງແຂນ"ປີລາດປາຖນາຈະເອົາໃຈປະຊາຊົນຈຶ່ງປ່ອຍບາຣາບາໃຫ້ເຂົາ ເມື່ອໃຫ້ຂ້ຽນພຣະເຢຊູແລ້ວ ກໍມອບໃຫ້ຄຶງໄວ້ທີ່ໄມ້ກາງແຂນ"* (ຂໍ້ 12-15). ຖານະຂອງປີລາດເປັນຜູ້ມີອຳສູງສຸດ ແຖມຍັງຮູ້ວ່າເຂົາອິດສາພຣະເຢຊູ ແລ້ວຍັງປ່ອຍໃຫ້ເຂົາຄຶງພຣະເຢຊູອີກນັ້ນ ພວກນັກການເມືອງສມັຍນີ້ພາກັນວິຈານວ່າ ປີລາດເປັນນັກການເມືອງທີ່ອ່ອນແອໄປແດ່.

ພວກທະຫານຮ້ອຍກວ່າຄົນໄດ້ຈັບກຸມພຣະເຢຊູ ແລະນຳໄປທີ່ໄມ້ກາງແຂນເພື່ອຕອກຄຶງພຣະອົງຢູ່ທີ່ໂຄລະໂກທານັ້ນ, ກ່ອນພວກທະຫານຈະນຳພຣະອົງໄປນັ້ນເຂົາໄດ້ເຮັດຊົ່ວຊ້າຫລາຍປະການເພື່ອເຍາະເຍີ້ຍພຣະອົງໃຫ້ໄດ້ຮັບຄວາມອັບອາຍ ແລະພວກເຂົາໄດ້ຂ້ຽນຕີພຣະອົງດ້ວຍໄມ້ແສ້ທັງຖົ່ມນ້ຳລາຍໃສ່ໜ້າພຣະອົງ ເພື່ອສະແດງການດູຖູກໝິ່ນປມາດພຣະອົງຕໍ່ໜ້າປະຊາຊົນທີ່ຢືນເບິ່ງຢູ່ນັ້ນ ເຂົາຍັງໄດ້ຂຽນປ້າຍຄຳເວົ້າທີ່ເຍາະເຍີ້ຍວ່າ *"ກະສັດຂອງຊາດຢິວເອີຍ, ຈົ່ງຊົງພຣະຈະເຣີນເທີນ"* (ຂໍ້ 18).

**<u>ທີ່ໂຄລະໂກທາ</u>** (15:21-24 , 37-41)

ໂຄລະໂກທາມາຈາກພາສາອາຣາມິກ ແປວ່າພູຫົວກະໂຫລກ ດ້ວຍວ່າທາງຣາຊການໄດ້ໃຊ້ພູນ້ອຍບ່ອນນີ້ເປັນບ່ອນປະຫານນັກໂທດ ດັ່ງນັ້ນພູນ້ອຍໜ່ວຍນີ້ຈຶ່ງໄດ້ຊື່ວ່າ ພູກະໂຫລກຫົວຫລ້ອນ. ພຣະເຢຊູໄດ້ແບກກາງແຂນຂອງພຣະອົງຈາກບ່ອນປີລາດຕັດສິນດ້ວຍຄວາມເຈັບປວດ ເພາະຖືກເຂົາຂ້ຽນຕີແລະຖືກຄົນທັງຫລາຍເຍາະເຍີ້ຍດ່າວ່ານາໆ ປະການ ພຣະອົງໄດ້ອົດທົນຕໍ່ສິ່ງເຫລົ່ານີ້ເພື່ອຄວາມບາບຂອງມະນຸດທັງຫລາຍຈະໄດ້ຫລຸດພົ້ນໃນຄວາມຕາຍຂອງພຣະອົງທີ່ໄມ້ກາງແຂນນັ້ນ, ພຣະອົງຊົງອ່ອນແຮງຈາກການທຸບຕີທົ່ວຮ່າງກາຍ ຈຶ່ງແບກກາງແຂນດ້ວຍລົ້ມລຸກຄຸກຄານເຂົາຈຶ່ງເກນເອົາຊີໂມນຊາວອາຟຣິກາເໝືອນມາຊ່ອຍແບກກາງແຂນຂອງພຣະອົງໄປຈົນເຖິງໂຄລະໂກທາ.

ເຂົາໄດ້ຕອກຄຶງພຣະອົງດ້ວຍເຫລັກຕາປູຕິດກັບໄມ້ກາງແຂນທີ່ໂຄລະໂກທາ, ໃນປະຫວັດສາດຂອງການປະຫານນັກໂທດທີ່ໂຄລະໂກທາ ພວກເຂົາເຄີຍເອົາເຫລົ້າແວງກັບຢາງໄມ້ຫອມມາໃຫ້ນັກໂທດປະຫານໄດ້ກິນດື່ມກ່ອນຕາຍ ວັນນີ້ເຂົາກໍເຮັດຢ່າງດຽວກັນ ແຕ່ພຣະອົງບໍ່ຍອມຮັບກິນແລະດື່ມ "*ເຂົາໄດ້ເອົາເຫລົ້າແວງປົນກັບຢາງໄມ້ຫອມມາຖວາຍພຣະອົງແຕ່ພຣະອົງບໍ່ຊົງຮັບ* "(ຂໍ້ 23). ສ່ວນພວກທະຫານກໍເຮັດການເຍາະເຍີ້ຍໂດຍເອົາເສື້ອຜ້າຂອງພຣະອົງມາຫລິ້ນເກມຈົກສລາກແບ່ງປັນກັນດ້ວຍຄວາມມ່ວນຊື່ນຕາມພາສາຂອງຄົນມັກເຍາະເຍີ້ຍ (ຂໍ້ 24).

ສາມໂມງແລງເປັນເວລານາທີສຸດທ້າຍຂອງພຣະອົງຈະສິ້ນໃຈ ແຕ່ກ່ອນຈະສິ້ນໃຈພຣະອົງຊົງຮ້ອງດ້ວຍສຽງດັງແລ້ວກໍສິ້ນໃຈ, ພຣະທັມມັດທາຍໄດ້ບັນທຶກສຽງຮ້ອງຂອງພຣະອົງວ່າ "*ເອລີ ໆ ແລມາ ຊາບັກທານີ* "*ແປວ່າພຣະເຈົ້າຂອງຂ້າພຣະອົງ, ພຣະເຈົ້າຂອງຂ້າພຣະອົງເອີຍ ເຫດສັນໃດຈຶ່ງຊົງປະຖິ້ມຂ້າພຣະອົງເສັຽ* "(ມັດທາຍ 27:46). ເມື່ອພຣະອົງຊົງສິ້ນໃຈແລ້ວ ໃນທັນໃດນັ້ນກໍມີການອັສຈັນເກີດຂຶ້ນໃນພຣະວິຫານທີ່ກຸງເຢຣູຊາເລັມ "*ຂນະນັ້ນຜ້າກັ້ງໃນພຣະວິຫານກໍຖືກຊົງຈີກເປັນສອງທ່ອນຕັ້ງແຕ່ເທິງຈົນເຖິງລຸ່ມສ່ວນນາຍຮ້ອຍທະຫານທີ່ຢືນຢູ່ຕໍ່ພຣະພັກພຣະອົງ ເມື່ອເຫັນວ່າພຣະອົງສິ້ນພຣະຊົນຢ່າງນັ້ນແລ້ວຈຶ່ງເວົ້າວ່າ, "ຈິງແທ້ແລ້ວ ທ່ານຜູ້ນີ້ແມ່ນພຣະບຸດຂອງພຣະເຈົ້າ"* (ຂໍ້ 38-39). ສ່ວນພວກຜູ້ຍິງທີ່ເຄີຍປະຕິບັດຮັບໃຊ້ພຣະອົງທີ່ແຂວງຄາລີເລກໍຢືນເຝົ້າທີ່ໄມ້ກາງແຂນຈົນເຖິງນາທີສຸດທ້າຍ.

**<u>ພວກຜູ້ຍິງພົບອຸບໂມງຫວ່າງເປົ່າ</u>** (16:1-8)

ພວກຜູ້ຍິງກຸ່ມດຽວທີ່ຢືນເຝົ້າເບິ່ງພຣະເຢຊູທີ່ໄມ້ກາງແຂນໄດ້ພາກັນລຸກແຕ່ເຊົ້າມືດ ເພື່ອຈະໄປຢ້ຽມຢາມສົບຂອງພຣະເຢຊູ ດ້ວຍການທາດສົງນ້ຳຫອມທີ່ພວກນາງຈັດຕຽມໄວ້, ພວກນາງຮູ້ຢູ່ແກ່ໃຈວ່າຈະບໍ່ສາມາດເປີດປາກຖ້ຳທີ່ບັນຈຸພຣະສົບຂອງພຣະອົງໄດ້ ດ້ວຍວ່າປາກຖ້ຳນັ້ນຖືກປິດດ້ວຍຫີນແຜ່ນໃຫຍ່ ພ້ອມທັງມີທະຫານຍາມເຝົ້າຮັກສາຄວາມເປັນຣະບຽບຮຽບຮ້ອຍຢູ່ ແຕ່ພວກນາງກໍຕັດສິນໃຈໄປ ດ້ວຍຄວາມຮັກອັນແຮງກ້າຂອງພວກນາງ. ແຕ່ພໍເມື່ອພວກນາງໄປຮອດຖ້ຳຝັງສົບແລ້ວ ທຸກຢ່າງກໍບໍ່ເປັນດັ່ງທີ່ພວກນາງຄິດໄວ້, ກັບມີການອັສຈັນເກີດຂຶ້ນ "*ເມື່ອເຂົາເບິ່ງກໍເຫັນວ່າກ້ອນຫີນນັ້ນກິ້ງອອກແລ້ວ* "(ຂໍ້ 4). ພວກຜູ້ຍິງມີຄວາມຊົມຊື່ນຍິນດີຈຶ່ງຟ້າວແລ່ນເຂົ້າໄປໃນຖ້ຳ, ເຣື່ອງນີ້ສອນໃຫ້ເຮົາຮູ້ວ່າລາງເທື່ອເຮົາຄິດຍາກເກີນໄປສຳລັບງານຂອງພຣະເຈົ້າ ດັ່ງນັ້ນເຮົາບໍ່ຄວນຄິດຍາກໃນເຣື່ອງໃດໆ ຂໍພຽງແຕ່ເຮົາໄປແລະເຮັດກິຈການຂອງພຣະອົງເທົ່ານັ້ນ ແລະສິ່ງທັງປວງພຣະເຈົ້າຈະເປັນຜູ້ຈັດຫາໃຫ້.

"*ເມື່ອເຂົ້າໄປໃນອຸບໂມງແລ້ວ ເຂົາໄດ້ເຫັນຄົນຫນຸ່ມຄົນນຶ່ງນັ່ງຢູ່ເບື້ອງຂວານຸ່ງເສື້ອຍາວສີຂາວພວກຍິງນັ້ນກໍສະທ້ານຕົກໃຈຝ່າຍຄົນຫນຸ່ມນັ້ນໄດ້ບອກເຂົາວ່າ, "ຢ່າຕົກໃຈເທາະ ພວກນາງມາຊອກຫາພຣະເຢຊູໄທນາຊາເຣັດ ຜູ້ຖືກຄຶງໄວ້ທີ່ໄມ້ກາງແຂນ ພຣະອົງຊົງຖືກບັນດານໃຫ້ເປັນຄືນມາແລ້ວພຣະອົງບໍ່ໄດ້ປະທັບຢູ່ທີ່ນີ້ ນີ້ແຫລະ, ບ່ອນທີ່ເຂົາໄດ້ວາງພຣະສົບຂອງພຣະອົງໄວ້* "(ຂໍ້ 5-6). ນັບວ່າເປັນຂ່າວດີທີ່ບໍ່ໜ້າເຊື່ອໃນສິ່ງທີ່ໄດ້ເກີດຂຶ້ນແລ້ວ, ນ້ຳຫອມທີ່ພວກນາງພາກັນຈັດຕຽມໄປນັ້ນບໍ່ທາດສົງພຣະສົບຂອງພຣະອົງ ເພາະວ່າພຣະອົງຊົງເປັນພຣະເຈົ້າອົງຊົນພຣະຊົນຢູ່, ພຣະອົງຊົງຊະນະຄວາມຕາຍແລະຄືນມາມີຊີວິດແລະຈະມີຊີວິດຢູ່ຕລອດໄປ. ດັ່ງທີ່ເທວະດາຕົນນັ້ນໄດ້ບອກຜູ້ຍິງເຫລົ່ານັ້ນແລະຍັງບອກພວກນາງໄປບອກຂ່າວດີນີ້ກັບພວກສາວົກທີ່ຊຸມນຸມກັນໃຫ້ຮູ້ເຣື່ອງນີ້ອີກ "*ແຕ່ຈົ່ງໄປບອກພວກສາວົກຂອງພຣະອົງທັງເປໂຕວ່າ "ພຣະອົງສະເດັດໄປຍັງແຂວງຄາລີເລກ່ອນເຈົ້າທັງຫຼາຍ ແລະເຈົ້າທັງຫລາຍຈະເຫັນພຣະອົງຢູ່ທີ່ນັ້ນ ເຫມືອນພຣະອົງຊົງບອກໄວ້ແກ່ເຈົ້າທັງຫລາຍແລ້ວ"ຍິງເຫລົ່ານັ້ນກໍອອກຈາກອຸບໂມງປົບຫນີໄປ ເພາະຄວາມວຸ້ນວາຍຢ້ານກົວຕົວສັ່ນໄດ້ຕົກໃສ່ເຂົາ ແລະບໍ່ໄດ້ເວົ້າຫຍັງໃຫ້ຜູ້ໃດຟັງເພາະເຂົາຢ້ານ* "(ຂໍ້ 7-8). ຄວາມຕາຍຂອງພຣະອົງເປັນເຣື່ອງຮ້າຍທີ່ສຸດທີ່ພຣະອົງໄດ້ຮັບຄວາມທຸກທໍຣະມານ ແລະຄວາມຕາຍຂອງພຣະອົງເປັນການຕາຍທີ່ດີທີ່ສຸດ ເພາະເປັນການຕາຍເພື່ອໄຖ່ໂທດບາບຂອງຄົນທັງຫລາຍ.

## <u>ຄຳຖາມ</u>

1. ພຣະເຢຊູໄປອ້ອນວອນຢູ່ໃສ? ແລະບອກໃຜໃຫ້ເຝົ້າຣະວັງແລະອ້ອນວອນຢູ່ບໍ່ຂາດ?

2. ເຂົາໂຈດຖາມພຣະອົງວ່າ *"ເຈົ້າເປັນພຣະຄຣິດ ພຣະບຸດຂອງພຣະເຈົ້າຜູ້ຊົງຄວາມສຸກຫລີ"* (14:61) ນັ້ນພຣະອົງຊົງຕອບເຂົາຢ່າງໃດ? ເປັນຫຍັງພຣະອົງຈຶ່ງຕອບເຂົາແນວນັ້ນ?

3. ເປັນຫຍັງມະຫາປະໂຣຫິດຈຶ່ງຈີກເສື້ອຜ້າຂອງຕົນ?

4. ແລ້ວເຂົາສົ່ງພຣະເຢຊູໄປຫາໃຜ? ໄປເພື່ອອັນໃດ?

5. ປີລາດມີໃຈຢ່າງໃດກັບພຣະເຢຊູ?

6. ເປັນຫຍັງປີລາດຈຶ່ງປ່ອຍໃຫ້ເຂົາເອົາພຣະເຢຊູໄປຕຶງທີ່ໄມ້ກາງແຂນ?

7. ພວກໃດຢືນເຝົ້າທີ່ໄມ້ກາງແຂນ ແລະພວກດຽວກັນນີ້ໄປໃສແຕ່ເຊົ້າມືດ? ເປັນຫຍັງຈຶ່ງໄປ?

8. ເມື່ອໄປແລ້ວເຂົາເຫັນຫຍັງແດ່?

*ທວ*

# ບົດຮຽນເຣື່ອງຄຣິສມາສ
# ສະງ່າຣາສີຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ລູກາ 2:1-20
**ຂໍ້ພຣະຄັມພີທັງຫມົດສໍາລັບບົດຮຽນນີ້:** ລູກາ 2:1-20
**ຈຸດສໍາຄັນຂອງບົດຮຽນນີ້:** ໃຫ້ເຂົ້າໃຈເຣື່ອງພຣະເຈົ້າສົ່ງພຣະບຸດລົງມາເກີດ ເພື່ອເຮົາຈະໄດ້ສັຣເສີນ.
**ຄໍາຖາມເພື່ອການສໍາຣວດ:** ເປັນຫຍັງການເກີດຂອງພຣະເຢຊູຈຶ່ງເຮັດໃຫ້ເຮົາຍິນດີແທ້?
**ຈຸດປະສົງຂອງບົດຮຽນນີ້:** ເຂົ້າໃຈຄວາມໝາຍການສະເດັດມາຂອງພຣະເຢຊູຄຣິດ.

**ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ນໍາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.
- ເຊື່ອຟັງຮັບໃຊ້ພຣະເຢຊູໂດຍການເບິ່ງຜູ້ປ່ວຍ, ຜູ້ອ່ອນແອທາງຈິດວິນຍານ ແລະຜູ້ມີຄວາມທຸກໃຈ.

## ບົດນໍາ

ລູກາໄດ້ບັນທຶກເຣື່ອງການເກີດຂອງພຣະເຢຊູຜູ້ຊົງເປັນພຣະບຸດຂອງພຣະເຈົ້າ ລົງມາເກີດເປັນມະນຸດຢ່າງອັສຈັນທີ່ສຸດ. ວັນເກີດຂອງພຣະເຢຊູນໍາພາຄົນທັງໂລກມີຄວາມຊົມຊື່ນຍິນດີແລະຮັບຄວາມມ່ວນຊື່ນດ້ວຍສຽງເພງ, ສຽງດົນຕຣີແລະຍັງເອ້ຕາມສະຖານທີ່ຕ່າງໆດ້ວຍໄຟແສງສີອີກ. ຄຣິສມາສແມ່ນຊ່ວງເວລາທີ່ຜູ້ຄົນພາກັນໃຊ້ຈ່າຍເງິນຫລາຍເພື່ອຊື້ຂອງຂວັນໃຫ້ກັນແລະກັນ ດ້ວຍວ່າພຣະເຢຊູຊົງເປັນຂອງຂວັນທີ່ມາຈາກພຣະເຈົ້າ ດັ່ງນັ້ນຄົນທັງຫລາຍຈຶ່ງມີຄວາມຍິນດີຊື້ຂອງຂວັນໃຫ້ກັນແລະກັນ.

**ໂຢເຊບແລະມາຣີອາຜູ້ເຊື່ອຟັງ** (2:1-7)

ພຣະເຈົ້າຜູ້ຊົງສ້າງຟ້າສວັນແລະສ້າງທັມຊາດດ້ວຍຣິດອໍານາດຂອງພຣະອົງ ແລະພຣະອົງຍັງຄົງຢູ່ເໜືອຟ້າສວັນແລະຢູ່ເໜືອແຜ່ນດິນທີ່ເຕັມໄປດ້ວຍທັມຊາດ ຄືພຣະອົງໄດ້ສົ່ງພຣະບຸດລົງມາປະຕິສົນທິໃນທ້ອງຂອງນາງມາຣີອາຜູ້ເປັນຍິງສາວບໍຣິສຸດພຸດຜ່ອງຊຶ່ງພາສາພຣະຄັມພີເວົ້າວ່າມາຣີອາຍິງພົມມະຈາຣີ. ມັນເປັນເຣື່ອງເກີນກວ່າຄວາມເຂົ້າໃຈຂອງມະນຸດ ດ້ວຍວ່າຕາມທັມມະຊາດແລ້ວກ່ອນຜູ້ຍິງຈະຕັ້ງທ້ອງກໍຕໍ່ເມື່ອມີການຮ່ວມເພດກັບຜູ້ຊາຍເທົ່ານັ້ນ ແຕ່ພຣະເຈົ້າໄດ້ເຮັດສິ່ງອັສຈັນນີ້ຂຶ້ນເພື່ອສໍາແດງໃຫ້ມະນຸດຮູ້ວ່າພຣະອົງຊົງເປັນພຣະເຈົ້າ.

ໃນເວລານັ້ນເປັນຊ່ວງເວລາຂອງທ່ານກາຍຊາໂອຄຸໂຕເປັນຜູ້ປົກຄອງບ້ານເມືອງ ຈຶ່ງມີການຈົດທະບຽນສໍາມະໂນຄົວເພື່ອຈັດຕຽມເກນທະຫານ ແລະເພື່ອເກັບຊ່ວຍພາສີອາກອນ ຈຶ່ງມີຄໍາສັ່ງໃຫ້ປະຊາຊົນທັງໝົດກັບຄືນໄປລົງທະບຽນ

ຕາມບ້ານເກີດເມືອງນອນຂອງໃຜລາວ *"ຄົນທັງປວງຕ່າງຄົນກໍຕ່າງໄປຂຶ້ນທະບຽນຍັງເມືອງຂອງຕົນ "* (ຂໍ້ 3). ຝ່າຍໂຢເຊບກໍນຳມາຣີອາຜູ້ເປັນຄູ່ໝັ້ນຂອງຕົນເດີນທາງປະມານ 80 ໄມ ໄປຍັງບ້ານເດີມຂອງຕົນ, ໂຢເຊບເປັນຄົນດີ ມີສິນທັມ ແລະຍັງເປັນຄົນເຊື່ອຟັງກົດໝາຍບ້ານເມື່ອງ ຄືເພິ່ນໄດ້ເຮັດຕາມຄຳສັ່ງຂອງເຈົ້າໜ້າທີ່ປົກຄອງບ້ານເມືອງ ແລະເພິ່ນຍັງເປັນຜູ້ນັບຖືພຣະເຈົ້າຢ່າງຖືກຕ້ອງ ເພິ່ນຈຶ່ງຍອມຮັບເອົານາງມາຣີອາໃນຂະນະທີ່ລາວມີທ້ອງໂດຍຕົນ ເອງບໍ່ເຄີຍສົມສູ່ກັບນາງ (ມັດທາຍ 1:18-19). ເມື່ອເຖິງເບດເລເຮັມແຂວງຢູດາຍແລ້ວໂຢເຊບກໍຊອກຫາທີ່ພັກຕາມໂຮງແຮມ ແຕ່ໂຮງແຮມແຕ່ລະແຫ່ງນັ້ນເຕັມໝົດແລ້ວ ເພາະຄົນທັງຫລາຍກໍພາກັນມາລົງທະບຽນຕາມບ້ານເກີດຂອງ ເຂົາ. ເມື່ອນັ້ນນາງມາຣີອາຈວນຈະຄອດລູກ ໂຢເຊບຈຳເປັນຕ້ອງພານາງໄປເກີດລູກຢູ່ທີ່ຄອກສັດ *ເມື່ອເຂົາທັງສອງຍັງຢູ່ທີ່ນັ້ນກໍເຖິງເວລາທີ່ມາຣີອາຈະປະສູດບຸດ. ນາງຈຶ່ງໄດ້ປະສູດບຸດຜູ້ກົກ ເອົາຜ້າອ້ອມພັນແລະວາງໄວ້ໃນຮາງຫຍ້າ ເພາະບໍ່ມີບ່ອນຫວ່າງສຳລັບເຂົາໃນໂຮງແຮມ. "* (ຂໍ້ 6-7). ມາຣີອາເກີດລູກຜູ້ກົກແລະລູກນ້ອຍນັ້ນນອນໄວ້ທີ່ຮາງຫຍ້າແລ້ວຕໍ່ມານາງກໍມີລູກຕາມທັມມະຊາດອີກຫລາຍຄົນ.

ໃນພຣະທັມຕອນນີ້ເຮົາເຫັນວ່າໂຢເຊບໄດ້ເຊື່ອຟັງແລະຮັກຄູ່ໝັ້ນດັ່ງນີ້; 1. ເພິ່ນເຊື່ອຟັງພຣະເຈົ້າ. 2. ເພິ່ນເຊື່ອຟັງເຈົ້າໜ້າທີ່ບ້ານເມືອງ. 3. ເບິ່ງແຍງຄູ່ຮັກຢ່າງເຕັມທີ່, ດ້ວຍສິ່ງເຫລົ່ານີ້ເຮົາຈຶ່ງເຊື່ອວ່າພຣະເຈົ້າຕ້ອງພໍໃຈໃນໂຢເຊບ, ເຮົາທັງຫລາຍຄວນຮຽນເອົາແບບຢ່າງການເຊື່ອຟັງຂອງໂຢເຊບເພື່ອສລອງວັນຄຣິສມາສຂອງເຮົາຄື ໃຫ້ເຮົາເຊື່ອຟັງພຣະເຈົ້າ, ນັບຖືກົດໝາຍ ແລະຮັກຄອບຄົວຄືໂຢເຊບ ແລ້ວພຣະເຈົ້າຕ້ອງພໍໃຈໃນເຮົາແນ່ນອນ.

**<u>ເທວະດາສັຣເສີນພຣະເຈົ້າ</u>** (2:8-15)

ໃນແຖບທີ່ພຣະກຸມມານເຢຊູຊົງປະສູດນັ້ນມີພວກລ້ຽງແກະທີ່ນອນເຝົ້າແກະຂອງເຈົ້ານາຍຂອງເຂົາໃນກາງຄືນ, ພວກເຂົາໄດ້ເຝົ້າແກະເພື່ອປົກປ້ອງບໍ່ໃຫ້ສັດປ່າຫລືໝາໄນມາກັດສັດຂອງເຂົາ, ການລ້ຽງແກະເປັນຝູງສ່ວນຫລາຍຈະເປັນແກະຂອງນາຍຈ້າງທີ່ໄດ້ຈ້າງຄົນພວກນີ້ເປັນຄົນລ້ຽງ ເພາະການລ້ຽງແກະນີ້ຈຳເປັນຈະຕ້ອງເຝົ້າທັງກາງຄືນອີກດ້ວຍເພາະວ່າກາງຄືນນັ້ນອາດຈະມີພວກສັດປ່າແລະໝາໄນມາກັດແກະກໍໄດ້, ລາງຄົນໃນກຸ່ມນີ້ກໍໄດ້ລ້ຽງແກະເປັນອາຊີບຄືກັນ. ໃນຂະນະທີ່ເຂົາກຳລັງນອນເຝົ້າແກະຂອງເຂົາຢູ່ນັ້ນທູດຂອງພຣະເຈົ້າທີ່ພວກເຮົາຮ້ອງເພິ່ນວ່າເທວະດາໄດ້ປາກົດຕົວສົ່ງຂ່າວແກ່ພວກລ້ຽງແກະເຫລົ່ານັ້ນວ່າ *"ຢ່າຊູ່ຢ້ານ ເພາະນີ້ແຫລະ, ເຮົານຳເອົາຂ່າວດີມາປະກາດໃຫ້ພວກເຈົ້າຮູ້ ຊຶ່ງເປັນທີ່ຊື່ນຊົມຍິນດີອັນໃຫຍ່ແກ່ພົນລະເມືອງທັງໝົດ. ເພາະວ່າໃນວັນນີ້ພຣະຜູ້ຊົງໂຜດໃຫ້ພົ້ນອົງໜຶ່ງຄືພຣະຄຣິດເຈົ້າມາບັງເກີດໃນເມືອງດາວິດສຳລັບເຈົ້າທັງຫລາຍ. ອັນນີ້ຈະເປັນໝາຍສຳຄັນແກ່ເຈົ້າທັງຫລາຍຄືພວກເຈົ້າຈະໄດ້ພົບພຣະກຸມມານຕົນໜຶ່ງຜ້າອ້ອມພັນນອນຢູ່ໃນຮາງຫຍ້າ."* (ຂໍ້ 20-12).

ເທວະດາເລີ້ມຕົ້ນດ້ວຍຄຳວ່າ ຢ່າຊູ່ຢ້ານ ດ້ວຍວ່າເຂົາເຫັນ ແສງຮຸ່ງຈົນເຫລື້ອມຕາສ່ອງຮອບຕົວເຂົາຈຶ່ງເຮັດໃຫ້ເຂົາກໍມີຄວາມຢ້ານຕໍ່ແສງນັ້ນ. ເທວະດາມາບອກເຂົາວ່າເຮົານຳຂ່າວດີມາປະກາດໃຫ້ພວກເຈົ້າຮູ້ ແລະຍັງເປັນທີ່ຊົມຊື່ນຍິນດີແກ່ພົລເມືອງທັງໝົດອີກ *"ຢ່າຊູ່ຢ້ານ ເພາະນີ້ແຫລະ, ເຮົານຳເອົາຂ່າວດີມາປະກາດໃຫ້ພວກເຈົ້າຮູ້ ຊຶ່ງເປັນທີ່ຊື່ນຊົມຍິນດີອັນໃຫຍ່ແກ່ພົລະເມືອງທັງໝົດ."* ເມື່ອເທວະດາຕົນນັ້ນໄດ້ບອກຂ່າວດີແລ້ວໃນທັນໃດນັ້ນກໍມີກອງທັບໝູ່ໃຫຍ່ຂອງເທວະດາ ຄາດວ່າແມ່ນຝູງນັກຮ້ອງນັກດົນຕຣີຂອງເມືອງສວັນພາກັນລົງມາຢູ່ກັບເທວະດາຕົນນັ້ນ ເພື່ອຮ່ວມກັນສັຣເສີນດ້ວຍສຽງດັ່ງວ່າ; *"ພຣະຣັສມີຈົ່ງມີແດ່ພຣະເຈົ້າໃນທີ່ສູງສຸດແລະ ທີ່ແຜ່ນດິນໂລກຈົ່ງມີສັນຕິສຸກແກ່ມະນຸດທັງປວງທີ່ພຣະອົງຊົງຊອບພຣະທັຍນັ້ນ."* (ຂໍ້ 14).

**<u>ພວກລ້ຽງແກະສັຣເສີນ</u>** ( 2:16-20 )

ພວກລ້ຽງແກະພວກນີ້ໄດ້ລ້ຽງແກະທີ່ທົ່ງກວ້າງຊຶ່ງມີເຂດແດນຣະຫວ່າງເບດເລເຮັມແລະເຢຣູຊາເລັມ, ພວກເຂົາເປັນຄົນອົດທົນຕໍ່ອາກາດຮ້ອນຫລືໜາວພ້ອມທັງເປັນຜູ້ກ້າຫານຕໍ່ສູ້ກັບສັດຮ້າຍທີ່ຈະທໍາລາຍຝູງແກະ. ຕົວຢ່າງທີ່ເຮົາຮູ້ກັນດີແມ່ນກະສັດດາວິດ, ເວລາຍັງເປັນເດັກຢູ່ນັ້ນເພິ່ນເປັນຄົນລ້ຽງແກະ ເພິ່ນໄດ້ເຝົ້າຮັກສາແກະແລະໄດ້ຂ້າໝີ, ຂ້າສິງທີ່ມາລັກກອນແກະຂອງເພິ່ນ (1 ຊາມູເອນ 17:34-35). ພວກລ້ຽງແກະທີ່ລ້ຽງແກະໃນແຖບນີ້ໄດ້ໃຊ້ຊີວິດເປັນເດີມພັນສໍາລັບການລ້ຽງຂອງເຂົາ, ແຕ່ເມື່ອເຂົາຮັບຂ່າວດີຈາກເທວະດາແລ້ວເຂົາກໍພາກັນປະຝູງແກະໄວ້ ແລ້ວຟ້າວພາກັນໄປນະມັສການພຣະກຸມມານນ້ອຍ *"ເຂົາກໍຮີບໄປແລ້ວພົບມາຣີອາກັບໂຢເຊບ ແລະເຫັນພຣະກຸມມານນັ້ນນອນຢູ່ໃນຮາງຫຍ້າ* (ຂໍ້ 16).

ການປະຝູງແກະໄວ້ຕາມລໍາພັງເປັນການຕັດສິນໃຈອັນໃຫຍ່ຫລວງຂອງພວກເຂົາ ທັງນີ້ກໍເພາະວ່າໃນຂະນະທີ່ເຂົາໄປຂາບໄຫວ້ພຣະເຢຊູນັ້ນອາດມີສັດຮ້າຍມາກັດຝູງແກະຂອງເຂົາກໍເປັນໄດ້ ແຕ່ພວກເຂົາກໍບໍ່ໄດ້ລໍຊ້າຫລັງຈາກໄດ້ຮັບຂ່າວດີຈາກເທວະດາຜູ້ເປັນທູດຂອງພຣະເຈົ້າລົງມາສົ່ງຂ່າວ ແລ້ວພວກເຂົາກໍຮີບຟ້າວໄປຊອກຄົ້ນຫາພຣະກຸມມານ. ມີນັກເທດຜູ້ນຶ່ງເທສນາວ່າ "ໃນຂະນະທີ່ເຂົາໄປຂາບໄຫວ້ພຣະກຸມມານນັ້ນບໍ່ມີເຫດຮ້າຍອັນໃດເກີດຂຶ້ນກັບຝູງແກະດ້ວຍວ່າເທວະດາຕົນນັ້ນເປັນຜູ້ເຝົ້າຮັກສາແກະຂອງເຂົາ.

ບັນຫາທີສອງທີ່ພວກລ້ຽງແກະມີຄືເຂົາບໍ່ຮູ້ວ່າພຣະເຢຊູຊົງບັງເກີດທີ່ເຮືອນຫລັງໃດ ຫລືຄອກສັດຄອກໃດ, ຫາກເຮົາສົມທຽບກັບພວກໂຫຣາຈານທີ່ເດີນທາງຈາກທິດຕາເວັນອອກມານະມັສການພຣະເຢຊູນັ້ນ ແມ່ນດາວພິເສດເປັນຜູ້ນໍາທາງພວກໂຫຣາຈານມາຈົນເຖິງບ່ອນທີ່ພຣະກຸມມານຊົງປະສູດ (ມັດທາຍ 2). ສໍາລັບພວກລ້ຽງແກະບໍ່ມີສິ່ງໃດນໍາພາທາງເລີຽ ພຽງແຕ່ໄດ້ຮັບການບອກເລົ່າຈາກເທວະດາເທົ່ານັ້ນເຂົາກໍພາກັນໄປຊອກຄົ້ນຫາຈົນພົບ, ເມື່ອພົບເຫັນແລ້ວເຂົາກໍຄໍານຶງເຖິງຄໍາບອກເລົ່າຂອງເທວະດາໄດ້ບອກກ່າວນັ້ນ ດ້ວຍວ່າເຂົາໄດ້ພົບເຫັນທຸກຢ່າງຕາມຄໍາເທວະດາບອກເລົ່ານັ້ນແທ້.

*ເມື່ອເຂົາໄດ້ເຫັນກໍເລົ່າເລື່ອງທີ່ເຂົາໄດ້ຍິນເຖິງພຣະກຸມມານນັ້ນ.* (ຂໍ້ 17). ລູກາໝາຈະບັນທຶກຂໍ້ 17 ຫລັງຈາກຂໍ້ 20 ເພາະວ່າເຣື່ອງທີ່ພວກລ້ຽງແກະເລົ່າໃຫ້ຜູ້ອື່ນຟັງນັ້ນແມ່ນຫລັງຈາກເຂົາໄດ້ເຫັນພຣະກຸມມານດ້ວຍຕາເຂົາ ແລະໄດ້ຍິນຄໍາບອກກ່າວຈາກເທວະດາດ້ວຍຫູສອງຂ້າງຂອງເຂົາ . ໃນ Disciple Commentary ເວົ້າໃນຕອນນີ້ວ່າຫລັງຈາກພວກລ້ຽງແກະໄດ້ພົບເຫັນແລະນະມັສການພຣະເຢຊູແລ້ວພວກເຂົາ ກໍນໍາເອົາເຣື່ອງທີ່ເຂົາພົບເຫັນໄປບອກຄົນອື່ນຕໍ່ໆກັນໄປ. <u>ຂໍ້ສັງເກດ:</u> ລູກາບັນທຶກສອງປະເດັນຄື; 1. <u>*ເຂົາໄດ້ເຫັນ*</u> ໝາຍຄວາມວ່າ ເຂົາໄດ້ເຫັນພຣະກຸມມານນອນທີ່ຮາງຫຍ້າດ້ວຍຕາຂອງເຂົາ. 2. <u>*ເຂົາໄດ້ຍິນ*</u> ໝາຍຄວາມວ່າ ໄດ້ຍິນຂ່າວດີນີ້ຈາກເທວະດາຜູ້ຮັບໃຊ້ ຫລືທູດຂອງພຣະເຈົ້າລົງມາບອກຂ່າວແກ່ເຂົາ. ດັ່ງນັ້ນເມື່ອເຂົາໄດ້ເຫັນແລະໄດ້ຍິນເຂົາກໍອອກໄປບອກຜູ້ອື່ນຫລືເປັນພະຍານໃນສິ່ງທີ່ເຂົາໄດ້ເຫັນແລະໄດ້ຍິນ. ແລະເມື່ອເຂົາໄດ້ບອກຂ່າວດີນີ້ແລ້ວຈຶ່ງກັບໄປຍັງທົ່ງຫຍ້າບ່ອນທີ່ເຂົາລ້ຽງແກະເໝືອນເດີມ ແລ້ວສັຣເສີນຂອບພຣະຄຸນພຣະເຈົ້າທີ່ພວກເຂົາໄດ້ເຫັນແລະໄດ້ຍິນເຣື່ອງການບັງເກີດຂອງພຣະເຢຊູ *"ພວກລ້ຽງແກະຈຶ່ງກັບໄປຍ້ອງຍໍສັຣເສີນພຣະເຈົ້າ ເພາະເຫດການທັງປວງທີ່ເຂົາໄດ້ຍິນແລະໄດ້ເຫັນ ຕາມທີ່ໄດ້ບອກໄວ້ກັບເຂົານັ້ນ.*" (ຂໍ້ 20). ດັ່ງນັ້ນພວກລ້ຽງແກະຈຶ່ງໄດ້ຊື່ວ່າຜູ້ປະກາດຂ່າວປະເສີດກຸ່ມແຣກ, ສິ່ງທີ່ເຮົາຄວນຮຽນຈາກຊີວິດພວກລ້ຽງແກະຕອນນີ້ມີສອງປະເດັນຄື; 1. ອອກໄປບອກຄົນອື່ນ ໃນສິ່ງທີ່ພວກເຮົາໄດ້ເຫັນພຣະເຢຊູທາງເຊື່ອແລະບອກຜູ້ອື່ນໃນສິ່ງທີ່ເຮົາໄດ້ຍິນຂ່າວປະເສີດຜ່ານທ່າງພຣະຄັມພີ, ຜ່ານທາງຜູ້ປະກາດແລະອື່ນໆ. 2. ຫລັງຈາກບອກແລ້ວຈຶ່ງກັບຄືນໄປສູ່ການງານປະຈໍາວັນຂອງພວກເຮົາຄືພວກລ້ຽງແກະໄດ້ເຮັດນັ້ນ.

<u>**ຄໍາຖາມ:**</u>

1. ພຣະເຈົ້າສຳແດງຣິດອຳນາດເໜືອທັມຊາດຂອງການຕັ້ງຄັນຂອງນາງມາຣີອາແນວໃດ?

2. ໂຢເຊບເປັນຄົນເຊື່ອຟັງພຣະເຈົ້າ ແລະນັບຖືກົດໝາຍຢ່າງໃດ?

3. ເປັນຫຍັງໂຢເຊບຈຶ່ງພາຄູ່ໝັ້ນໄປລົງທະບຽນທີ່ບ້ານເດີມຂອງເພິ່ນ ເພາະວ່ານາງມາຣີອາບໍ່ແມ່ນຄົນບ້ານນັ້ນ?

4. ເມື່ອໄປເຖິງບ້ານເດີມແລ້ວໂຢເຊບພາຄູ່ໝັ້ນຂອງຕົນພັກຢູ່ໃສ? ເປັນຫຍັງ?

5. ພວກໃດລົງມາຈາກສວັນ ເພື່ອຮ້ອງສັຣເສີນພຣະເຈົ້າ?

6. ເປັນຫຍັງພຣະເຢຊູຈຶ່ງເລືອກເກີດທີ່ຮາງຫຍ້າ?

7. ແມ່ນໃຜເປັນຜູ້ຢ້ຽມຢາມພຣະກຸມມານກ່ອນໝູ່? ເຂົາຮູ້ຂ່າວນີ້ແນວໃດ?

8. ເມື່ອເຂົາໄດ້ເຫັນແລະໄດ້ຍິນແລ້ວ ເຂົາເຮັດຫຍັງແດ່?

9. ທ່ານໄດ້ຮຽນຫຍັງຈາກຊີວິດໂຢເຊບ? ຈາກຊີວິດພວກລ້ຽງແກະ?

*ທວ*